**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

**ຄະນະຮັບຜິດຊອບການພັດທະນາລະບົບການຢັ້ງຢືນປ່າໄມ້ແຫ່ງຊາດ ເລກທີ 5002/ກປ LFCS/PEFC ST xxxx:2023**

---

(ປັບປຸງ-**ສຸດທ້າຍ** 4 ກໍລະກົດ 2025)

# ມາດຕະຖານ ການຄຸ້ມຄອງປ່າໄມ້ ແບບຍືນຍົງ

# SUSTAINABLE FOREST MANAGEMENT STANDARD


**ຫ້ອງການຢັ້ງຢືນປ່າໄມ້ແຫ່ງຊາດ**

**ທີ່ຢູ່: ບ້ານ...ເມືອງ... ນະຄອນຫຼວງວຽງຈັນ, ສປປ ລາວ**

**ຂໍ້ມູນຕິດຕໍ່ພົວພັນ: ເບີໂທ: +856……….**

**ອີເມລ:**

**ເວັບໄຊ໌:**


LFCS/PEFC ST 1003:2025

**ສະຫງວນລິຂະສິດ**

© LFCS 2023

ເອກະສານ ສະບັບນີ້ ແມ່ນ ໄດ້ຮັບການສະຫງວນລິຂະສິດ ໂດຍແຜນງານການຢັ້ງຢືນປ່າໄມ້ແຫ່ງຊາດ (Laos Forest Certification Scheme "LFCS"). ເອກະສານດັ່ງກ່າວ ສາມາດເຜີຍແຜ່ໄດ້ ໂດຍບໍ່ເສຍຄ່າ ແລະ ຊອກຫາໄດ້ຈາກ ເວັບໄຊ ຫຼື ຕິດຕໍ່ໂດຍກົງກັບ ຫ້ອງການຢັ້ງຢືນປ່າໄມ້ແຫ່ງຊາດ.

ຫ້າມປ່ຽນແປງ ຫຼື ແກ້ໄຂສ່ວນໃດສ່ວນໜຶ່ງ ຂອງເອກະສານທີ່ສະຫງວນລິຂະສິດ; ການຜະລິດຄືນໃໝ່ ຫຼື ສຳເນົາໃນຮູບແບບຕ່າງໆ ຫຼື ດ້ວຍວິທີການໃດໜຶ່ງ ເພື່ອຈຸດປະສົງ ທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກສູນຢັ້ງຢືນປ່າໄມ້ແຫ່ງຊາດ

| | |
|---|---|
| ຊື່ເອກະສານ: | ມາດຕະຖານການຄຸ້ມຄອງປ່າໄມ້ ແບບຍືນຍົງ |
| ລະຫັດເອກະສານ: | LFCS/PEFC ST 1003:2025 |
| **ອະນຸມັດໂດຍ:** | **ຫ້ອງການຢັ້ງຢືນປ່າໄມ້ແຫ່ງຊາດ** |
| ວັນທີອອກອະນຸຍາດ: | …../……2025 |
| ວັນທີນຳໃຊ້:<br>(ວັນທີ່ມີຜົນບັງຄັບໃຊ້) | …../……2025 |
| ວັນທີປັບປຸງ ຄັ້ງທີ 1 | …../……2026 |

## ສາລະບານ

I. ພາກສະເໜີ ........................................................................................................ 1
II. ເອກະສານອ້າງອີງທາງດ້ານນິຕິກຳ ........................................................................................ 1
III. ຂອບເຂດ ........................................................................................................ 1
IV. ຂໍ້ກຳນົດການຄຸ້ມຄອງປ່າໄມ້ແບບຍືນຍົງ ........................................................................................ 1
ເອກະສານຊ້ອນທ້າຍ 1: ການຄຸ້ມຄອງເຄື່ອງປ່າຂອງດົງແບບຍືນຍົງ ........................................................ 18
ເອກະສານຊ້ອນທ້າຍ 2: ຄຳສັບ-ນິຍາມ ແລະ ຂໍ້ແນະນຳແບບຄຳກິລິຍາ ................................................ 29

## ຄຳສັບຫຍໍ້ (**Abbreviations**)

| | | |
|---|---|---|
| FC | Forest Certification | ການຢັ້ງຢືນປ່າໄມ້ |
| SFO | Small forest owner | ເຈົ້າຂອງປ່າໄມ້ຂະໜາດນ້ອຍ |
| FSC | Forest Stewardship Council | ສະພາບໍລິຫານປ່າໄມ້ |
| AC | Agricultural Cooperatives | ສະຫະກອນກະສິກຳ |
| FS | Forestry Sciences | ວິທະຍາສາດປ່າໄມ້ |
| ARD | Agriculture and Rural Development | ກະສິກຳ ແລະ ພັດທະນາຊົນນະບົດ |
| PEFC | Program for the Endorsement of Forest Certification | ແຜນງານຮັບຮອງການຢັ້ງຢືນປ່າໄມ້ |
| FPM | Forest protection and management | ການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ |
| DoF | Department of Forestry | ກົມປ່າໄມ້ |
| NSC | National Standard Council | ສະພາມາດຕະຖານແຫ່ງຊາດ |
| CTC | Central Technical Committee | ຄະນະກຳມະການເຕັກນິກແຫ່ງຊາດ |
| LFCC | Laos forest certification center | ຫ້ອງການຢັ້ງຢືນປ່າໄມ້ແຫ່ງຊາດ |
| LFCS | Laos Forest Certification Schem | ແຜນງານການຢັ້ງຢືນປ່າໄມ້ລາວ |
| LTLAS | Laos's timber legality assurance system | ລະບົບຄ້ຳປະກັນໄມ້ທີ່ຖືກກົດໝາຍຂອງ  ສປປ ລາວ |

# ຄຳນຳ

ປ່າໄມ້ແມ່ນຊັບພະຍາກອນທຳມະຊາດອັນລ້ຳຄ່າຂອງ ສປປ ລາວ ມີບົດບາດສຳຄັນຫຼາຍໃນການສ້າງຄວາມສົມດຸນຂອງລະບົບນິເວດ, ອະນຸລັກຊີວະນາໆພັນ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຢ່າງມະຫາສານ. ຫ້ອງການຢັ້ງຢືນປ່າໄມ້ຂອງລາວ (LFCO) ມີຄວາມຮັບຮູ້ ແລະ ເຂົ້າໃຈແຈ້ງຕໍ່ກັບບົດບາດ ແລະ ຄວາມສາຄັນຂອງຊັບພະຍາກອນປ່າໄມ້ ຈຶ່ງໄດ້ພັດທະນາມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ (LFCS/PEFC ST 1003:2025). ເອກະສານສະບັບນີ້ ແມ່ນເປັນບາດກ້າວທີ່ສຳຄັນໃນການສົ່ງເສີມການປະຕິບັດປ່າໄມ້ທີ່ມີຄວາມຮັບຜິດຊອບ ແລະ ຮັບປະກັນຄວາມອຸດົມສົມບູນ ແລະ ຜົນຜະລິດຂອງປ່າໄມ້ໃນໄລຍະຍາວຂອງ ສປປ ລາວ.

ມາດຕະຖານນີ້ ໄດ້ຖືກສ້າງຂຶ້ນຢ່າງຮັດກຸມ ເພື່ອວາງຂອບເຂດການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຢັ້ງຢືນປ່າໄມ້ພາຍໃນ ສປປ ລາວ. ມາດຕະຖານນີ້ ໃຫ້ຂໍ້ກຳນົດທີ່ຈະແຈ້ງ ແລະ ສາມາດປະຕິບັດໄດ້ ຊຶ່ງເຈົ້າຂອງປ່າໄມ້ຕ້ອງປະຕິບັດຕາມຢ່າງເຂັ້ມງວດ ເພື່ອເຮັດໃຫ້ປ່າໄມ້ຂອງເຂົາເຈົ້າໄດ້ຮັບການຢັ້ງຢືນພາຍໃຕ້ແຜນງານການຢັ້ງຢືນປ່າໄມ້ຂອງ ສປປ ລາວ (LFCS). ມາດຕະຖານນີ້ ຖືເປັນພື້ນຖານທີ່ເຂັ້ມແຂງສຳລັບອົງການຢັ້ງຢືນ (Certification Bodies) ເພື່ອປະເມີນ ແລະ ຢັ້ງຢືນປ່າໄມ້ຕາມຫຼັກການຂອງແຜນງານການຢັ້ງຢືນປ່າໄມ້ຂອງ ສປປ ລາວ ແລະ ຂໍ້ກຳນົດຂອງການຄຸ້ມຄອງປ່າໄມ້ແບບຍືນຍົງ.

ຂະບວນການພັດທະນາ ສຳລັບຫຼັກການ ແລະ ຂໍ້ກຳນົດເຫຼົ່ານີ້ ໄດ້ປະຕິບັດໄປຕາມຫຼັກການຄວາມເປັນອິດສະຫຼະ ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຢ່າງໂປ່ງໃສ ໂດຍໄດ້ຮັບການຍິນຍອມເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ/ເຫັນດີເປັນເອກະພາບ ດ້ວຍຄວາມສະໝັກໃຈ ແລະ ໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (**FPIC**). ວິທີການທີ່ໃຊ້ໃນການພັດທະນາມາດຕະຖານນີ້ແມ່ນສອດຄ່ອງກັບຂໍ້ກຳນົດຂອງ PEFC (PEFC ST 1001: 2010), ໃນຂະນະທີ່ຂະບວນການປະກາດໃຊ້ ແມ່ນປະຕິບັດຕາມກົດໝາຍ ແລະ ກົດລະບຽບຂອງ ສປປ ລາວ ຕາມການອະນຸມັດຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ.

ມາດຕະຖານນີ້ ໄດ້ຮັບການພັດທະນາຂຶ້ນ ໂດຍອີງໃສ່ກົດໝາຍ ແລະ ກົດລະບຽບການຕ່າງໆຂອງ ສປປ ລາວ ລວມທັງການອ້າງອີງເຖິງມາດຕະຖານສາກົນເຊັ່ນ: ມາດຕະຖານການຄຸ້ມຄອງປ່າ ໄມ້ FSC ແລະ PEFC. ມາດຕະຖານນີ້ ກວມເອົາຈຸດສຳຄັນຂອງການຄຸ້ມຄອງປ່າໄມ້ແບບຍືນຍົງ ປະກອບມີ 7 ຫຼັກ ການພື້ນຖານ, 34 ເງື່ອນໄຂ ແລະ 122 ຕົວຊີ້ວັດ ຊຶ່ງເຈົ້າຂອງປ່າໄມ້ ບໍ່ພຽງແຕ່ຈະມີສ່ວນຮ່ວມໃນການຄຸ້ມຄອງຊັບ ພະຍາກອນປ່າໄມ້ອັນມີຄ່າຢ່າງຍືນຍົງເທົ່ານັ້ນ ແຕ່ຍັງສາມາດເຂົ້າເຖິງຕະຫຼາດສາກົນທີ່ນັບມື້ນັບມີຄວາມຕ້ອງການຜະລິດ ຕະພັນທີ່ໄດ້ຮັບການຢັ້ງຢືນແບບຍືນຍົງ. ມາດ ຕະຖານນີ້ ສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຮ່ວມກັນຂອງ ສປປ ລາວ ຕໍ່ກັບການເພີ່ມຄວາມປົກຫຸ້ມປ່າໄມ້ໃນອະນາຄົດ. ປະຊາຊົນຮັ່ງມີຜາສຸກ ແລະ ສິ່ງແວດລ້ອມໄດ້ຮັບການປົກປ້ອງເພື່ອຄົນຮຸ່ນໃໝ່.

ກົມປ່າໄມ້ ຂໍສະແດງຄວາມຂອບໃຈຢ່າງຈິງໃຈມາຍັງບັນດາພາກສ່ວນກ່ຽວຂ້ອງທີ່ໄດ້ອຸທິດເວລາ ແລະ ສະຕິປັນຍາຂອງຕົນເຂົ້າໃນການພັດທະນາເອກະສານທີ່ສຳຄັນນີ້. ຈິດໃຈຂອງການຮ່ວມມືຂອງທ່ານເປັນສິ່ງຈຳເປັນໃນການວາງມາດຕະຖານທີ່ເຂັ້ມງວດ ແລະ ກ່ຽວຂ້ອງກັບສະພາບການສະເພາະຂອງ ສປປ ລາວ.

**ຫົວໜ້າກົມປ່າໄມ້**

## I. ພາກສະເໜີ

ມາດຕະຖານ ການຄຸ້ມຄອງປ່າໄມ້ ແບບຍືນຍົງ, ໄດ້ຮັບການ ພັດທະນາ ແລະ ອອກອະນຸຍາດ ໂດຍສູນຢັ້ງຢືນປ່າໄມ້ແຫ່ງຊາດ (Laos Forest Certification Centre “LFCC”), ແມ່ນເພື່ອຊຸກຍູ້ການຄຸ້ມຄອງປ່າໄມ້ ແບບຍືນຍົງ ແລະ ການຢັ້ງຢືນປ່າໄມ້ຢູ່ໃນ ສປປ ລາວ. ມາດຕະຖານ ສະບັບນີ້ ໄດ້ລະບຸການຄຸ້ມຄອງປ່າໄມ້ ແບບຍືນຍົງ ເຊິ່ງເຈົ້າຂອງປ່າໄມ້ ຕ້ອງນຳໄປປະຕິບັດຢ່າງເຂັ້ມງວດ ເພື່ອໃຫ້ໄດ້ຮັບການຢັ້ງຢືນປ່າໄມ້ພາຍໃຕ້ແຜນງານການຢັ້ງຢືນປ່າໄມ້ແຫ່ງຊາດ (Laos Forest Certification Scheme “LFCS”). ມາດຕະຖານດັ່ງກ່າວຍັງເປັນພື້ນຖານ ໃຫ້ແກ່ອົງການຢັ້ງຢືນ (Certification Bodies “CBs”) ເພື່ອນຳໃຊ້ໃນການປະເມີນ ແລະ ອອກໃບຢັ້ງຢືນ ປ່າໄມ້ ຕາມ ຫຼັກການ ແລະ ຂໍ້ກຳນົດ ການຄຸ້ມຄອງໄມ້ ແບບຍືນຍົງ LFCS.

ຂະບວນການພັດທະນາ ຫຼັກການ ແລະ ຂໍ້ກຳນົດ ການຄຸ້ມຄອງປ່າໄມ້ ແບບຍືນຍົງ ເປັນໄປຕາມຫຼັກການຄວາມເປັນອິດສະຫຼະ ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຢ່າງໂປ່ງໃສ ໂດຍໄດ້ຮັບການຍິນຍອມເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ/ເຫັນດີເປັນເອກະພາບ ດ້ວຍຄວາມສະໝັກໃຈ ແລະ ໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (**FPIC**). ຂັ້ນຕອນການພັດທະນາ ຫຼັກການ ແລະ ຂໍ້ກຳນົດ ແມ່ນ ປະຕິບັດຕາມຂໍ້ກຳນົດຂອງ PEFC (PEFC ST 1001: 2010) ໃນຂະນະທີ່ຂະບວນການປະກາດໃຊ້ ແມ່ນ ປະຕິບັດຕາມ ກົດໝາຍ ແລະ ລະບຽບການຂອງ ສປປ ລາວ ທີ່ອະນຸມັດໂດຍກະຊວງກະສິກຳ ແລະ ສິ່ງແວດລ້ອມ. ຫຼັກການ ແລະ ຂໍ້ກຳນົດ ໄດ້ຖືກພັດທະນາໂດຍຜ່ານຂັ້ນຕອນຕົ້ນຕໍ ດັ່ງຕໍ່ໄປນີ້:

ຫຼັກການ, ຮັບປະກັນການຄຸ້ມຄອງປ່າໄມ້ ແບບຍືນຍົງ ຢ່າງລວມສູນ ໃນຂອບເຂດທົ່ວປະເທດ, ສອດຄ່ອງກັບກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ), ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019; ດຳລັດ ວ່າດ້ວຍການຄຸ້ມຄອງປ່າຜະລິດແບບຍືນຍົງ, ສະບັບເລກທີ 59/ນຍ, ລົງວັນທີ 2 ພຶດສະພາ 2002; ປະຈຸບັນ ຖືກປັບປຸງມາເປັນ ດຳລັດ ວ່າດ້ວຍປ່າຜະລິດ, ສະບັບເລກທີ 02/ລບ, ລົງວັນທີ 4 ມັງກອນ 2024; ດຳລັດ ວ່າດ້ວຍການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ລົງວັນທີ 20 ສິງຫາ 2019; ຄຳແນະນຳ ກ່ຽວກັບການຂຶ້ນທະບຽນປ່າໄມ້ ແລະ ຢັ້ງຢືນໄມ້ປູກ ເລກທີ 2492/ກປ ລົງວັນທີ 23 ທັນວາ 2020; ຄຳແນະນຳ ກ່ຽວກັບການຢັ້ງຢືນ ແລະ ການຕັດຕົ້ນໄມ້ທຳມະຊາດໄມ້ປູກ ແລະ ໄມ້ໃຫ້ໝາກ ທີ່ມີໃນທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ສະບັບເລກທີ 3684/ກປ, ລົງວັນທີ 16 ສິງຫາ 2022; ມາດຕະຖານ ການຄຸ້ມຄອງຈັດສັນປ່າໄມ້ຂອງ FSC, ມາດຕະຖານການຄຸ້ມຄອງປ່າໄມ້ຂອງ PEFC, ຂໍ້ກຳນົດ ຂອງຄຳນິຍາມໄມ້ຖືກຕ້ອງ (TLDs) ແລະ ລະບົບການຄ້ຳປະກັນໄມ້ທີ່ຖືກຕ້ອງ (TLAS).

## II. ເອກະສານອ້າງອີງທາງດ້ານນິຕິກຳ

- **ກົດໝາຍ** ວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ເລກທີ 064/ສພຊ, ລົງວັນທີ 13 ມິຖຸນາ 2019
- **ດຳລັດ** ວ່າດ້ວຍ ປ່າຜະລິດ ສະບັບເລກທີ 02/ລບ ລົງວັນທີ 04 ມັງກອນ 2024.
- **ຂໍ້ຕົກລົງ** ຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3202/ກປ, ລົງວັນທີ 07 ກໍລະກົດ 2023 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມປ່າໄມ້
- **ຂໍ້ຕົກລົງ** ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ກອງເລຂາ ຮັບຜິດຊອບການພັດທະນາລະບົບການຢັ້ງຢືນປ່າໄມ້ແຫ່ງຊາດ ເລກທີ 5002/ກປ, ລົງວັນທີ 15 ທັນວາ 2023;
- **ຂໍ້ຕົກລົງ** ຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສູນຢັ້ງຢືນປ່າໄມ້ແຫ່ງຊາດ? (**ຍັງບໍ່ທັນມີ**);
- **ຂໍ້ຕົກລົງ** ຂອງນາຍົກລັດຖະມົນຕີ ວ່າດ້ວຍການເຫັນດີຮັບຮອງເອົາລະບົບຄຸ້ມຄອງປ່າໄມ້ ແບບຍືນຍົງ ແລະ ການຢັ້ງຢືນປ່າໄມ້ ແລະ ອະນຸມັດການຈັດຕັ້ງ ແລະ ດຳເນີນແຜນງານການຢັ້ງຢືນປ່າໄມ້ແຫ່ງຊາດ (LFCS) (ຍັງບໍ່ທັນມີ);
- **ຂໍ້ຕົກລົງ** ຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ວ່າດ້ວຍລະບຽບການຄຸ້ມຄອງປ່າໄມ້ແບບ ຍືນຍົງ ? (**ຍັງບໍ່ທັນມີ**);
- **ຂໍ້ຕົກລົງ** ຂອງກົມປ່າໄມ້ ວ່າດ້ວຍການສ້າງຕັ້ງທີມງານສັງລວມ ເພື່ອພັດທະນາຊຸດມາດຕະຖານການຄຸ້ມ ຄອງປ່າໄມ້ ແບບຍືນຍົງ ເລກທີ 5338/ກປມ ລົງວັນທີ 3 ຕຸລາ 2024.
- **ລະຫັດເອກະສານ** PEFC ST 1001: 2017- ການຕັ້ງຄ່າມາດຕະຖານ – ຂໍ້ກຳນົດ; PEFC ST 1003:2010, ຂໍ້ກຳນົດການຄຸ້ມຄອງປ່າໄມ້ແບບຍືນຍົງ.

## III. ຂອບເຂດ

ມາດຕະຖານ ການຄຸ້ມຄອງປ່າໄມ້ ແບບຍືນຍົງ ສະບັບນີ້ ກຳນົດຂອບເຂດ ດັ່ງນີ້:

1. ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານການຄຸ້ມຄອງປ່າໄມ້ ແບບຍືນຍົງ ທັງ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານປ່າໄມ້ຢູ່ໃນ ສປປ ລາວ;
2. ເປັນພື້ນຖານໃຫ້ແກ່ ໜ່ວຍງານຄຸ້ມຄອງລະບົບການຢັ້ງຢືນ ແລະ ເປັນບ່ອນອີງໃຫ້ແກ່ ໜ່ວຍງານອອກໃບຢັ້ງຢືນ ການຄຸ້ມຄອງປ່າໄມ້ ແບບຍືນຍົງ ພາຍໃຕ້ແຜນງານການຢັ້ງຢືນປ່າໄມ້ແຫ່ງຊາດ;
3. ໃຫ້ຂໍ້ກຳນົດແກ່ເຈົ້າຂອງປ່າໄມ້ ທີ່ດຳເນີນວຽກງານຄຸ້ມຄອງປ່າທຳມະຊາດ, ປ່າປູກ ແລະ ເຄື່ອງປ່າຂອງດົງ ເພື່ອຂໍ ໃບຢັ້ງຢືນ ການຄຸ້ມຄອງປ່າໄມ້ ແບບຍືນຍົງ ພາຍໃຕ້ລະບົບການຢັ້ງຢືນປ່າໄມ້ແຫ່ງຊາດ.

## IV. ຂໍ້ກຳນົດ ການຄຸ້ມຄອງປ່າໄມ້ ແບບຍືນຍົງ

| ເງື່ອນໄຂ | ຕົວຊີ້ວັດ |
|---|---|
| **ຫຼັກການ 1: ປະຕິບັດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ, ສົນທິສັນຍາ ທີ່ ສປປ ລາວ ເປັນ ພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.** | |
| 1.1. ເຈົ້າຂອງປ່າໄມ້ ຕ້ອງປະ ຕິບັດຕາມ ກົດໝາຍ ແລະ ລະບຽບການ ກ່ຽວກັບ ສິດ ນຳໃຊ້ທີ່ດິນ ແລະ ປ່າໄມ້. | 1.1.1. ຕ້ອງມີ ໃບຢັ້ງຢືນ ສິດນຳໃຊ້ທ ິ ່ດິນຢ່າງຈະແຈ້ງ ຫຼື ຂໍ້ຕົກລົງ ວ່າດ້ວຍ ການ ຈັດສັນທີ່ດິນ ຫຼື ສັນຍາ ເຊົ່າທີ່ດິນ ແລະ ປ່າໄມ້ ຫຼື ເອກະສານຢັ້ງຢືນ ທີ່ໄດ້ຮັບການ ອະນຸມັດຈາກອຳນາດການປົກຄອງທ້ອງຖິ່ນ. |
| | 1.1.2. ໃນກ ໍລະນີ ສິດຄອບຄອງນຳໃຊ້ທີ່ດິນ ແບບດັ້ງເດີມ ຫຼື ສິດນຳໃຊ້ ຕາມ ປະເພນີ, ຕ້ອງມີເອກະສານຢັ້ງຢືນທາງການ ທີ່ໄດ້ຮັບການອະນຸມັດຈາກອຳນາດການ ປົກຄອງທ້ອງຖິ່ນ ເພື່ອປ້ອງກັນບໍ່ໃຫ້ມີຂໍ້ຂັດແຍ້ງ ກ່ຽວກັບສິດນຳໃຊ້ທີ່ດິນ. |
| | 1.1.3. ຕ້ອງກຳນົດຂອບເຂດຊາຍແດນຂອງ ທີ່ດິນປ່າໄມ້ ແລະ ປ່າໄມ້ ຢູ່ໃນແຜນທີ່ ແລະ ສະຖານທີ່ຕົວຈິງ ຢ່າງຈະແຈ້ງ. |
| 1.2. ເຈົ້າຂອງປ່າໄມ້ ຕ້ອງ ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ກ່ຽວ ກັບດຳເນີນການຜະລິດ ແລະ ການຄ້າ. | 1.2.1. ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ກ່ຽວກັບ ໜ້າທີ່, ອາຊີບ, ການຜະລິດ ແລະ ທຸລະກິດ ທີ່ໄດ້ຈົດທະບຽນ. |
| | 1.2.2. ຕ້ອງມີ ໃບຢັ້ງຢືນການຊຳລະ ພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ, ໃນກໍລະນີ ທີ່ເຂົາເຈົ້າຍັງຄ້າງຊຳລະ ຕ້ອງມີແຜນການຈ່າຍແທນຄືນ. |
| | 1.2.3. ຕ້ອງເກັບຮັກສາ ບັນດາເອກະສານ ແລະ ບົດບັນທຶກ ກ່ຽວກັບກິດຈະກຳການ ເຄື່ອນໄຫວຂອງການ ຄຸ້ມຄອງ, ຜະລິດ, ແລະ ບໍລິການ ທີ່ສອດຄ່ອງກັບ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. |
| | 1.2.4. ຕ້ອງປະຕິບັດມາດຕະການຕ້ານການສໍ້ລາດບັງຫຼວງ. |
| 1.3. ເຈົ້າຂອງປ່າໄມ້ ຕ້ອງ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ ກ່ຽວຂ້ອງ ກ່ຽວກັບການຄຸ້ມ ຄອງ, ປົກປັກຮັກສາປ່າໄມ້ ແລະ ໄມ້ທ່ອນທີ່ຖືກກົດ ໝາຍ. | 1.3.1. ຕ້ອງສ້າງແຜນການຄຸ້ມຄອງປ່າໄມ້ ແບບຍືນຍົງ ຕາມຂໍ້ກຳນົດຂອງ ກົດໝາຍ ວ່າດ້ວຍປ່າໄມ້ ແລະ ບັນດາກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ. |
| | 1.3.2. ຕ້ອງ ສ ັງລວມເນື້ອໃນຕົ້ນຕໍຂອງແຜນການຄຸ້ມຄອງປ່າໄມ້ ແບບຍືນຍົງ ຢ່າງ ເປີດເຜີຍ, ແຕ່ບໍ່ໃຫ້ເປີດເຜີຍຂໍ້ມູນສ່ວນຕົວ ແລະ ທຸລະກິດ ທີ່ຕ້ອງເກັບຮັກສາເປັນ ຄວາມລັບຂອງເຈົ້າຂອງປ່າໄມ້ ແລະ ຂໍ້ມູນອື່ນໆທີ່ຕ້ອງໄດ້ເກັບຮັກສາ ເປັນຄວາມລັບ ພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ. |

| | |
|---|---|
| | 1.3.3. ຮັບປະກັນ ເນື້ອໃນແຜນການຄຸ້ມຄອງປ່າໄມແບບຍືນຍົງ ຈະຕ້ອງປະກອບດ້ວຍຂໍ້ມູນຕໍ່ໄປນີ້: ສະພາບປະຈຸບັນຂອງໜ່ວຍງານຄຸ້ມຄອງ, ຈຸດປະສົງໄລຍະຍາວ, ບໍລິມາດໄມ້ທ່ອນ ແລະ ເຄື່ອງປ່າຂອງດົງ ທີ່ອະນຸຍາດໃຫ້ຂຸດຄົ້ນ, ແຜນການດັດສົມ, ມາດຕະການ ແລະ ເຄື່ອງມືຊ່ວຍເຫຼືອໃນການຫຼຸດຜ່ອນຜົນກະທົບດ້ານລົບ ແລະ ຄວາມເສຍຫາຍຕໍ່ລະບົບນິເວດປ່າໄມ້ ພ້ອມທັງຈາເປັນຕ້ອງນໍາເອົາຄວາມກ້າວໜ້າທາງວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າໃນການວາງແຜນການຄຸ້ມຄອງ. |
| | 1.3.4. ຕ້ອງມີມາດຕະການປ້ອງກັນບັນດາກິດຈະກໍາທີ່ຕ້ອງຫ້າມໃນຂະແໜງປ່າໄມ້. |
| | 1.3.5. ຕ້ອງເຮັດວຽກຢ່າງໃກ້ຊິດກັບອໍານາດການປົກຄອງທີ່ກ່ຽວຂ້ອງ ເພື່ອກໍານົດ, ລາຍງານ, ຄວບຄຸມ ແລະ ສະກັດກັ້ນທຸກ ກິດຈະກໍາທີ່ຕ້ອງຫ້າມ ກ່ຽວກັບປ່າໄມ້. |
| | 1.3.6. ຕ້ອງປະຕິບັດລະບຽບການລ້ຽງສັດ, ປູກ, ຂຸດຄົ້ນ, ນໍາໃຊ້ ແລະ ຄ້າຂາຍສັດ ແລະ ພືດປ່າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ. |
| | 1.3.7. ຕ້ອງປະຕິບັດຕາມລະບຽບ, ຂັ້ນຕອນການຂຸດຄົ້ນ ແລະ ຄຸ້ມຄອງ ຜະລິດຕະພັນປ່າໄມ້ ທີ່ອອກໂດຍກະຊວງກະສິກໍາ ແລະ ສິ່ງແວດລ້ອມ. |
| | 1.3.8. ຕ້ອງເກັບຮັກສາໄຟລ໌ທັງໝົດ, ບົດບັນທຶກ ແລະ ບົດລາຍງານ ກິດຈະກໍາທີ່ເປັນຂໍ້ຫ້າມໃນຂະແໜງປ່າໄມ້ ຢ່າງໜ້ອຍ ຫ້າ ປີ ຜ່ານມາ. |
| 1.4. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດບັນດາສົນທິສັນຍາທີ່ ສປປ ລາວ ໄດ້ເຂົ້າເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ. | 1.4.1. ຕ້ອງເຂົ້າໃຈ ແລະ ປະຕິບັດ ບັນດາສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ເປັນຕົ້ນ: ສົນທິສັນຍາພື້ນຖານຂອງອົງການແຮງງານສາກົນ (ILO), ສັນຍາສາກົນ ກ່ຽວກັບສິດທິຊົນເຜົ່າ (ILO 169), ສົນທິສັນຍາຊີວະນາໆພັນ 1992 (CBD), ສົນທິສັນຍາ ກ່ຽວກັບມົນລະພິດທາງອິນຊີທີ່ເສື່ອມໂຊມ (POP Stockholm), ສົນທິສັນຍາ ສາກົນ ວ່າດ້ວຍການຄ້າຂາຍຊະນິດພັນພືດ ແລະ ສັດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES), ສົນທິສັນຍາ ວ່າດ້ວຍຕ້ານການກາຍ ເປັນທະເລຊາຍ (UNCCD. 1992) ແລະ ສົນທິສັນຍາອື່ນໆທີ່ກ່ຽວຂ້ອງ. |
| **ຫຼັກການທີ 2: ການພົວພັນ ກັບຊຸມຊົນ, ສິດ ຂອງຊຸມຊົນ ແລະ ຄົນທ້ອງຖິ່ນ ຫຼື ຊົນເຜົ່າ** | |
| 2.1. ເຈົ້າຂອງປ່າໄມ້ ຕ້ອງຮັບຮູ້ ແລະ ເຂົ້າໃຈ ເຖິງສິດທາງດ້ານກົດໝາຍ ແລະ ສິດ | 2.1.1. ຕ້ອງເຄົາລົບສິດການຄຸ້ມຄອງ, ນໍາໃຊ້ທີ່ດິນ ແລະ ປ່າໄມ້ ຕາມສິດທິນໍາໃຊ້ທີ່ຖືກຕ້ອງຕາມກົດໝາຍ ຫຼື ສິດຕາມຮີດຄອງປະເພນີ ຫຼື ປະເພນີຂອງຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ; ສົມທົບກັບຊຸມຊົນ, ປະຊາຊົນທ້ອງຖິ່ນ ແລະ ພາກສ່ວນກ່ຽວ |

| | |
|---|---|
| ຕາມຮີດຄອງ ປະເພນີ ຂອງ ຊຸມຊົນ ແລະ ປະຊາຊົນ ທ້ອງຖິ່ນຕໍ່ ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງເຂົາເຈົ້າ. | ຂ້ອງຕ່າງໆ ກຳນົດຢູ່ໃນແຜນທີ່ ແລະ ໃນຂອບເຂດພື້ນທີ່ຕົວຈິງທີ່ຕິດພັນກັບການເຄື່ອນໄຫວດຳລົງຊີວິດຕາມ ຮີດຄອງປະເພນີຂອງຕົນ ເຊັ່ນ ການເກັບກູ້ເຄື່ອງປ່າຂອງດົງ, ການສະໜອງນ້ຳໃຫ້ແກ່ການຜະລິດ ແລະ ຊີວິດປະຈຳວັນ; ຕ້ອງມີແຜນການຄຸ້ມຄອງເຂດທີ່ໄດ້ກຳນົດໄວ້ໃນແຜນຄຸ້ມຄອງປ່າໄມ້ ແບບຍືນຍົງ. |
| | 2.1.2. ຕ້ອງຕົກລົງເຫັນດີກັບຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ ກ່ຽວກັບເຂດແດນປ່າໄມ້ ແລະ ທີ່ດິນປ່າໄມ້; |
| | 2.1.3. ຕ້ອງໃຫ້ເງື່ອນໄຂທີ່ເໝາະສົມ ຫຼື ບຸລິມະສິດໃຫ້ແກ່ຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ ເພື່ອດຳເນີນການເຄື່ອນໄຫວກິດຈະກຳຕ່າງໆຂອງຕົນຕາມກົດໝາຍ ວ່າດ້ວຍທີ່ດິນ, ກົດໝາຍ ວ່າດ້ວຍປ່າໄມ້ ແລະ ກົດໝາຍທີ່ກ່ຽວຂ້ອງ. |
| 2.2. ເຈົ້າຂອງປ່າໄມ້ ມີຄວາມຮັບຜິດຊອບໃນການແກ້ໄຂທຸກຂໍ້ຂັດແຍ່ງ ກ່ຽວກັບກຳມະສິດ ແລະ ສິດນຳໃຊ້ທີ່ດິນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. | 2.2.1. ຕ້ອງມີກົນໄກ ແລະ ມາດຕະການທີ່ເໝາະສົມ ເພື່ອແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ສິດນຳໃຊ້ ທີ່ດິນປ່າໄມ້ ແລະ ປ່າໄມ້ (ຍົກເວັ້ນເຈົ້າຂອງປ່າໄມ້ທີ່ເປັນຄອບຄົວ ແລະ ບຸກຄົນ). |
| | 2.2.2. ຕ້ອງເກັບຮັກສາບັນທຶກການຂັດແຍ້ງທັງໝົດຢ່າງໜ້ອຍ ຫ້າ ປີ ຜ່ານມາ. |
| 2.3. ເຈົ້າຂອງປ່າໄມ້ ຄວນໃຫ້ບູລິມະສິດໃຫ້ແກ່ຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ ໃຫ້ມີວຽກເຮັດງານທຳ ແລະ ປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ | 2.3.1. ຕ້ອງໃຫ້ບຸລິມະສິດແກ່ຊຸມຊົນ ແລະ ປະຊາຊົນທ້ອງຖິ່ນເຂົ້າຮ່ວມກິດຈະກຳປ່າໄມ້ ແລະ ການປັບປຸງຊີວິດການເປັນຢູ່ (ຍົກເວັ້ນເຈົ້າຂອງປ່າໄມ້ທີ່ເປັນຄອບຄົວ, ບຸກຄົນ ແລະ ຊຸມຊົນ) ໂດຍກຳນົດໜ້າວຽກຂອງຊຸມຊົນໃຫ້ຈະແຈ້ງໃນແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ. |
| 2.4. ເຈົ້າຂອງປ່າໄມ້ຕ້ອງກຳນົດ ແລະ ແບ່ງເຂດທີ່ດິນ ແລະ ປ່າໄມ້ຂອງຕົນເອງຢ່າງຈະແຈ້ງ, ຮັບຮູ້ປະຫວັດຄວາມເປັນມາ, ຮີດຄອງປະເພນີ ຫຼື ຄວາມເຊື່ອດັ້ງ | 2.4.1. ຕ້ອງເຮັດວຽກຢ່າງໃກ້ຊິດກັບຊຸມຊົນ, ປະຊາຊົນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງອື່ນ ເພື່ອກຳນົດພື້ນທີ່ທີ່ສຳຄັນທາງດ້ານ ວັດທະນະທຳ, ສາສະໜາ ແລະ ເຂດ**ນັນທະນາການ** ໃຫ້ຢູ່ໃນແຜນທີ່ ແລະ ໃນພື້ນທີ່ຕົວຈິງ ພາຍໃຕ້ການຄຸ້ມຄອງຂອງ ເຈົ້າຂອງປ່າໄມ້; ຕ້ອງມີແຜນການຄຸ້ມຄອງພື້ນທີ່ເຫຼົ່ານີ້ ແລະ ຈະຖືກລວມເຂົ້າໃນ ແຜນການຄຸ້ມຄອງປ່າໄມ້ ແບບຍືນຍົງ ໂດຍອີງໃສ່ການປຶກສາຫາລືກັບ ຊຸມຊົນທ້ອງ ຖິ່ນ ແລະ ພາກສ່ວນກ່ຽວຂ້ອງ. |

| | |
|---|---|
| ເດີມໃນພື້ນທີ່ ເພື່ອຕອບໂຈດຄວາມຕ້ອງການຂອງຊຸມຊົນ ແລະ ປະຊາຊົນ ທ້ອງຖິ່ນ ຢ່າງເໝາະສົມ. | 2.4.2. ຕ້ອງມີລະບຽບການ ຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ ບັນດາພື້ນທີ່ສໍາຄັນທາງ ວັດທະນະທໍາ, ສາສະໜາ ແລະ **ເຂດນັນທະນາການ** ໂດຍປຶກສາຫາລືກັບຊຸມຊົນ, ປະຊາຊົນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ. |
| 2.5. ເຈົ້າຂອງປ່າໄມ້ ຕ້ອງແກ້ໄຂຄໍາຮ້ອງທຸກ ແລະ ຂໍ້ຂັດແຍ່ງ ກ່ຽວກັບຜົນກະທົບທາງລົບຈາກກິດຈະກໍາປ່າໄມ້ຕໍ່ກັບຊັບສິນ (ທີ່ດິນ, ປ່າໄມ້ ແລະ ຊັບສິນອື່ນໆ), ຊີວິດ ແລະ ສຸຂະພາບ ຂອງຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ. | 2.5.1. ຕ້ອງຍົກໃຫ້ເຫັນເຖິງຜົນກະທົບທາງລົບ ທີ່ອາດຈະເກີດຂຶ້ນໃນແຕ່ລະກິດຈະກໍາປ່າໄມ້ ຕໍ່ກັບຊີວິດການເປັນຢູ່, ສຸຂະພາບ, ທີ່ດິນ, ປ່າໄມ້ ແລະ ຊັບສິນອື່ນໆຂອງຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ. |
| | 2.5.2. ຕ້ອງມີມາດຕະການປ້ອງກັນຜົນກະທົບທາງລົບຕໍ່ຊຸມຊົນ ແລະ ປະຊາຊົນທ້ອງຖິ່ນໃນການປະຕິບັດກິດຈະກໍາການຄຸ້ມຄອງປ່າໄມ້. |
| | 2.5.3. ຕ້ອງມີ ກົນໄກ ແລະ ມາດຕະການ ແກ້ໄຂຄໍາຮ້ອງທຸກ ແລະ ຂໍ້ຂັດແຍ່ງ ພ້ອມທັງຊົດເຊີຍຄ່າເສຍຫາຍໃຫ້ແກ່ປະຊາຊົນທ້ອງຖິ່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ. |
| | 2.5.4. ຕ້ອງຊົດເຊີຍຄ່າເສຍຫາຍໃຫ້ແກ່ຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ຫຼື ຕາມຕົກລົງຮ່ວມກັນລະຫວ່າງຄູ່ສັນຍາຂອງທັງສອງຝ່າຍ. |
| | 2.5.5. ຕ້ອງມີຄວາມຮັບຜິດຊອບໃນການບໍາລຸງຮັກສາພື້ນຖານໂຄງລ່າງຂອງຊຸມຊົນທ້ອງຖິ່ນ ເມື່ອມີການນໍາໃຊ້ເຂົ້າໃນການດໍາເນີນກິດຈະກໍາປ່າໄມ້ ແລະ ໃຫ້ການສະໜັບສະໜູນເພີ່ມເຕີມ ເພື່ອຍົກລະດັບພື້ນຖານໂຄງລ່າງເຫຼົ່ານັ້ນ. |
| | 2.5.6. ຕ້ອງເກັບຮັກສາບົດບັນທຶກ ແລະ ເອກະສານຕ່າງໆ ກ່ຽວກັບການຮ້ອງທຸກ ແລະ ຄວາມເສຍຫາຍຢ່າງໜ້ອຍ ຫ້າ ປີ ຜ່ານມາ. |
| **ຫຼັກການທີ 3: ເຈົ້າຂອງປ່າໄມ້ ຕ້ອງຮັບປະກັນ ສິດ ແລະ ເງື່ອນໄຂ ການເຮັດວຽກໃຫ້ແກ່ຜູ້ອອກແຮງງານ** | |
| 3.1. ເຈົ້າຂອງປ່າໄມ້ ຕ້ອງຮັບປະກັນຄວາມເປັນທໍາ, ສິດ ແລະ ຜົນປະໂຫຍດຂອງກໍາມະກອນຕາມກົດ | 3.1.1. ຕ້ອງ ມີ ແລະ ປະຕິບັດ ສັນຍາແຮງງານກັບກໍາມະກອນ ຫຼື ຜູ້ຕາງໜ້າໃຫ້ ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ. |
| | 3.1.2. ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ກ່ຽວກັບການນໍາໃຊ້ແຮງງານໄວໜຸ່ມ, ຄົນພິການ ແລະ ຜູ້ສູງອາຍຸ. |

| | |
|---|---|
| ໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ. | 3.1.3. ຫ້າມນໍາໃຊ້ແຮງງານແບບບັງຄັບໃນທຸກຮູບການ ຫຼື ການຈ້າງແຮງງານແບບບໍ່ເຕັມໃຈ. |
| | 3.1.4. ຕ້ອງຮັບປະກັນຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ໃນການຈ້າງງານ, ການຝຶກອົບຮົມ ແລະ ການຈ່າຍເງິນ. |
| 3.2. **ເຈົ້າຂອງປ່າໄມ້** ຕ້ອງຮັບປະກັນທຸກເງື່ອນໄຂຄວາມປອດໄພໃນການເຮັດວຽກຂອງພະນັກງານຂອງຕົນ (ລວມທັງຜູ້ອອກແຮງງານຂອງຜູ້ຮັບເໝົາ) ຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ. | 3.2.1. ຕ້ອງສະໜອງ ແລະ ແນະນໍາວິທີການ ນໍາໃຊ້ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ໃຫ້ແກ່ຜູ້ອອກແຮງງານຕາມ ເງື່ອນໄຂການເຮັດວຽກທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ. |
| | 3.2.2. ຕ້ອງຈັດຝຶກອົບຮົມວິທີການນໍາໃຊ້, ການເກັບຮັກສາວັດຖຸ ແລະ ອຸປະກອນໃຫ້ມີຄວາມປອດໄພ ເພື່ອປ້ອງກັນການເກີດອຸປະຕິເຫດ ແລະ ອັນຕະລາຍຕໍ່ກັບພະນັກງານ. |
| | 3.2.3. ຕ້ອງຈັດຝຶກອົບຮົມພາກປະຕິບັດຕົວຈິງ ກ່ຽວກັບການນໍາໃຊ້ສານເຄມີຢ່າງປອດໄພຕໍ່ສຸຂະພາບຂອງຜູ້ອອກແຮງງານຕາມທີ່ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ. |
| | 3.2.4. ຕ້ອງຮັບປະກັນວ່າຜູ້ອອກແຮງງານຈະໄດ້ຮັບການຝຶກອົບຮົມ ກ່ຽວກັບ ການເຮັດວຽກທີ່ປອດໄພຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ. |
| 3.3. **ເຈົ້າຂອງປ່າໄມ້** ຕ້ອງເຄົາລົບສິດຂອງກໍາມະກອນໃນການເຂົ້າຮ່ວມສະຫະພັນກໍາມະບານ ແລະ ສິດອື່ນໆທີ່ໄດ້ຕົກລົງກັນລະຫວ່າງຜູ້ໃຊ້ແຮງງານ/ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ/**ເຈົ້າຂອງປ່າໄມ້** ຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ. | 3.3.1. ຕ້ອງໃຫ້ ຫຼື ສ້າງເງື່ອນໄຂທີ່ເໝາະສົມໃຫ້ກໍາມະກອນເຂົ້າຮ່ວມໃນສະຫະພັນກ ໍາມະບານ (ຍົກເວັ້ນເຈົ້າຂອງປ່າໄມ້ທີ່ເປັນຄອບຄົວ, ບຸກຄົນ ແລະ ຊຸມຊົນ). |
| | 3.3.2. ຕ້ອງ ພັດທະນາ ແລະ ປະຕິບັດລະບຽບ ກົນໄກຂອງທ້ອງຖິ່ນ ຢ່າງມີປະຊາທິ ປະໄຕ, ປຶກສາຫາລື ແລະ ເກັບກໍາຂໍ້ຄິດເຫັນ ຂອງຜູ້ອອກແຮງງານກ່ຽວກັບສະພາບ ການເຮັດວຽກ ແລະ ຊີວິດຂອງເຂົາເຈົ້າ (ຍົກເວັ້ນເຈົ້າຂອງປ່າໄມ້ທີ່ເປັນຄົວເຮືອນ, ບຸກຄົນ ແລະ ຊຸມຊົນ). |

| | |
|---|---|
| 3.4. **ເຈົ້າຂອງປ່າໄມ້** ຕ້ອງມີ ແລະ ຮັກສາ ກົນໄກໃນການແກ້ໄຂຄຳຮ້ອງທຸກ ແລະ ການຊົດເຊີຍໃຫ້ແກ່ຜູ້ອອກແຮງງານ ໃນກໍລະນີທີ່ມີການສູນເສຍ ຫຼື ເກີດຄວາມເສຍຫາຍຕໍ່ກັບເຂົາເຈົ້າ. | 3.4.1. ຕ້ອງມີ ກົນໄກ ແລະ ມາດຕະການແກ້ໄຂຄຳຮ້ອງທຸກ ແລະ ການຊົດເຊີຍຄ່າເສຍຫາຍ ຫຼື ຄວາມເສຍຫາຍຂອງຜູ້ອອກແຮງງານຕາມ ກົດໝາຍ ຫຼື ສັນຍາລະຫວ່າງຜູ້ໃຊ້ແຮງງານກັບຜູ້ອອກແຮງງານ. |
| | 3.4.2. ປະຕິບັດມາດຕະການປ້ອງກັນຄວາມເສຍຫາຍ, ການສູນເສຍ ແລະ ຄວາມສ່ຽງຕໍ່ສຸຂະພາບຂອງຜູ້ອອກແຮງງານໃນເວລາປະຕິບັດວຽກງານປ່າໄມ້. |
| | 3.4.3. ຕ້ອງຊົດເຊີຍໃຫ້ຜູ້ອອກແຮງງານ ສໍາລັບຄວາມເສຍຫາຍ ແລະ ການສູນເສຍຂອງເຂົາເຈົ້າ (ຖ້າມີ) ຕາມ ກົດໝາຍ ແລະ ລະບຽບການ ຫຼື ຂໍ້ຕົກລົງ ລະຫວ່າງ ສອງຝ່າຍ; |
| | 3.4.4. ຕ້ອງເກັບຮັກສາ ບົດບັນທຶກ ແລະ ເອກະສານ ການຮ້ອງຂໍ ແລະ ຄ່າຊົດເຊີຍຂອງເຈົ້າຂອງປ່າໄມ້ ຢ່າງໜ້ອຍ 5 ປີ ຜ່ານມາ. |
| **ຫຼັກການທີ 4: ການ ຄຸ້ມຄອງ, ນຳໃຊ້ ແລະ ພັດທະນາ ປ່າໄມ້ແບບຍືນຍົງ** | |
| 4.1. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດກິດຈະກຳປ່າໄມ້ ຕາມທີ່ກຳນົດໄວ້ໃນແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ. | 4.1.1. ເຈົ້າຂອງປ່າໄມ້ ຕ້ອງຮັບປະກັນການປະຕິບັດການຄຸ້ມຄອງປ່າໄມ້ຕາມທີ່ໄດ້ອະທິບາຍໄວ້ໃນ ແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ແຜນປະຈຳປີ; |
| | 4.1.2. ຕ້ອງ ປັບປຸງ ແລະ ດັດສົມ ແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ ເປັນແຕ່ລະໄລຍະ ຫຼື ເມື່ອເກີດມີການປ່ຽນແປງສະພາບທາງທຳມະຊາດ, ເສດຖະກິດ-ສັງຄົມ, ຄວາມກ້າວໜ້າທາງວິທະຍາສາດ ແລະ ເຕັກໂນໂລຊີ, ຜົນການປະເມີນ, ການຕິດຕາມ ແລະ ການປ່ຽນແປງນະໂຍບາຍຂອງລັດຖະບານ, ແຕ່ຕ້ອງຮັບປະກັນເປົ້າໝາຍການຄຸ້ມຄອງປ່າໄມ້ແບບຍືນຍົງ; |
| | 4.1.3. ຕ້ອງເກັບຮັກສາ ບົດບັນທຶກ ແລະ ເອກະສານ ການດັດສົມແຜນການຄຸ້ມຄອງ ປ່າໄມ້ແບບຍືນຍົງ ຢ່າງໜ້ອຍ 5 ປີ ຜ່ານມາ. |
| 4.2. ເຈົ້າຂອງປ່າໄມ້ ຕ້ອງຜະລິດ ແລະ ນຳໃຊ້ແນວພັນ ແລະ | 4.2.1. ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແນວພັນພືດປ່າ ແລະ ແນວພັນໄມ້ ເພື່ອການທົດລອງແຫຼ່ງກຳເນີດ ແລະ ຢັ້ງຢືນ; |

| | |
|---|---|
| ເບ້ຍໄມ້ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການຄຸ້ມ ຄອງແນວພັນພືດປ່າ ແລະ ແນວພັນໄມ້. | 4.2.2. ການຜະລິດເບ້ຍໄມ້ ຕ້ອງປະຕິບັດຕາມ ລະບຽບການ ແລະ ຫຼັກການກ່ຽວກັບການຜະລິດ ແລະ ການຄ້າໃນສວນກ້າເບ້ຍໄມ້, ແຫຼ່ງກຳເນີດຂອງແນວພັນ, ການຢັ້ງຢືນແນວພັນ ແລະ ຂໍ້ແນະນຳ ເຕັກນິກການຜະລິດເບ້ຍໄມ້; |
| | 4.2.3. ຕ້ອງນຳໃຊ້ແນວພັນ ແລະ ເບ້ຍໄມ້ທີ່ມີຄຸນນະພາບ, ມີແຫຼ່ງທີ່ມາທີ່ຈະແຈ້ງ ແລະ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການຄຸ້ມຄອງແນວພັນພືດປ່າ ແລະ ແນວພັນໄມ້; |
| | 4.2.4. ຄວນນຳໃຊ້ແນວພັນ, ແນວພັນທີ່ຜ່ານການທົດສອບ, ແລະ ແນວພັນປັບປຸງທີ່ໄດ້ຮັບການອະນຸຍາດໃຫ້ນຳໃຊ້ແນວພັນ ຈາກພາກສ່ວນທີ່ກ່ຽວຂ້ອງ; |
| | 4.2.5. ຕ້ອງປະຕິບັດຕາມລະບຽບການ ນຳເຂົ້າ ແລະ ສົ່ງອອກ ເມັດພັນພືດປ່າ ແລະ ແນວພັນໄມ້. |
| 4.3. ເຈົ້າຂອງປ່າໄມ້ ຕ້ອງນຳໃຊ້ເຕັກນິກ, ອະນະວັດວິທະຍາ ທີ່ເໝາະສົມກັບເປົ້າໝາຍຂອງແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ. | 4.3.1. ຊະນິດພັນໄມ້ທີ່ເລືອກມາປູກຕ້ອງແທດເໝາະກັບສະພາບເງື່ອນໄຂຂອງສະຖານທີ່ ແລະ ຈຸດປະສົງ ຂອງການຄຸ້ມຄອງປ່າໄມ້ແບບຍືນຍົງ; |
| | 4.3.2. ຕ້ອງນຳໃຊ້ເຕັກນິກ, ອະນະວັດວິທະຍາ ທີ່ເໝາະສົມກັບລັກສະນະທາງດ້ານນິເວດວິທະຍາ ຂອງຊະນິດພັນໄມ້ ແລະ ສະພາບພື້ນທີ່ທີ່ແຕກຕ່າງກັນ; |
| | 4.3.3. ຕ້ອງນຳໃຊ້ການຄຸ້ມຄອງພື້ນທີ່ທີ່ເໝາະສົມ ເພື່ອການຄຸ້ມຄອງປ່າປູກແບບຍືນຍົງ; |
| | 4.3.4. ຕ້ອງນຳໃຊ້ມາດຕະການທາງດ້ານອະນະວັດວິທະຍາ ເຊັ່ນ ສົ່ງເສີມການຟື້ນຟູແບບທຳມະຊາດ, ປູກເສີມກ້ອງປ່າ, ບຳລຸງຮັກສາ ແລະ ການຂຸດຄົ້ນປ່າທຳມະຊາດ ຕາມສະພາບປ່າໄມ້ ແລະ ປະເພດປ່າໄມ້ ຕາມກົດໝາຍ ວ່າດ້ວຍປ່າໄມ້. |
| 4.4. ເຈົ້າຂອງປ່າໄມ້ ຕ້ອງມີການຄຸ້ມຄອງທີ່ມີຫຼາຍກິດຈະກຳ ທີ່ພົວພັນເຖິງການຜະລິດ ແລະ ການດຳເນີນທຸລະກິດ ເພື່ອເຮັດໃຫ້ປ່າໄມ້ມີຜົນປະໂຫຍດສູງສຸດ. | 4.4.1. ຕ້ອງມີຫຼາຍກິດຈະກຳປ່າໄມ້ ເຊັ່ນ ການຜະລິດ ແລະ ການດຳເນີນທຸລະກິດໂດຍອີງໃສ່ຂໍ້ມູນຂ່າວສານທາງດ້ານ ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ຕະຫຼາດຜະລິດຕະພັນປ່າໄມ້ ເຊັ່ນ ໄມ້, ເຄື່ອງປ່າຂອງດົງ ແລະ ການບໍລິການດ້ານລະບົບນິເວດ; |
| | 4.4.2. ຕ້ອງໃຫ້ມີຄວາມຫຼາກຫຼາຍດ້ານແຫຼ່ງລາຍຮັບຈາກປ່າໄມ້ ແລະ ການບໍລິການລະບົບນິເວດ; |

| | |
|---|---|
| | 4.4.3. ຮັບປະກັນການປູກຕົ້ນໄມ້ໃຫ້ມີຫຼາກຫຼາຍຊະນິດພັນໄມ້ພື້ນເມືອງ ແລະ ເຄື່ອງປ່າຂອງດົງຊະນິດພັນທີ່ມີຄຸນຄ່າສູງ; |
| | 4.4.4. ເພີ່ມທະວີບັນດາກິດຈະກຳການຜະລິດທີ່ເຊື່ອມໂຍງກັນໃນລະບົບຕ່ອງໂສ້ມູນຄ່າ, ການຕະຫຼາດ ແລະ ການບໍລິໂພກ ຜະລິດຕະພັນປ່າໄມ້ ແລະ ການບໍລິການລະບົບນິເວດ. |
| 4.5. ເຈົ້າຂອງປ່າໄມ້ ຕ້ອງມີມາດຕະການປ້ອງກັນ ແລະ ຫຼຸດຜ່ອນການລະບາດຂອງພະຍາດ ແລະ ສັດຕູພືດ. | 4.5.1. ຕ້ອງມີແຜນການ ແລະ ຈັດຕັ້ງປະຕິບັດມາດຕະການຄຸ້ມຄອງ ແລະ ການຄຸ້ມຄອງສັດຕູພືດແບບປະສົມປະສານ; ໃຫ້ບຸລິມະສິດຕໍ່ມາດຕະການດ້ານວະນະວັດວິທະ ຍາ ແລະ ຊີວະພາບ ເພື່ອຈຳກັດການນຳໃຊ້ສານເຄມີປ້ອງກັນພືດ. |
| | 4.5.2. ຕ້ອງແຈ້ງໃຫ້ອຳນາດການປົກຄອງທ້ອງຖິ່ນຮັບຊາບໃນທັນທີ ເມື່ອກວດພົບການລະບາດຂອງພະຍາດ ແລະ ສັດຕູພືດ ເພື່ອປະສານສົມທົບກັນຈັດການ ຢ່າງທັນການ. |
| | 4.5.3 ຕ້ອງເກັບຮັກສາ ບົດບັນທຶກ ແລະ ເອກະສານ ກ່ຽວກັບພະຍາດ ແລະ ສັດຕູພືດ ຢ່າງໜ້ອຍ ຫ້າ ປີ ຜ່ານມາ. |
| 4.6. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດມາດຕະການປ້ອງກັນ ແລະຕ້ານໄຟປ່າ. | 4.6.1. ຕ້ອງມີແຜນການ ແລະ ຕິດຕາມກວດກາການປ້ອງກັນ ແລະ ຕ້ານໄຟໄໝ້ປ່າ. |
| | 4.6.2. ຕ້ອງ ມີ ແລະ ຮັກສາ ລະບົບປ້ອງກັນ ແລະ ຕ້ານໄຟໄໝ້ປ່າ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ. |
| | 4.6.3. ຕ້ອງແຈ້ງໃຫ້ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເມື່ອກວດພົບເຫັນໄຟໄໝ້ປ່າເພື່ອຮ່ວມມືກັນຄວບຄຸມໄຟໄໝ້ປ່າຢ່າງທັນການ. |
| | 4.6.4. ຕ້ອງປະຕິບັດວຽກງານການປູກຈິດສຳນຶກໃຫ້ແກ່ຜູ້ຖືກຈ້າງງານ, ຊຸມຊົນທ້ອງຖິ່ນ ແລະ ປະຊາຊົນ ກ່ຽວກັບໄຟໄໝ້ປ່າ ຢ່າງເປັນຮູບປະທຳ. |
| | 4.6.5. ຕ້ອງເກັບຮັກສາ ບົດບັນທຶກ ແລະ ເອກະສານ ຂອງກໍລະນີ ໄຟປ່າ ເປັນຢ່າງໜ້ອຍ ຫ້າ ປີ ຜ່ານມາ . |

| | |
|---|---|
| 4.7. ເຈົ້າຂອງປ່າໄມ້ ຕ້ອງຂຸດຄົ້ນຜະລິດຕະພັນຈາກປ່າໄມ້ຢ່າງເໝາະສົມ ເພື່ອຮັກສາຊັບພະຍາກອນປ່າໃນໄລຍະຍາວ. | 4.7.1. ຕ້ອງປະຕິບັດຕາມລະບຽບການຄຸ້ມຄອງປ່າໄມ້ ແລະ ບົດແນະນຳຂອງກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ເມື່ອດຳເນີນກິດຈະກຳຂຸດຄົ້ນໄມ້ສຳລັບປ່າແຕ່ລະປະເພດ. |
| | 4.7.2. ຕ້ອງຮັບຮູ້ວ່າ ປະລິມານການຂຸດຄົ້ນໃນແຕ່ລະປີຈະຕ້ອງບໍ່ເກີນປະລິມານ ທີ່ກຳນົດໄວ້ໃນແຜນຄຸ້ມຄອງປ່າໄມ້ແບບຍືນຍົງ. |
| 4.8. ເຈົ້າຂອງປ່າໄມ້ ຕ້ອງສ້າງ ແລະ ບຳລຸງຮັກສາວຽກງານພື້ນຖານໂຄງລ່າງດ້ານເຕັກນິກໃຫ້ສອດຄ່ອງກັບເປົ້າໝາຍ ຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ. | 4.8.1. ຕ້ອງໄດ້ວາງແຜນການ ແລະ ປະຕິບັດວຽກງານ ກໍ່ສ້າງ ແລະ ບຳລຸງຮັກສາພື້ນຖານໂຄງລ່າງ ເຊັ່ນ ຖະໜົນຫົນທາງ, ຂົວ ແລະ ທາງລາກໄມ້, ເຂດຕັດໄມ້ ໃຫ້ສອດຄ່ອງຕາມລະບຽບການ; ຮັບປະກັນໃຫ້ພື້ນຖານໂຄງລ່າງທັງໝົດ ຈະຖືກລະບຸໄວ້ຢູ່ໃນແຜນທີ່ (ຍົກເວັ້ນເຈົ້າຂອງປ່າໄມ້ທີ່ເປັນຄົວເຮືອນ, ບຸກຄົນ ແລະ ຊຸມຊົນ); |
| | 4.8.2. ຕ້ອງຮັບຮູ້ວ່າ ທຸກການເຄື່ອນໄຫວ ກ່ຽວກັບການ ກໍ່ສ້າງ, ບຳລຸງຮັກສາ ແລະ ການດຳເນີນງານ ກ່ຽວກັບພື້ນຖານໂຄງລ່າງ ຈະບໍ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ. |
| **ຫຼັກການທີ 5: ການຄຸ້ມຄອງ ແລະ ປົກປັກຮັກສາ ສິ່ງແວດລ້ອມ ໃນກິດຈະກຳປ່າໄມ້** | |
| 5.1. ເຈົ້າຂອງປ່າໄມ້ ຕ້ອງດຳເນີນການປະເມີນຜົນກິດຈະກຳປ່າໄມ້ທີ່ສົ່ງຜົນກະທົບຕໍ່ກັບສິ່ງແວດລ້ອມ | 5.1.1. ຕ້ອງປະເມີນ ແລະ ວິເຄາະ ຜົນກະທົບທາງລົບ ແລະ ທາງບວກຂອງກິດຈະກຳ ປ່າໄມ້ຕໍ່ສິ່ງແວດລ້ອມ; |
| | 5.1.2. ຕ້ອງມີແຜນການ ແລະ ປະຕິບັດມາດຕະການ ຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມກ່ອນການຈັດຕັ້ງປະຕິບັດກິດຈະກຳປ່າໄມ້; |
| | 5.1.3. ຕ້ອງໄດ້ຮັບການຊຸກຍູ້ການປະຕິບັດມາດຕະການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ການນຳໃຊ້ຊັບພະຍາກອນຢ່າງມີປະສິດທິຜົນໃນກິດຈະກຳປ່າໄມ້. |
| 5.2. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດມາດຕະການປົກປັກຮັກສາດິນ ແລະ ແຫຼ່ງນ ້ໍາ ໃນໄລຍະການປະຕິບັດກິດຈະກຳປ່າໄມ້. | 5.2.1. ຕ້ອງກຳນົດເຂດປ້ອງກັນດິນ ແລະ ນ້ຳ ເຊັ່ນ ເຂດກັນຊົນແມ່ນ້ຳ, ຫ້ວຍຮ່ອງ, ໜອງ, ບຶງ, ທີ່ດິນບໍລິເວນນ້ຳ, ເຂດຄ້ອຍຊັນ ແລະ ເຂດຜະລິດກະສິກຳຕາມແຜນທີ່ ແລະ ພື້ນທີ່ຕົວຈິງ; |
| | 5.2.2. ຕ້ອງມີແຜນການ ແລະ ຈັດຕັ້ງປະຕິບັດ ບັນດາມາດຕະການປົກປັກຮັກສາ ແລະ ຟື້ນຟູພັນພືດຢູ່ໃນບັນດາເຂດທີ່ໄດ້ກຳນົດເປັນກັນຊົນ ເພື່ອເຮັດໜ້າທີ່ປົກປັກຮັກສາຊັບພະຍາກອນ ດິນ ແລະ ນ້ຳ; |

| | |
|---|---|
| | 5.2.3. ຕ້ອງກຳນົດ ແລະ ວິເຄາະ ຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ ກ່ຽວກັບກິດ ຈະກຳປ່າໄມ້ ຕໍ່ຊັບພະຍາກອນ ດິນ ແລະ ນໍ້າ; |
| | 5.2.4. ຕ້ອງມີແຜນການ ແລະ ປະຕິບັດ ມາດຕະການຫຼຸດຜ່ອນຜົນກະທົບທາງລົບຈາກກິດຈະກຳປ່າໄມ້ ຕໍ່ຊັບພະຍາກອນ ດິນ ແລະ ນໍ້າ; |
| | 5.2.5. ຕ້ອງ ໃຫ້ຄວາມສຳຄັນຕໍ່ການປູກ ແລະ ຟື້ນຟູປ່າ ໃນດິນເປົ່າຫວ່າງ, ທີ່ດິນທີ່ມີຄວາມສ່ຽງຕໍ່ການເຊາະເຈື່ອນຂອງດິນ ແລະ ທີ່ດິນຊຸດໂຊມ ໂດຍນຳໃຊ້ເຕັກນິກການອະນຸລັກດິນທີ່ເໝາະສົມ. |
| 5.3. ເຈົ້າຂອງປ່າໄມ້ ຕ້ອງຄວບຄຸມການນຳໃຊ້ສານເຄມີ, ນໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ຝຸ່ນເຄມີ ຢ່າງເຂັ້ມງວດ ແລະ ຮັບປະກັນຄວາມປອດໄພຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງປະຊາຊົນ. | 5.3.1. ຕ້ອງນຳໃຊ້ສານເຄມີທີ່ສອດຄ່ອງກັບຂໍ້ກຳນົດຂອງກົດໝາຍສປປ ລາວ ແລະລະບຽບການ/ສົນທິສັນຍາສາກົນ; |
| | 5.3.2. ຫ້າມນຳໃຊ້ຢາປາບສັດຕູພືດປະເພດ 1A ແລະ 1B ຂອງອົງການອະນາໄມໂລກ ແລະ ຢາປາບສັດຕູພືດ ທີ່ເປັນພິດສູງອື່ນໆ ທີ່ຖືກຫ້າມນຳໃຊ້ຕາມບົດບັນຍັດຂອງກົດໝາຍ; |
| | 5.3.3. ຕ້ອງຮັບປະກັນໃຫ້ ສານເຄມີ, ນໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ຝຸ່ນເຄມີທັງໝົດ ຖືກຂົນສົ່ງ ແລະ ເກັບຮັກສາ ໃນສະຖານທີ່ປອດໄພ ເພື່ອສິ່ງແວດລ້ອມ ແລະ ສຸຂະພາບຂອງປະຊາຊົນ; |
| | 5.3.4. ຕ້ອງມີຄຳແນະນຳການນຳໃຊ້ສານເຄມີ, ນໍ້າມັນເຊື້ອໄຟ, ນໍ້າມັນ ແລະ ຝຸ່ນເຄມີ ເພື່ອຮັບປະກັນຄວາມປອດໄພຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງປະຊາຊົນ; |
| | 5.3.5. ຕ້ອງຈຳກັດການນຳໃຊ້ຝຸ່ນເຄມີ ແລະ ສົ່ງເສີມການນຳໃຊ້ຝຸ່ນອິນຊີ ແລະ ຝຸ່ນຊີວະພາບ ເພື່ອປັບປຸງຄວາມອຸດົມສົມບູນຂອງດິນ; |
| | 5.3.6. ຕ້ອງຮັກສາ ແລະ ປັບປຸງ ບັນຊີລາຍຊື່ສານເຄມີທັງໝົດ (ຢາປາບສັດຕູພືດ, ຢາຂ້າຫຍ້າ, ຢາຕ້ານ ຫຼື ຂ້າໜູ, ແລະ ສານຄວບຄຸມການຈະເລີນເຕີບໂຕ) ທີ່ຕ້ອງຫ້າມ ໂດຍກົດໝາຍຂອງ ສປປ ລາວ ແລະ ລະບຽບການ ຫຼື ສົນທິສັນຍາທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ; |
| | 5.3.7. ຕ້ອງບັນທຶກຂໍ້ມູນ ກ່ຽວກັບ ປະເພດ, ຂະໜາດ, ເວລາ ແລະ ສະຖານທີ່ນຳໃຊ້ ສານເຄມີ ແລະ ຝຸ່ນເຄມີ. |
| | 5.4.1. ຕ້ອງຈຳກັດສິ່ງເສດເຫຼືອທີ່ເປັນອັນຕະລາຍຈາກກິດຈະກຳປ່າໄມ້; |

| | |
|---|---|
| 5.4. ເຈົ້າຂອງປ່າໄມ້ ຕ້ອງຄວບຄຸມສິ່ງເສດເຫຼືອທີ່ເປັນອັນຕະລາຍ ໃຫ້ມີຄວາມປອດໄພຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງປະຊາຊົນ. | 5.4.2. ຕ້ອງຄຸ້ມຄອງ ແລະ ເກັບກຳ ສິ່ງເສດເຫຼືອທີ່ເປັນອັນຕະລາຍ ແລະ ຮັບປະກັນ ໃຫ້ເກັບຮັກສາໄວ້ໃນບ່ອນທີ່ປອດໄພ ຕາມລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ; |
| | 5.4.3. ຕ້ອງຮັບປະກັນວ່າການຫຸ້ມຫໍ່ ແລະ ສິ່ງເສດເຫຼືອ ທີ່ເປັນອັນຕະລາຍທັງໝົດຈະຖືກກຳຈັດຕາມຄວາມເໝາະສົມ. |
| **ຫຼັກການທີ 6: ການບຳລຸງຮັກສາ, ອະນຸລັກ ແລະ ເສີມຂະຫຍາຍດ້ານຊີວະນານາພັນ** | |
| 6.1. ເຈົ້າຂອງປ່າໄມ້ ຕ້ອງກຳນົດ ແລະ ປົກປັກຮັກສາ ພື້ນທີ່ປ່າໄມ້ທີ່ສຳຄັນທາງດ້ານນິເວດວິທະຍາ | 6.1.1. ຕ້ອງດຳເນີນການສຳຫຼວດປ່າໄມ້, ການສ້າງແຜນທີ່ປ່າໄມ້ ແລະ ການພັດທະນາຖານຂໍ້ມູນ ແລະ ປຶກສາຫາລືບັນດາພາກສ່ວນທີ່ກ່ຽວຂ້ອງກັບພື້ນທີ່ປ່າທີ່ມີຄວາມສຳຄັນທາງດ້ານນິເວດວິທະຍາ, ລວມມີ:<br>ກ) ລະບົບນິເວດປ່າໄມ້ທີ່ເປັນເອກະລັກ, ຫາຍາກ ແລະ ມີຄວາມສ່ຽງ ຫຼື ລະບົບນິເວດປ່າໄມ້ທົ່ວໄປ ເຊັ່ນ ເຂດປາກແມ່ນ້ຳ, ທີ່ດິນບໍລິເວນນ້ຳ, ແລະ ປ່າຫີນປູນ;<br>ຂ) ພື້ນທີ່ປ່າໄມ້ທີ່ມີຊະນິດພັນພືດສະເພາະຖິ່ນ ແລະ ທີ່ຢູ່ອາໄສ ທີ່ຖືກຂຸກຄາມ;<br>ຄ) ແຫຼ່ງພັນທຸກຳແມ່ນມີຄວາມສ່ຽງ ແລະ ຕ້ອງໄດ້ຮັບການປົກປ້ອງ;<br>ງ) ພູມສັນຖານທີ່ມີຄວາມສຳຄັນໃນລະດັບຊາດ ແລະ ສາກົນ. |
| | 6.1.2. ຕ້ອງມີແຜນການປົກປັກຮັກສາ ແລະ ອະນຸລັກ ພື້ນທີ່ປ່າໄມ້ທີ່ສຳຄັນ ທາງດ້ານນິເວດວິທະຍາ ທີ່ໄດ້ກຳນົດໄວ້ໃນ 6.1.1. ແລະ ຖືກບັນຈຸເຂົ້າໃນແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ; |
| | 6.1.3. ຕ້ອງມີແຜນການຕິດຕາມກວດກາ ແລະ ປະເມີນຜົນການປົກປັກຮັກສາ ແລະ ອະນຸລັກປ່າໄມ້ທີ່ສຳຄັນທາງນິເວດວິທະຍາ; |
| | 6.1.4. ຕ້ອງປັບປຸງ ແລະ ແກ້ໄຂ ແຜນການທີ່ມີຢູ່ແລ້ວ ໂດຍອີງຕາມຜົນຂອງການຕິດຕາມ ແລະ ປະເມີນຜົນ. |
| 6.2. ເຈົ້າຂອງປ່າໄມ້ ຕ້ອງມີແຜນການ ແລະ ດຳເນີນກິດຈະກຳປົກປັກຮັກສາພັນພືດ ແລະ ສັດປ່າ ຕາມກົດໝາຍ | 6.2.1. ຕ້ອງປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ເພື່ອສ້າງບັນຊີລາຍຊື່ຊະນິດພືດ ແລະ ສັດທີ່ຕ້ອງໄດ້ຮັບການປົກປັກຮັກສາຕາມລະບຽບການ; |
| | 6.2.2. ຕ້ອງເປີດເຜີຍ ແລະ ດຳເນີນມາດຕະການເພື່ອປົກປ້ອງຊະນິດພັນທີ່ຈຳເປັນຕ້ອງໄດ້ຮັບການຄຸ້ມຄອງ ແລະ ທີ່ຢູ່ອາໄສຂອງພວກມັນ; |

| | |
|---|---|
| ຂອງ ສປປ ລາວ ແລະ ສາກົນ. | 6.2.3. ຕ້ອງປັບປຸງຂໍ້ມູນ ແລະ ເກັບຮັກສາ ຂໍ້ມູນຂອງຊະນິດພັນ ທີ່ກຳນົດໄວ້ ທີ່ຕ້ອງການການປົກປ້ອງ; |
| | 6.2.4. ຕ້ອງມີມາດຕະການປ້ອງກັນ ແລະ ຕິດຕາມກວດກາ ການເຄື່ອນໄຫວລ່າສັດປ່າ ແລະ ການຂຸດຄົ້ນ ທີ່ຜິດກົດໝາຍ; |
| | 6.2.5.ຕ້ອງປ່ອຍປະໄມ້ຢືນຕົ້ນ ແລະ ໄມ້ຕາຍ, ຕົ້ນໄມ້ໂກນ, ຫຸ່ນໄມ້ເກົ່າ ແລະ ຕົ້ນໄມ້ທີ່ຫາຍາກໃກ້ສູນພັນ ໃນປະລິມານ ແລະ ການກະຈາຍຕົວທີ່ຈຳເປັນ ເພື່ອປົກປ້ອງຄວາມຫຼາກຫຼາຍທາງດ້ານຊີວະວິທະຍາ, ໂດຍຄຳນຶງເຖິງຜົນກະທົບ ທີ່ອາດມີຕໍ່ສະພາບ ແລະ ຄວາມໝັ້ນຄົງ ຂອງປ່າໄມ້ ແລະ ຕໍ່ລະບົບນິເວດອ້ອມຂ້າງ. |
| 6.3. ເຈົ້າຂອງປ່າໄມ້ ຕ້ອງປົກປັກຮັກສາ, ອະນຸລັກພື້ນທີ່ປ່າໄມ້ທີ່ມີຄວາມສຳຄັນດ້ານນິເວດວິທະຍາຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ສາກົນ. | 6.3.1. ຕ້ອງ ມີ ແລະ ເປີດເຜີຍ ມາດຕະການປົກປັກຮັກສາ ແລະ ອະນຸລັກປ່າໄມ້ທີ່ສຳຄັນທາງນິເວດວິທະຍາ; |
| | 6.3.2. ຕ້ອງປັບປຸງ ແລະ ເກັບມ້ຽນ ບັນດາຂໍ້ມູນ ແລະ ໄຟລ໌ເອກະສານ ກ່ຽວຂ້ອງກັບເຂດປ່າໄມ້ທີ່ສຳຄັນທາງນິເວດວິທະຍາ; |
| | 6.3.3. ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ວ່າດ້ວຍການປົກປ້ອງ ແລະ ອະນຸລັກ ພື້ນທີ່ປ່າໄມ້ ທີ່ມີຄວາມສຳຄັນທາງດ້ານນິເວດວິທະຍາ; |
| | 6.3.4. ຕ້ອງເສີມຂະຫຍາຍຄວາມສາມາດຂອງຜູ້ຖືກຈ້າງງານ ແລະ ຍົກສູງຄວາມຮັບຮູ້ໃຫ້ແກ່ຊຸມຊົນທ້ອງຖິ່ນ ກ່ຽວກັບເຂດປ່າໄມ້ທີ່ສຳຄັນດ້ານນິເວດວິທະຍາ. |
| 6.4. ເຈົ້າຂອງປ່າໄມ້ ຕ້ອງມີມາດຕະການປົກປັກຮັກສາ ແລະ ເສີມຂະຫຍາຍຄຸນຄ່ານິເວດວິທະຍາ ແລະ ຊີວະນາ ນາພັນປ່າໄມ້. | 6.4.1. ຕ້ອງນຳໃຊ້ເຕັກນິກ, ວະນະວັດວິທະຍາ ທີ່ເໝາະສົມ ແລະ ໃຫ້ບຸລິມະສິດຊະ ນິດພັນໄມ້ພື້ນເມືອງໃນການ ຟື້ນຟູປ່າ, ປູກໄມ້ເສີມກ້ອງປ່າ ແລະ ການປູກປ່າ; |
| | 6.4.2. ຕ້ອງໃຫ້ບຸລິມະສິດໃນການປູກຕົ້ນໄມ້ແບບປະສົມ ເພື່ອເສີມຂະຫຍາຍຊີວະນານາພັນ ແລະ ຄວາມຍືນຍົງຂອງປ່າໄມ້; |
| | 6.4.3. ບໍ່ຄວນນຳໃຊ້ແນວພັນໄມ້ທີ່ດັດແປງພັນທຸກຳ ເຂົ້າມານາໃຊ້ໃນການປູກ. ຄວນຈຳໄວ້ວ່າການນຳໃຊ້ແນວພັນໄມ້ດັ່ງກ່າວ ສາມາດນຳໃຊ້ໄດ້ ໃນເວລາທີ່ມີຂໍ້ມູນທາງວິທະຍາສາດພຽງພໍ ທີ່ສະແດງໃຫ້ເຫັນວ່າ ມີຜົນກະທົບທາງບວກ ຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ມີຄວາມເທົ່າທຽມ ຫຼື ດີກວ່າແນວພັນໄມ້ທີ່ຖືກສ້າງຂຶ້ນໂດຍວິທີການປັບປຸງພັນແບບດັ້ງເດີມ; |

| | |
|---|---|
| | 6.4.4. ຕ້ອງປະຕິບັດມາດຕະການສະເພາະ ແລະ ມີຂໍ້ຕົກລົງ ກັບຊຸມຊົນທ້ອງຖິ່ນ ເພື່ອຫຼຸດຜ່ອນຜົນກະທົບທາງລົບຂອງການລ້ຽງສັດໃຫຍ່ຕໍ່ກັບການຟື້ນຟູທຳມະຊາດ, ອັດຕາການຈະເລີນເຕີບໂຕ ແລະ ຊີວະນານາພັນປ່າໄມ້; |
| | 6.4.5. ຕ້ອງປູກປ່າຄືນໃໝ່ໃນພື້ນທີ່ ເປົ່າຫວ່າງ ຫຼື ປອກໂຫຼ້ນ ຕາມແຜນການຟື້ນຟູປ່າໄມ້ ໂດຍນຳໃຊ້ເຕັກນິກການຊ່ວຍຟື້ນຟູແບບທຳມະຊາດ ຫຼື ການປູກໄມ້ເສີມກ້ອງປ່າໄມ້ທຳມະຊາດ. |
| 6.5. ເຈົ້າຂອງປ່າໄມ້ ຕ້ອງຄວບຄຸມຕົ້ນໄມ້ຊະນິດພັນຕ່າງຖິ່ນ ຢ່າງເຂັ້ມງວດ ເພື່ອຫຼີກລ້ຽງ ຜົນກະທົບທາງລົບຕໍ່ລະບົບນິເວດປ່າໄມ້ | 6.5.1. ຫ້າມນຳເອົາຊະນິດພັນໄມ້ຕ່າງຖິ່ນ ຫຼື ຊະນິດພັນທີ່ເປັນໄພຂຸກຄາມ ທີ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ; |
| | 6.5.2. ຕ້ອງຮັບຮູ້ວ່າການນຳເຂົ້າແນວພັນ ພືດ ແລະ ສັດ, ແຫຼ່ງພັນທຸກຳ ແລະ ຈຸລິນຊີ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ; |
| | 6.5.3. ຕ້ອງມີມາດຕະການປ້ອງກັນ ເພື່ອຄວບຄຸມ ແລະ ຫຼີກລ້ຽງ ການບຸກລຸກຂອງຊະນິດພັນຕ່າງຖິ່ນ, ບ່ອນທີ່ມີການນຳເອົາຊະນິດພັນຕ່າງຖິ່ນເຂົ້າມາ; |
| | 6.5.4. ຕ້ອງເກັບຮັກສາເອກະສານ ແລະ ໄຟລ໌ເອກະສານ ທີ່ກ່ຽວຂ້ອງກັບການພິສູດ ແລະ ການນຳໃຊ້ແນວພັນທີ່ເປັນໄພຄຸກຄາມ ຫຼື ຕ່າງຖິ່ນ. |
| 6.6. ຫ້າມເຈົ້າຂອງປ່າໄມ້ຫັນປ່ຽນ ປ່າໄມ້ທຳມະຊາດ ແລະ ພື້ນທີ່ປ່າໄມ້ທີ່ມີຄວາມສຳຄັນທາງດ້ານລະບົບນິເວດ ລວມທັງປ່າໄມ້ຊຸດໂຊມ ໄປເປັນປ່າປູກ ຫຼື ຈຸດປະສົງນຳໃຊ້ທີ່ດິນອື່ນໆ. | 6.6.1. ຫ້າມຫັນປ່ຽນປ່າທຳມະຊາດ ແລະ ປ່າໄມ້ທີ່ສຳຄັນທາງນິເວດວິທະຍາ ໄປເປັນການນຳໃຊ້ທີ່ດິນ ເພື່ອຈຸດປະສົງອື່ນ ຍົກເວັ້ນແຕ່ໃນສະພາບການທີ່ເໝາະສົມ:<br>ກ) ແມ່ນປະຕິບັດຕາມນະໂຍບາຍ ແລະ ນິຕິກຳຂອງ ສປປ ລາວ ແລະ ພາກພື້ນ ທີ່ຈະນຳໃຊ້ທີ່ດິນ ແລະ ການຄຸ້ມຄອງປ່າໄມ້ ທີ່ເປັນຜົນມາຈາກການວາງແຜນນຳໃຊ້ທີ່ດິນແຫ່ງຊາດ ຫຼື ພາກພື້ນ ທີ່ຄຸ້ມຄອງໂດຍລັດຖະບານ ຫຼື ອຳນາດການປົກຄອງທ້ອງຖິ່ນ ລວມທັງການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ;<br>ຂ) ມີສັດສ່ວນນ້ອຍ (ບໍ່ເກີນ 5%) ຂອງປະເພດປ່າໄມ້ທີ່ຢູ່ໃນເຂດທີ່ໄດ້ຮັບການຢັ້ງຢືນ;<br>ຄ) ບໍ່ມີຜົນກະທົບທາງລົບຕໍ່ພື້ນທີ່ປ່າໄມ້ທີ່ສຳຄັນທາງ ດ້ານນິເວດວິທະຍາ, ເຂດວັດທະນະທຳ ແລະ ສັງຄົມ, ຫຼື ເຂດສະຫງວນອື່ນໆ;<br>ງ) ບໍ່ທຳລາຍພື້ນທີ່ ທີ່ມີການເກັບກັກກາກບອນໃນປະລິມານສູງ;<br>ຈ) ປະກອບສ່ວນເຂົ້າໃນການອະນຸລັກໃນໄລຍະຍາວ, ມີຜົນປະໂຫຍດທາງເສດຖະກິດ ແລະ ສັງຄົມ. |

| | |
|---|---|
| | 6.6.2. ຕ້ອງຮັບປະກັນວ່າການປູກປ່າໃນເຂດດິນປ່າໄມ້ ທີ່ບໍ່ມີຄວາມສຳຄັນທາງດ້ານນິເວດວິທະຍາ ຕ້ອງບໍ່ຖືກດຳເນີນການ ຍົກເວັ້ນແຕ່ໃນສະຖານະການທີ່ເໝາະສົມໃນການຫັນປ່ຽນ:<br><br>ກ) ແມ່ນປະຕິບັດຕາມນະໂຍບາຍ ແລະ ນິຕິກຳຂອງ ສປປ ລາວ ແລະ ພາກພື້ນ ທີ່ຈະນຳໃຊ້ທີ່ດິນ ແລະ ການຄຸ້ມຄອງປ່າໄມ້ ທີ່ເປັນຜົນມາຈາກການວາງແຜນນຳໃຊ້ທີ່ດິນ ແຫ່ງຊາດ ຫຼື ພາກພື້ນ ທີ່ຄຸ້ມຄອງໂດຍລັດຖະບານ ຫຼື ອຳນາດການປົກຄອງທ້ອງຖິ່ນ ລວມທັງການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ;<br><br>ຂ) ຖືກສ້າງຕັ້ງຂຶ້ນ ຕາມພື້ນຖານການຕັດສິນໃຈໃນຂະບວນທີ່ຜູ້ມີສ່ວນກ່ຽວຂ້ອງທີ່ໄດ້ ຮັບຜົນກະທົບ ມີໂອກາດປະກອບສ່ວນເຂົ້າໃນການຕັດສິນໃຈໃນການຫັນປ່ຽນຜ່ານຂະບວນການປຶກສາຫາລືທີ່ໂປ່ງໃສ ແລະ ມີສ່ວນຮ່ວມ;<br><br>ຄ) ບໍ່ມີຜົນກະທົບທາງລົບຕໍ່ລະບົບນິເວດວິທະຍາທີ່ບໍ່ແມ່ນປ່າໄມ້ ທີ່ຖືກຄ້ ຸມຄອງ ຫຼື ທີ່ຢູ່ໃນສະພາບຄວາມສ່ຽງ (ລວມທັງສິ່ງທີ່ບອກວ່າມີຄວາມອ່ອນໄຫວ, ຫາຍາກ ຫຼື ກຳລັງຈະສູນພັນ), ເນື້ອທີ່ທີ່ມີຄວາມສຳຄັນທາງວັດທະນະທຳ ແລະ ສັງຄົມ, ຖິ່ນທີ່ຢູ່ອາໃສທີ່ສຳຄັນຂອງສັດທີ່ຖືກຄຸ້ມຄອງ ຫຼື ເນື້ອທີ່ທີ່ຖືກຄຸ້ມຄອງແບບພິເສດ; ແລະ<br><br>ງ) ມີສັດສ່ວນນ້ອຍໃນລະບົບນິເວດປ່າໄມ້ທີ່ບໍ່ມີຄວາມສຳຄັນ ທາງດ້ານນິເວດວິທະຍາ ທີ່ຄຸ້ມຄອງໂດຍອົງການຈັດຕັ້ງ;<br><br>ຈ) ບໍ່ທຳລາຍພື້ນທີ່ ທີ່ມີການເກັບກັກກາກບອນສູງ;<br><br>ສ) ປະກອບສ່ວນເຂົ້າໃນການອະນຸລັກໃນໄລຍະຍາວ, ຜົນປະໂຫຍດທາງເສດຖະກິດ, ແລະ ສັງຄົມ;<br><br>ຊ) ເນື້ອທີ່ປ່າປູກທີ່ຫັນປ່ຽນເປັນລະບົບນິເວດປ່າໄມ້ທີ່ບໍ່ມີຄວາມສຳຄັນ ຫຼັງຈາກວັນທີ 31 ທັນວາ 2024 ທີ່ບໍ່ກົງຕາມ ຂໍ້ກຳນົດ ແລະ ບໍ່ເຂົ້າເງື່ອນໄຂທີ່ໄດ້ຮັບການຢັ້ງຢືນ; ຍົກເວັ້ນ ໃນກໍລະນີ ທີ່ການຫັນປ່ຽນຕອບກົງກັບເງື່ອນໄຂທັງໝົດທີ່ລະບຸໄວ້ໃນຂໍ້ ກ ແລະ ງ ຂ້າງເທິງ; |
| | 6.6.3. ຕ້ອງເກັບຮັກສາເອກະສານ ແລະ ໄຟລ໌ເອກະສານ ທີ່ກ່ຽວຂ້ອງກັບລາຍລະອຽດ ແລະ ການປະເມີນມູນຄ່າການອະນຸລັກ ຂອງພື້ນທີ່ປ່າທີ່ຖືກຫັນປ່ຽນ (ຖ້າມີ). |
| **ຫຼັກການ 7:** ການ**ຕິດຕາມ ແລະ ກວດກາ ປ່າໄມ້ ຕາມແຜນການຄຸ້ມຄອງປ່າໄມ້ ແບບຍືນຍົງ** | |

| | |
|---|---|
| 7.1. ເຈົ້າຂອງປ່າໄມ້ ຕ້ອງ ສ້າງແຜນການຕິດຕາມກວດກາ ແລະ ປະເມີນຜົນກິດຈະກຳປ່າໄມ້. | 7.1.1. ກຳນົດຕົວຊີ້ວັດການຕິດຕາມ ແລະ ປະເມີນຜົນ; ກຳນົດຄວາມຄືບໜ້າ ແລະ ແຫຼ່ງທຶນໃນການປະຕິບັດການຕິດຕາມ ແລະ ປະເມີນຜົນ ປະຈຳປີ ສຳລັບກິດຈະກຳປ່າໄມ້; |
| | 7.1.2. ຕ້ອງມີ ຂັ້ນຕອນ, ຕາຕະລາງບັນທຶກ ແລະ ຕົວຊີ້ວັດ ການຕິດຕາມ ແລະ ປະເມີນຜົນ ໃຫ້ເໝາະສົມກັບແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ; |
| | 7.1.3. ການຕິດຕາມ, ປະເມີນຜົນ ແລະ ລາຍງານ ຕ້ອງມອບໝາຍໃຫ້ຜູ້ອອກແຮງງານຂອງເຈົ້າຂອງປ່າໄມ້/ໜ່ວຍງານຄຸ້ມຄອງປ່າໄມ້; |
| | 7.1.4. ຕ້ອງວາງແຜນ, ສ້າງ, ປະຕິບັດ ແລະ ຮັກສາ ໂຄງການກວດສອບ ລວມທັງ ຄວາມຖີ່, ວິທີການ, ຄວາມຮັບຜິດຊອບ, ຂໍ້ກຳນົດຕ່າງໆ ໃນການວາງແຜນ ແລະ ການລາຍງານ, ເຊິ່ງຈະຕ້ອງພິຈາລະນາຄວາມສຳຄັນຂອງຂະບວນການທີ່ ກ່ຽວຂ້ອງ ແລະ ຜົນຂອງການກວດສອບຜ່ານມາ; |
| | 7.1.5. ຕ້ອງກຳນົດ ມາດຖານ ແລະ ຂອບເຂດ ການກວດສອບແຕ່ລະຄັ້ງ; |
| | 7.1.6. ຕ້ອງຄັດເລືອກເອົາຜູ້ກວດສອບ ແລະ ດຳເນີນການກວດກາ ເພື່ອຮັບປະກັນຄວາມທ່ຽງທຳ ແລະ ເປັນທຳ ຂອງຂະບວນການກວດກາ; |
| | 7.1.7. ຕ້ອງຮັບປະກັນວ່າຜົນຂອງການກວດສອບໄດ້ຖືກລາຍງານ ໃຫ້ຜູ້ບໍລິຫານທີ່ກ່ຽວຂ້ອງ; |
| | 7.1.8. ຕ້ອງເກັບຂໍ້ມູນ ແລະ ເອກະສານ ໄວ້ເປັນຫຼັກຖານຂອງການຈັດຕັ້ງ ປະຕິບັດໂຄງການກວດສອບ ແລະ ຜົນການກວດສອບ. |
| 7.2. ເຈົ້າຂອງປ່າໄມ້ **ຕ້ອງ ປະຕິບັດແຜນການຕິດຕາມ ແລະ ປະເມີນຜົນ** ສຳລັບກິດຈະກຳປ່າໄມ້. | 7.2.1. ຕ້ອງມີຂໍ້ມູນປະຈຳປີ ລວມມີ: ບໍລິມາດການຂຸດຄົ້ນປະຈຳປີ, ເຄື່ອງປ່າຂອງດົງ, ການປ່ຽນແປງຂອງພື້ນທີ່ປ່າໄມ້ ແລະ ການຈະເລີນເຕີບໂຕຂອງປ່າປູກ; |
| | 7.2.2. ຕ້ອງມີຂໍ້ມູນຂອງທຸກ 5 ປີ ລວມທັງ ການຈະເລີນເຕີບໂຕ, ການຟື້ນຟູຕາມທຳມະຊາດ ແລະ ອົງປະກອບຂອງຊະນິດພັນໄມ້ໃນປ່າໄມ້; |
| | 7.2.3. ຕ້ອງມີຂໍ້ມູນ ແລະ ລາຍງານ ກ່ຽວກັບການປົກປັກຮັກສາ ຫຼື ອະນຸລັກ ປ່າໄມ້ທີ່ມີຄວາມສຳຄັນດ້ານນິເວດວິທະຍາ ແລະ ຊະນິດທີ່ຖືກຂຸກຄາມ;(ເປັນປະຈຳ) |
| | 7.2.4. ຕ້ອງເປັນກິດຈະກຳທີ່ກ່ຽວຂ້ອງກັບການລະບາດຂອງພະຍາດ ແລະ ສັດຕູພືດ, ການເຊາະເຈື່ອນຂອງດິນ ແລະ ຄວາມສ່ຽງອື່ນໆທີ່ບໍ່ໄດ້ຄາດຄະເນໄວ້; |

| | |
|---|---|
| | 7.2.5. ຕ້ອງຕິດຕາມຜົນກະທົບດ້ານ ສິ່ງແວດລ້ອມ ແລະ ສັງຄົມ ຂອງກິດຈະກໍາ ປ່າໄມ້; |
| | 7.2.6. ຕ້ອງມີຂໍ້ມູນຕົ້ນທຶນປະຈໍາປີ ແລະ ຜົນປະໂຫຍດ ກ່ຽວກັບກິດຈະກໍາປ່າໄມ້; |
| | 7.2.7. ຕ້ອງລາຍງານ ແລະ ເຜີຍແຜ່ ຜົນການຕິດຕາມກວດກາ ແລະ ປະເມີນຜົນ ກ່ຽວກັບແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ ຕໍ່ສາທາລະນະຊົນ; |
| | 2.2.8. ຕ້ອງຮັບປະກັນວ່າ ເງື່ອນໄຂການເຮັດວຽກຈະໄດ້ຮັບການກວດກາເປັນ ປະຈໍາ ແລະ ດັດປັບຕາມຄວາມຈໍາເປັນ. |
| 7.3. ເຈົ້າຂອງປ່າໄມ້ ຕ້ອງມີ ລະບົບການຄຸ້ມຄອງ ແລະ ເກັບຮັກສາເອກະສານທີ່ ກ່ຽວຂ້ອງກັບທຸລະກິດປ່າ ໄມ້. | 7.3.1. ຕ້ອງມີລະບົບການຄຸ້ມຄອງຂໍ້ມູນປ່າໄມ້ ແລະ ຊັບພະຍາກອນ ແລະ ແຜນທີ່ ສະຖານະພາບປ່າໄມ້; |
| | 7.3.2. ຕ້ອງມີ ລະບົບການຄຸ້ມຄອງກິດຈະກໍາປ່າໄມ້; |
| | 7.3.3.ຕ້ອງມີ ລະບົບການຄຸ້ມຄອງເອກະສານ/ເອກະສານ ຜະລິດຕະພັນປ່າໄມ້ ລວມທັງ ທຸກຂັ້ນຕອນຈາກການ ຂຸດຄົ້ນ, ຂົນສົ່ງ, ປຸງແຕ່ງ (ຖ້າມີ) ແລະ ການຂາຍ ຜະລິດຕະພັນ ເພື່ອຮັບປະກັນການກວດກາຄືນຂອງຜະລິດຕະພັນປ່າໄມ້ ຕາມຂໍ້ກໍານົດ ຂອງກົດໝາຍ ວ່າດ້ວຍປ່າໄມ້. |
| 7.4. ເຈົ້າຂອງປ່າໄມ້ ຕ້ອງ ທົບທວນຄືນ ແລະ ປັບປຸງ ລະບົບການຄຸ້ມຄອງ | 7.4.1. ຕ້ອງດໍາເນີນການທົບທວນການຄຸ້ມຄອງປະຈໍາປີ, ຢ່າງໜ້ອຍ ປະກອບມີ:<br>ກ) ສະຖານະ ການປະຕິບັດຈາກການທົບທວນຄືນການຄຸ້ມຄອງໃນໄລຍະຜ່ານມາ;<br>ຂ) ການປ່ຽນແປງຂອງ ບັນຫາພາຍນອກ ແລະ ພາຍໃນທີ່ກ່ຽວຂ້ອງກັບ ລະບົບການ ຄຸ້ມຄອງ;<br>ຄ) ຂໍ້ມູນ ກ່ຽວກັບການປະຕິບັດຂອງເຈົ້າຂອງປ່າໄມ້, ປະກອບມີ ທ່າອ່ຽງໃນ:<br>- ຄວາມບໍ່ສອດຄ່ອງ ແລະ ການແກ້ໄຂບັນຫາ;<br>- ການຕິດຕາມ ແລະ ການວັດແທກຜົນໄດ້ຮັບ;<br>- ຜົນການກວດສອບ;<br>ງ) ໂອກາດສໍາລັບການປັບປຸງຢ່າງຕໍ່ເນື່ອງ; |

| | |
|---|---|
| | 7.4.2. ຕ້ອງຮັບປະກັນວ່າຜົນໄດ້ຮັບຂອງການທົບທວນຄືນການຄຸ້ມຄອງ ຈະປະກອບ  ມີການຕັດສິນໃຈທີ່ກ່ຽວຂ້ອງກັບໂອກາດການປັບປຸງຢ່າງຕໍ່ເນື່ອງ ແລະ ຄວາມຕ້ອງ ການໃດໜຶ່ງ ສໍາລັບການປ່ຽນແປງລະບົບການຄຸ້ມຄອງ; |
| | 7.4.3. ຕ້ອງເກັບຮັກສາຂໍ້ມູນເອກະສານໄວ້ເປັນຫຼັກຖານຂອງຜົນການທົບ ທວນຄືນ ການຄຸ້ມຄອງ. |
| 7.5. ເຈົ້າຂອງປ່າໄມ້ ຕ້ອງ ດໍາເນີນການແກ້ໄຂບັນຫາທີ່ ບໍ່ສອດຄ່ອງ | 7.5.1. ຕ້ອງຮັບປະກັນວ່າ ເມື່ອມີຄວາມບໍ່ສອດຄ່ອງກັນເກີດຂຶ້ນ, ເຈົ້າຂອງປ່າໄມ້ ຈະຕ້ອງ:<br>ກ) ກໍາຈັດຄວາມບໍ່ສອດຄ່ອງ ແລະ ໂດຍບັງຄັບໃຊ້:<br>- ປະຕິບັດການຄວບຄຸມ ແລະ ແກ້ໄຂ;<br>- ຈັດການກັບຜົນສະທ້ອນ;<br>ຂ) ປະເມີນຄວາມຈໍາເປັນໃນການປະຕິບັດ ເພື່ອລຶບລ້າງສາເຫດຂອງ ຄວາມບໍ່ສອດ ຄ່ອງ, ເພື່ອບໍ່ໃຫ້ມັນເກີດຂຶ້ນຢູ່ບ່ອນອື່ນ, ໂດຍ:<br>- ການທົບທວນຄືນຄວາມບໍ່ສອດຄ່ອງ;<br>- ກໍານົດສາເຫດຂອງຄວາມບໍ່ສອດຄ່ອງ;<br>- ກໍານົດວ່າມີຄວາມບໍ່ສອດຄ່ອງທີ່ຄ້າຍຄືກັນ, ຫຼື ອາດຈະເກີດຂຶ້ນ;<br>- ຈັດຕັ້ງປະຕິບັດ ຫຼື ດາເນີນການຕ່າງໆທີ່ຈໍາເປັນ;<br>- ກວດກາຄືນປະສິດທິຜົນຂອງການປະຕິບັດການແກ້ໄຂ;<br>ຄ) ປ່ຽນແປງລະບົບການຄຸ້ມຄອງ, ຖ້າຈໍາເປັນ |
| | 7.5.2 ຕ້ອງຮັບປະກັນວ່າ ວິທີການແກ້ໄຂຕ້ອງເໝາະສົມກັບຜົນກະທົບຂອງ ຄວາມບໍ່ສອດຄ່ອງທີ່ພົບ; |
| | 7.5.3. ຕ້ອງເກັບຂໍ້ມູນເອກະສານໄວ້ເປັນຫຼັກຖານຂອງ<br>ກ) ລັກສະນະຂອງຄວາມບໍ່ສອດຄ່ອງ ແລະ ການປະຕິບັດຕໍ່ໆໄປ;<br>ຂ) ຜົນໄດ້ຮັບຂອງການປະຕິບັດການແກ້ໄຂໃດໆ. |

# ເອກະສານຊ້ອນທ້າຍ 1: ການຄຸ້ມຄອງເຄື່ອງປ່າຂອງດົງ ແບບຍືນຍົງ

**ພາກສະເໜີ**

ເອກະສານຊ້ອນທ້າຍ 1 ອະທິບາຍ ແລະ ໃຫ້ຂໍ້ກໍານົດ ກ່ຽວກັບການນໍາໃຊ້ມາດຕະຖານການຄຸ້ມຄອງ ເຄື່ອງປ່າຂອງດົງ ແບບຍືນຍົງ (LFCS ST 1003: 2025).

ເພື່ອນໍາໃຊ້ເຂົ້າໃນການຄຸ້ມຄອງເຄື່ອງປ່າຂອງດົງ, ບັນດາຂໍ້ກໍານົດທັງໝົດທີ່ກ່ຽວຂ້ອງກັບ ຫຼັກການ ແລະ ຂໍ້ກໍານົດ ການຄຸ້ມຄອງປ່າໄມ້ ແບບຍືນຍົງ (LFCS ST 1003: 2025) ຈະຖືກນໍາໃຊ້ກ່ອນ, ຍົກເວັ້ນບັນດາຂໍ້ກໍານົດສະເພາະ ໃນພາກທີ I ແລະ II ຂອງເອກະສານຊ້ອນທ້າຍ 1. ປະກອບມີຈໍານວນພາກ ຕໍ່ໄປນີ້:

## I. ເງື່ອນໄຂ ການຄຸ້ມຄອງຜະລິດຕະພັນເຄື່ອງປ່າຂອງດົງ:

| ເງື່ອນໄຂ | ຕົວຊີ້ວັດ |
|---|---|
| **ຫຼັກການ 1: ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ** | |
| 1.1. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ກ່ຽວກັບສິດນໍາໃຊ້ ທີ່ດິນປ່າໄມ້ ແລະ ປ່າໄມ້. | 1.1.1. ເຄື່ອງປ່າຂອງດົງ ຕ້ອງມີໃບຢັ້ງຢືນ ສິດນໍາໃຊ້ທີ່ດິນ ທີ່ຈະແຈ້ງ ຫຼື ຂໍ້ຕົກລົງ ການຈັດສັນທີ່ດິນ ຫຼື ສັນຍາ ເຊົ່າທີ່ດິນ /ປ່າໄມ້ ຫຼື ເອກະສານຢັ້ງຢືນ ທີ່ໄດ້ຮັບການອະນຸມັດຈາກ ອໍານາດການ ປົກຄອງທ້ອງຖິ່ນ; ລວມທັງ ສິດໃນການ ຂຸດຄົ້ນ ແລະ ປຸງແຕ່ງຜະລິດຕະ ພັນຈາກເຄື່ອງປ່າຂອງດົງ ຢູ່ໃນຂອບເຂດ ການຄຸ້ມຄອງຂອງ ເຈົ້າຂອງປ່າໄມ້; |
| | 1.1.2. ເຄື່ອງປ່າຂອງດົງ ເອກະສານຢັ້ງຢືນທາງການ ໂດຍອົງການປົກຄອງທ້ອງຖິ່ນ ເພື່ອບໍ່ໃຫ້ມີຂໍ້ຂັດແຍ້ງ ກ່ຽວກັບສິດນໍາໃຊ້ທີ່ດິນ ໃນກໍລະນີ ເນື້ອທີ່ດິນປູກພືດ ໂດຍສະເພາະເຄື່ອງປ່າຂອງດົງ ແລະ ນໍາໃຊ້ຕາມການຖືຄອງທີ່ດິນຕາມປະເພນີ ຫຼື ສິດນໍາໃຊ້ທີ່ດິນຕາມ ປະເພນີ. |
| 1.3. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ ປ່າໄມ້ ແລະ ໄມ້ທີ່ຖືກກົດໝາຍ. | 1.3.3. ເຄື່ອງປ່າຂອງດົງ ຕ້ອງຮັບປະກັນ ເນື້ອໃນລາຍລະອຽດຂອງ ແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ ປະກອບມີ: ຜົນການປະເມີນ ປະລິມານເຄື່ອງປ່າຂອງດົງ ທີ່ຄາດວ່າຈະມີການຂຸດຄົ້ນ ແລະ ນໍາໃຊ້; ຈະຕ້ອງຄິດໄລ່ ແລະ ວາງແຜນການເກັບກູ້ຜົນຜະລິດ ຈາກປ່າໄມ້ ແບບ ຍືນຍົງ ໂດຍອີງໃສ່ຂໍ້ມູນ ແລະ ຜົນການປະເມີນທີ່ຖືກຕ້ອງທີ່ສຸດ ທີ່ມີຢູ່ໃນປະຈຸບັນ ເພື່ອເຮັດໃຫ້ປະລິມານການຂຸດຄົ້ນ ບໍ່ເກີນກໍາລັງການຜະລິດຂອງປ່າໄມ້ |

| | |
|---|---|
| | ຜົນກະທົບທີ່ອາດເກີດຂຶ້ນຈາກການຂຸດຄົ້ນເຄື່ອງປ່າ ຂອງດົງຕໍ່ ຊະນິດອື່ນ ແລະ ໃນທາງກົງກັນຂ້າມ; ຕ້ອງມີການເຄື່ອນໄຫວ ຕິດຕາມກວດກາ ແລະ ປະເມີນຜົນ ການຂຸດຄົ້ນ ແລະ ນຳໃຊ້ ຜະລິດຕະ ພັນເຄື່ອງປ່າຂອງດົງ<br>ເພື່ອສ້າງແຜນການດັດສົມປະລິ ມານການເກັບກູ້<br>ເມື່ອມີຄວາມສ່ຽງ ຕໍ່ການເສື່ອມໂຊມຂອງເຄື່ອງປ່າຂອງດົງ; |
| | 1.3.4. ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມລະບຽບການດ້ານ ເອກະ ສານ, ຂັ້ນຕອນການຂຸດຄົ້ນ ແລະ ການຄຸ້ມຄອງເຄື່ອງ ປ່າຂອງດົງທີ່ ອອກໂດຍ ກະຊວງກະສິກຳ ແລະ ສິ່ງແວດລ້ອມ; |
| 1.4. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດບັນດາສົນທິສັນ ຍາ ແລະ ສັນຍາ ສາກົນ ທີ່ ສປປ ລາວ ເປັນພາຄີ. | 1.4.1. ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ, ໃນນັ້ນມີ: ໃບອະນຸຍາດ ຂຸດຄົ້ນ ແລະ ຄ້າຂາຍ ເຄື່ອງປ່າຂອງດົງ ປະເພດໃດໜຶ່ງ ໃນບັນຊີ CITES; ຕ້ອງປະຕິບັດຕາມ ສົນທິສັນຍາ ແລະ ສັນຍາ ສາກົນອື່ນ ທີ່ກ່ຽວຂ້ອງກັບ ການ ຂຸດຄົ້ນ, ນຳໃຊ້, ຂົນສົ່ງ ແລະ ການຄ້າເຄື່ອງປ່າຂອງດົງ. |
| **ຫຼັກການ 2: ການພົວພັນກັບຊຸມຊົນ, ສິດຂອງຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ/ຊົນເຜົ່າ** | |
| 2.1. ເຈົ້າຂອງປ່າໄມ້ ຕ້ອງຮັບຮູ້ ແລະ ເຂົ້າ ໃຈ ເຖິງ ສິດທາງດ້ານກົດໝາຍ ແລະ ສິດຕາມ ປະເພນີຂອງຊຸມຊົນ ແລະ ປະຊາຊົນ ທ້ອງຖິ່ນຕໍ່ກັບປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງເຂົາເຈົ້າ. | 2.1.1. ເຄື່ອງປ່າຂອງດົງ ຕ້ອງເຄົາລົບສິດການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນ ແລະ ປ່າໄມ້ ຕາມສິດນຳໃຊ້ທີ່ຖືກຕ້ອງຕາມ ກົດໝາຍ ແລະ ສິດຕາມຮີດຄອງປະເພນີຂອງຊຸມຊົນ ແລະ ປະຊາຊົນທ້ອງຖິ່ນທີ່ຢູ່ອາໄສໃນເຂດນັ້ນ; ຕ້ອງໄດ້ປຶກສາຫາລື ກັບຊຸມຊົນ, ປະຊາຊົນທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອກຳນົດພື້ນທີ່ ແລະ ຊະນິດຂອງເຄື່ອງປ່າຂອງດົງ ທີ່ອະ ນຸຍາດໃຫ້ຂຸດຄົ້ນ ແລະ ນຳໃຊ້ ຕາມລະບຽບກົດໝາຍ; ຕ້ອງມີແຜນການ ຄຸ້ມຄອງ, ຂຸດຄົ້ນ ແລະ ນຳໃຊ້ ພື້ນທີ່ ແລະ ປະເພດເຄື່ອງປ່າຂອງດົງ ທີ່ກຳນົດໄວ້ໃນແຜນການຄຸ້ມຄອງ ປ່າໄມ້ແບບຍືນຍົງ; ຕ້ອງມີແຜນການອະນຸລັກເຄື່ອງປ່າຂອງດົງ ທີ່ບໍ່ອະນຸຍາດໃຫ້ຂຸດຄົ້ນ ແລະ ນຳໃຊ້ຕາມລະບຽບກົດໝາຍ; |
| 2.5. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດຕາມຂໍ້ກຳນົດ ຂອງກົດໝາຍ ວ່າດ້ວຍການຮ້ອງທຸກ ແລະ ຄ່າຊົດ ເຊີຍ ເມື່ອການເຄື່ອນໄຫວ ຫຼື ກິດຈະກາປ່າໄມ້ທີ່ສົ່ງ ຜົນກະທົບທາງລົບຕໍ່ຊີວິດ, ສຸຂະພາບ, ທີ່ດິນ, ປ່າ | 2.5.1. ເຄື່ອງປ່າຂອງດົງຕ້ອງກຳນົດຜົນກະທົບທາງລົບທີ່ອາດ ເກີດຂຶ້ນໃນການ ຄຸ້ມຄອງ, ຂຸດຄົ້ນ, ຂົນສົ່ງ ແລະ ການນຳໃຊ້ ເຄື່ອງປ່າຂອງດົງ ຕໍ່ການດຳລົງຊີວິດ, ສຸຂະພາບ, ທີ່ດິນ, ປ່າໄມ້ ແລະ ຊັບສິນອື່ນ ຂອງຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ; ມີ |

| | |
|---|---|
| ໄມ້ ແລະ ຊັບສິນອື່ນໆຂອງຊຸມຊົນ ແລະ ປະຊາຊົນທ້ອງຖິ່ນ | ມາດຕະການ ປ້ອງກັນ, ກົນໄກແກ້ໄຂ**ຄໍາຮ້ອງຮຽນ** ແລະ ການຊົດເຊີຍຜົນເສຍຫາຍທີ່ເກີດຂຶ້ນໃນການດໍາເນີນກິດຈະກໍາກ່ຽວກັບປ່າໄມ້ອື່ນ; |
| | 2.5.5ເຄື່ອງປ່າຂອງດົງຕ້ອງຮັບຜິດຊອບໃນການບໍາລຸງຮັກສາພື້ນຖານໂຄງລ່າງໃຫ້ແກ່ຊຸມຊົນທ້ອງຖິ່ນ ເມື່ອມີການນໍາໃຊ້ເຂົ້າໃນການ ຄຸ້ມຄອງ, ຂຸດຄົ້ນ ແລະ ຂົນສົ່ງ ເຄື່ອງປ່າຂອງດົງ; ຕ້ອງໃຫ້ການ ຊ່ວຍເຫຼືອເພີ່ມເຕີມ ເພື່ອຍົກລະດັບພື້ນຖານໂຄງລ່າງເຫຼົ່ານີ້ (ຖ້າມີ). |
| **ຫຼັກການ 3: ເຈົ້າຂອງປ່າໄມ້ ຕ້ອງຮັບປະກັນ ສິດ ແລະ ເງື່ອນໄຂ ການເຮັດວຽກໃຫ້ຜູ້ແກ່ຜູ້ອອກແຮງງານ** | |
| | 3.2.1ເຄື່ອງປ່າຂອງດົງຕ້ອງສະໜອງ ແລະ ແນະນໍາ ວິທີການນໍາໃຊ້ ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນໃຫ້ແກ່ຜູ້ອອກແຮງງານ (ລວມທັງຜູ້ຮັບເໝົາ) ຕາມເງື່ອນໄຂການເຮັດວຽກທີ່ໄດ້ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ; |
| 3.2. ເຈົ້າຂອງປ່າຕ້ອງຮັບປະກັນ ທຸກ ເງື່ອນໄຂຄວາມປອດໄພໃນການເຮັດວຽກໃຫ້ແກ່ຜູ້ອອກແຮງງານຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ. | 3.2.2. ເຄື່ອງປ່າຂອງດົງຕ້ອງຈັດໃຫ້ມີການຝຶກອົບຮົມວິທີການນໍາໃຊ້, ການເກັບຮັກສາວັດຖຸ ແລະ ອຸປະກອນໃຫ້ມີຄວາມປອດໄພ ເພື່ອປ້ອງກັນການເກີດອຸປະຕິເຫດ ແລະ ອັນຕະລາຍ ຕໍ່ກັບຜູ້ອອກແຮງງານ; |
| | 3.2.3. ເຄື່ອງປ່າຂອງດົງ: ຕ້ອງໃຫ້ຄໍາແນະນໍາ ກ່ຽວກັບສຸຂະອະນາໄມທາງດ້ານອາຫານ ແລະ ຄວາມປອດໄພ, ແລະ ການນໍາໃຊ້ສານເຄມີ ໃຫ້ແກ່ຜູ້ອອກແຮງງານ (ລວມທັງຜູ້ຮັບເໝົາ) ທີ່ມີຄວາມຮັບຜິດຊອບໃນການ ຂຸດຄົ້ນ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ ເພື່ອຮັບປະກັນຄວາມ ປອດໄພຕໍ່ສຸຂະພາບ ຂອງຜູ້ອອກແຮງງານ ແລະ ຜູ້ນໍາໃຊ້ເຄື່ອງປ່າຂອງດົງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ. |
| 3.4. ເຈົ້າຂອງປ່າໄມ້ ຕ້ອງ ມີ ແລະ ຮັກສາ ກົນໄກໃນການແກ້ໄຂຄໍາຮ້ອງທຸກ ແລະ ການຊົດເຊີຍໃຫ້ແກ່ຜູ້ອອກແຮງງານໃນກໍລະນີ ທີ່ມີການສູນເສຍ ຫຼື ຄວາມເສຍຫາຍຂອງເຂົາເຈົ້າ. | 3.4.1. ເຄື່ອງປ່າຂອງດົງ ຕ້ອງປະຕິບັດມາດຕະການປ້ອງກັນການສູນເສຍ, ຄວາມເສຍຫາຍ ແລະ ຄວາມສ່ຽງ ຕໍ່ສຸຂະພາບຂອງຜູ້ອອກແຮງງານ ເມື່ອປະຕິບັດວຽກງານ ຄຸ້ມຄອງ, ຂຸດຄົ້ນ, ຂົນສົ່ງ ແລະ ນໍາໃຊ້ ເຄື່ອງປ່າຂອງດົງ. |

| ຫຼັກການ 4: ການ ຄຸ້ມຄອງ, ນຳໃຊ້ ແລະ ພັດທະນາ ປ່າໄມ້ແບບຍືນຍົງ | |
|---|---|
| 4.2. ເຈົ້າຂອງປ່າໄມ້ ຕ້ອງ ຜະລິດ ແລະ ນຳໃຊ້ ແນວພັນ ແລະ ເບ້ຍໄມ້ ໃຫ້ຖືກ ຕ້ອງຕາມ ກົດໝາຍ ວ່າດ້ວຍແນວພັນພືດປ່າ ແລະ ແນວພັນໄມ້ | 4.2.1. ເຄື່ອງປ່າຂອງດົງ ຕ້ອງປະຕິບັດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການຄຸ້ມຄອງພືດປ່າ ເພື່ອພິສູດ ທົດລອງ, ຜະລິດ, ນຳເຂົ້າ ແລະ ນຳໃຊ້ ເຄື່ອງປ່າຂອງດົງ; |
| 4.3. ເຈົ້າຂອງປ່າໄມ້ ຕ້ອງນຳໃຊ້ເຕັກນິກວະນະ ວັດວິທະຍາທີ່ເໝາະສົມກັບເປົ້າໝາຍຂອງແຜນ ການຄຸ້ມຄອງປ່າໄມ້ແບບຍືນຍົງ. | 4.3.1. ເຄື່ອງປ່າຂອງດົງ ຊະນິດພັນເຄື່ອງປ່າຂອງດົງ ທີ່ຄັດເລືອກມາປູກ ຕ້ອງແທດເໝາະກັບສະພາບທີ່ຕັ້ງ ແລະ ຈຸດປະສົງຂອງການຄຸ້ມຄອງປ່າໄມ້ແບບຍືນຍົງ; |
| | 4.3.2 ເຄື່ອງປ່າຂອງດົງ ຕ້ອງນຳໃຊ້ເຕັກນິກ, ວະນະວັດວິທະຍາ ທີ່ເໝາະສົມກັບ ລັກສະນະນິເວດວິທະຍາຂອງຊະນິດເຄື່ອງປ່າຂອງດົງ ແລະ ສະພາບພື້ນທີ່ ທີ່ແຕກຕ່າງກັນ; |
| | 4.3.3. ເຄື່ອງປ່າຂອງດົງ ຕ້ອງນຳໃຊ້ການຄຸ້ມຄອງພື້ນທີ່ ທີ່ເໝາະສົມ ສຳລັບການປູກ, ການດູແລຮັກສາ ແລະ ການຂຸດຄົ້ນເຄື່ອງປ່າຂອງດົງ; |
| 4.4. ເຈົ້າຂອງປ່າໄມ້ ຕ້ອງມີການຄຸ້ມຄອງທີ່ມີຫຼາຍ ກິດຈະກຳ ທີ່ພົວພັນເຖິງການຜະລິດ ແລະ ການດຳເນີນທຸລະກິດ ເພື່ອເຮັດໃຫ້ປ່າໄມ້ມີຜົນປະໂຫຍດ ສູງສຸດ. | 4.4.1. ເຄື່ອງປ່າຂອງດົງ ເພີ່ມທະວີບັນດາກິດຈະກຳການ ຜະລິດທີ່ເຊື່ອມໂຍງກັນໃນລະບົບຕ່ອງໂສ້ມູນຄ່າ, ການ ຕະຫຼາດ ແລະ ການບໍລິໂພກຜະລິດ ເຄື່ອງປ່າຂອງດົງ. |
| 4.7. ເຈົ້າຂອງປ່າໄມ້ ຕ້ອງຂຸດຄົ້ນຜະລິດຕະພັນ ຈາກປ່າໄມ້ຢ່າງເໝາະສົມ ເພື່ອຮັກສາຊັບພະຍາ ກອນປ່າໃນໄລຍະຍາວ. | 4.7.1. ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມລະບຽບການ ຄຸ້ມຄອງປ່າໄມ້ ແລະ ບົດແນະນຳຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ເມື່ອດຳເນີນການຂຸດຄົ້ນເຄື່ອງປ່າຂອງດົງ; |
| | 4.7.2. ເຄື່ອງປ່າຂອງດົງ ຕ້ອງຮັບຮູ້ວ່າ ປະລິມານການເກັບກູ້ ໃນແຕ່ ລະ ປີ ຕ້ອງບໍ່ເກີນປະລິມານການເພີ່ມຂຶ້ນຂອງຜະລິດ |

| | |
|---|---|
| | ຕະພັນເຄື່ອງປ່າ ຂອງດົງ ຕາມທີ່ໄດ້ກຳ ນົດໄວ້ໃນແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ; |
| | 4.7.3. ເຄື່ອງປ່າຂອງດົງ ວຽກງານການເກັບກູ້ເຄື່ອງປ່າຂອງດົງ ຈາກປ່າທຳມະຊາດ; ຕ້ອງວາງແຜນຄຸ້ມຄອງປ່າໄມ້ແບບຍືນຍົງ, ແຜນຈັດຕັ້ງປະຕິບັດປະຈຳປີ ແລະ ຕ້ອງມີລະບຽບການສະເພາະ, ລວມທັງມາດຕະການຄວບຄຸມ ທີ່ກ່ຽວຂ້ອງ:<br>- ລະດູເກັບກູ້ ເພື່ອໃຫ້ໄດ້ຜົນສູງສຸດ ໃນການນຳໃຊ້;<br>- ພື້ນທີ່ອະນຸຍາດ ເພື່ອກິດຈະກຳການຂຸດຄົ້ນ;<br>- ຊະນິດ ທີ່ເກັບກູ້ ບໍ່ໄດ້ຢູ່ໃນບັນຊີລາຍຊື່ຊະນິດທີ່ຈະໄດ້ຮັບການປົກປັກຮັກສາ;<br>- ຈຳນວນຄັ້ງ ແລະ ປະລິມານ ການຂຸດຄົ້ນ ບໍ່ເກີນກຳລັງການຜະລິດຂອງປ່າ;ປະຊາກອນຂອງເຄື່ອງປ່າຂອງດົງ ທີ່ມີເປົ້າໝາຍຈະຖືກ ຮັກສາໄວ້ໃນໄລຍະຍາວ;<br>- ເຕັກນິກການຂຸດຄົ້ນ ຕ້ອງຈຳກັດສະເພາະບາງສ່ວນຂອງເຄື່ອງປ່າຂອງດົງ ເພື່ອຮັກສາຜົນຜະລິດ ແລະ ຄຸນນະພາບຜະລິດຕະພັນ ທີ່ດີ ທີ່ສຸດ;<br>- ເຕັກນິກການຂຸດຄົ້ນ ຕ້ອງສົ່ງຜົນກະທົບໜ້ອຍທີ່ສຸດຕໍ່ຊະນິດພັນອື່ນ ໃນພື້ນທີ່, ສົ່ງຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ. |
| 4.8. ເຈົ້າຂອງປ່າໄມ້ ຕ້ອງສ້າງ ແລະ ບຳ ລຸງສ້າງພື້ນຖານໂຄງລ່າງດ້ານເຕັກນິກໃຫ້ສອດຄ່ອງກັບເປົ້າໝາຍຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ. | 4.8.1. ເຄື່ອງປ່າຂອງດົງ ຕ້ອງມີແຜນ ແລະ ດຳເນີນ ກິດຈະກຳກໍ່ສ້າງ ແລະ ບຳລຸງສ້າງພື້ນຖານໂຄງລ່າງ ເຊັ່ນ ຖະໜົນຫົນທາງ, ຂົວ ແລະ ທາງລາກໄມ້, ເຂດຕັດໄມ້ຕາມລະບຽບການຂອງປ່າໄມ້; ໂຄງສ້າງພື້ນຖານ ທັງໝົດຈະຖືກສະແດງ ຢູ່ໃນແຜນທີ່ (ຍົກເວັ້ນເຈົ້າຂອງປ່າໄມ້ ທີ່ເປັນຄົວ ເຮືອນ, ບຸກຄົນ ແລະ ຊຸມຊົນ); |
| | 4.8.2. ເຄື່ອງປ່າຂອງດົງ: ຕ້ອງຮັບຮູ້ວ່າ ທຸກກິດຈະກຳ ກ່ຽວກັບການກໍ່ສ້າງ, ການບຳລຸງຮັກສາ ແລະ ການດຳເນີນ ກໍ່ສ້າງໂຄງລ່າງພື້ນຖານ ສາລັບການເກັບກູ້ເຄື່ອງປ່າຂອງດົງຈະຕ້ອງບໍ່ສ້າງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ. |

| ຫຼັກການ 5: ການ ຄຸ້ມຄອງ ແລະ ປົກປັກຮັກສາ ສິ່ງແວດລ້ອມໃນກິດຈະກຳປ່າໄມ້ | |
|---|---|
| 5.1. ເຈົ້າຂອງປ່າໄມ້ ຕ້ອງດຳເນີນການປະເມີນກິດຈະກຳປ່າໄມ້ ສິ່ງຜົນກະທົບຂອງກິດຕໍ່ກັບສິ່ງແວດລ້ອມ. | 5.1.1. ເຄື່ອງປ່າຂອງດົງ ຕ້ອງປະເມີນຜົນກະທົບທາງລົບທີ່ອາດເກີດຂຶ້ນໃນການ ຄຸ້ມຄອງ, ຂຸດຄົ້ນ ແລະ ການນຳໃຊ້ເຄື່ອງປ່າຂອງດົງ ຕໍ່ສິ່ງແວດລ້ອມ; ປະເມີນຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ ຂອງກິດຈະ ກຳປ່າໄມ້ຕໍ່ ເຄື່ອງປ່າຂອງດົງ; |
| | 5.1.2. ເຄື່ອງປ່າຂອງດົງ ຕ້ອງມີແຜນການ ແລະ ປະຕິບັດມາດຕະການຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມກ່ອນການປະຕິບັດວຽກງານຄຸ້ມຄອງ, ຂຸດຄົ້ນ ແລະ ນຳໃຊ້ ເຄື່ອງປ່າຂອງດົງ; ຕ້ອງມີແຜນການ ແລະ ຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຫຼຸດຜ່ອນ ຜົນກະທົບ ທາງລົບ ຂອງວຽກງານປ່າໄມ້ຕໍ່ເຄື່ອງປ່າຂອງດົງ; |
| | 5.1.3. ເຄື່ອງປ່າຂອງດົງ: ຕ້ອງມີແຜນການ ແລະ ປະຕິບັດມາດຕະການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ນຳໃຊ້ ຊັບພະຍາກອນຢ່າງມີປະສິດທິຜົນໃນການຄຸ້ມຄອງ, ຂຸດຄົ້ນ ແລະ ນຳໃຊ້ເຄື່ອງປ່າຂອງ ດົງ. |
| 5.2. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດມາດຕະການປົກປັກຮັກສາ ດິນ ແລະ ແຫຼ່ງນ້ຳ ໃນໄລຍະການປະຕິບັດກິດຈະກຳປ່າໄມ້. | 5.2.1. ເຄື່ອງປ່າຂອງດົງ ຕ້ອງກຳນົດເຂດປ້ອງກັນ ດິນ ແລະ ນ້ຳ ເຊັ່ນ ເຂດປ້ອງກັນ ແມ່ນ້ຳ, ສາຍນ້ຳ, ຫ້ວຍຮ່ອງ, ດິນບໍລິເວນນ້ຳ, ເຂດຄ້ອຍຊັນ, ແລະ ເຂດຜະລິດກະສິກຳ ຢູ່ໃນແຜນທີ່ ແລະ ສະຖານທີ່ຄຸ້ມຄອງ ເຄື່ອງປ່າຂອງດົງ; |
| | 5.2.2. ເຄື່ອງປ່າຂອງດົງ: ຕ້ອງມີແຜນການ ແລະ ຈັດຕັ້ງປະຕິບັດມາດຕະການປົກປັກຮັກສາ ແລະ ຟື້ນຟູພັນພືດໃນພື້ນທີ່ທີ່ໄດ້ກຳນົດໄວ້ ເພື່ອເຮັດໜ້າທີ່ປົກປັກຮັກສາ ດິນ ແລະ ແຫຼ່ງນ້ຳ ໃນເຂດຄຸ້ມຄອງ ເຄື່ອງປ່າຂອງດົງ; |
| | 5.2.3. ເຄື່ອງປ່າຂອງດົງ: ກຳນົດຜົນກະທົບທາງລົບທີ່ອາດຈະເກີດຂຶ້ນໃນກິດຈະກຳປ່າໄມ້ຕໍ່ຊັບພະຍາກອນ ດິນ ແລະ ແຫຼ່ງນ້ຳ ໃນຂົງເຂດ ຄຸ້ມຄອງຜະລິດຕະພັນເຄື່ອງປ່າຂອງດົງ; |
| | 5.2.4. ເຄື່ອງປ່າຂອງດົງ: ຕ້ອງ ມີແຜນການ ແລະ ປະຕິບັດມາດຕະການຫຼຸດຜ່ອນຜົນກະທົບທາງລົບຈາກກິດຈະກຳປ່າໄມ້ |

| | |
|---|---|
| | ຕໍ່ຊັບພະຍາກອນ ດິນ ແລະ ແຫຼ່ງນ້ຳ ໃນເຂດຄຸ້ມຄອງເຄື່ອງປ່າຂອງດົງ; |
| 5.4. ເຈົ້າຂອງປ່າໄມ້ ຕ້ອງຄວບຄຸມສິ່ງເສດເຫຼືອທີ່ເປັນອັນຕະລາຍ ໃຫ້ມີຄວາມປອດໄພຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງປະຊາຊົນ. | 5.4.1. ເຄື່ອງປ່າຂອງດົງ ຕ້ອງຈຳກັດສິ່ງເສດເຫຼືອທີ່ເປັນອັນຕະລາຍຈາກກິດຈະກຳການ ຄຸ້ມຄອງ, ຂຸດຄົ້ນ, ຂົນສົ່ງ ແລະ ການນຳໃຊ້ເຄື່ອງປ່າຂອງດົງ. |
| **ຫຼັກການ 6: ການບຳລຸງຮັກສາ, ອະນຸລັກ ແລະ ເສີມຂະຫຍາຍ ດ້ານຊີວະນານາພັນ** | |
| 6.1. ເຈົ້າຂອງປ່າໄມ້ ຕ້ອງກຳນົດ ແລະ ປົກປັກຮັກສາພື້ນທີ່ປ່າໄມ້ທີ່ສຳຄັນທາງດ້ານນິເວດວິທະຍາ | 6.1.1. ເຄື່ອງປ່າຂອງດົງ ຕ້ອງກຳເນີນການສຳຫຼວດປ່າໄມ້, ສ້າງແຜນທີ່ປ່າໄມ້ ແລະ ການພັດທະນາຖານຂໍ້ມູນ ແລະ ປຶກສາຫາລື ກັບຜູ້ມີສ່ວນກ່ຽວຂ້ອງກັບປ່າໄມ້ທີ່ມີຄວາມສຳຄັນດ້ານນິເວດວິທະຍາໃນຂົງເຂດຄຸ້ມຄອງເຄື່ອງປ່າຂອງດົງ, ລວມມີ:<br>ກ) ລະບົບນິເວດປ່າໄມ້ທີ່ເປັນເອກະລັກ, ຫາຍາກ ແລະ ມີຄວາມສ່ຽງ ຫຼື ລະບົບນິເວດປ່າໄມ້ທົ່ວໄປ ເຊັ່ນ ເຂດປາກແມ່ນ້ຳ, ທີ່ດິນບໍລິເວນນ້ຳ, ແລະ ປ່າຫີນປູນ;<br>ຂ) ພື້ນທີ່ປ່າໄມ້ທີ່ມີຊະນິດພັນພືດສະເພາະຖິ່ນ ແລະ ທີ່ຢູ່ອາໄສ ທີ່ຖືກ ຂຸກຄາມ;<br>ຄ) ຊັບພະຍາກອນພັນທຸກຳ ແມ່ນມີຄວາມສ່ຽງ ແລະ ຕ້ອງໄດ້ຮັບການ ປົກປ້ອງ;<br>ງ) ເຂດພູມິທັດທີ່ມີຄວາມສຳຄັນໃນລະດັບ ຊາດ ແລະ ສາກົນ; |
| | 6.1.2. ເຄື່ອງປ່າຂອງດົງ ຕ້ອງມີແຜນການປົກປັກຮັກສາ ແລະ ອານຸລັກປ່າໄມ້ທີ່ມີຄວາມສຳຄັນທາງດ້ານນິເວດວິທະຍາໃນເຂດຄຸ້ມຄອງ ເຄື່ອງປ່າຂອງດົງ ແລະ ຖືກບັນຈຸເຂົ້າໃນແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ; |
| | 6.1.3. ເຄື່ອງປ່າຂອງດົງ ຕ້ອງມີແຜນການຕິດຕາມກວດກາ ແລະ ປະເມີນຜົນ ການປົກປັກຮັກສາ ແລະ ອານຸລັກ ປ່າທຳມະຊາດ ທີ່ມີຄວາມສຳຄັນທາງດ້ານລະບົບ ນິເວດໃນເຂດຄຸ້ມຄອງຜະລິດຕະພັນເຄື່ອງປ່າຂອງດົງ. |
| | 6.2.1. ເຄື່ອງປ່າຂອງດົງ ຕ້ອງປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງບັນຊີລາຍຊື່ ແລະ ແຜນທີ່ການກະຈາຍພັນ, |

| | |
|---|---|
| 6.2. ເຈົ້າຂອງປ່າໄມ້ ຕ້ອງມີແຜນການ ແລະ ດໍາເນີນກິດຈະກໍາປົກປັກຮັກສາ ພືດ ແລະ ສັດປ່າ ຕາມກົດໝາຍຂອງ ສປປ ລາວ ແລະ ສາກົນ. | ກໍານົດທີ່ຢູ່ອາໄສໃນແຜນທີ່, ເກັບກໍາຂໍ້ມູນ ກ່ຽວກັບຊະນິດເຄື່ອງປ່າຂອງດົງ ຕ້ອງໄດ້ຮັບການປົກປັກຮັກສາຕາມກົດໝາຍ ສປປ ລາວ ແລະ ສາກົນ; |
| | 6.2.2. ເຄື່ອງປ່າຂອງດົງ ໂຄສະນາເຜີຍແຜ່ ແລະ ປະຕິບັດບັນດາມາດຕະການປົກປັກຮັກສາຊະນິດພັນເຄື່ອງປ່າຂອງດົງທີ່ຕ້ອງການການປົກປັກຮັກສາ ແລະ ທີ່ຢູ່ອາໄສ; |
| | 6.2.3. ເຄື່ອງປ່າຂອງດົງ ຕ້ອງປັບປຸງຂໍ້ມູນ ແລະ ເກັບຮັກສາຂໍ້ມູນບັນທຶກ ກ່ຽວກັບຊະນິດພັນ ເຄື່ອງປ່າຂອງດົງ ທີ່ຕ້ອງໄດ້ຮັບການປົກປ້ອງ; |
| | 6.2.4. ເຄື່ອງປ່າຂອງດົງ ຕ້ອງມີມາດຕະການປ້ອງກັນ ແລະ ຕິດຕາມກວດກາການເຄື່ອນໄຫວລ່າສັດປ່າ ແລະ ຂຸດຄົ້ນເຄື່ອງປ່າຂອງດົງທີ່ຜິດກົດໝາຍ. |
| 6.3. ເຈົ້າຂອງປ່າໄມ້ ຕ້ອງປົກປັກຮັກສາ, ອະນຸລັກພື້ນທີ່ປ່າທີ່ມີຄວາມສໍາຄັນດ້ານນິເວດຕາມລະບຽບກົດໝາຍຂອງ ສປປ ລາວ ແລະ ສາກົນ. | 6.3.1. ເຄື່ອງປ່າຂອງດົງ ຕ້ອງມີ ແລະ ໂຄສະນາເຜີຍແຜ່ ມາດຕະການ ປົກປັກຮັກສາ ແລະ ອານຸລັກປ່າໄມ້ທີ່ມີຄວາມສໍາຄັນທາງດ້ານນິເວດວິທະຍາ ໃນເຂດຄຸ້ມຄອງເຄື່ອງປ່າຂອງດົງ; |
| | 6.3.2. ເຄື່ອງປ່າຂອງດົງ ຕ້ອງປັບປຸງ ແລະ ເກັບຮັກສາ ຂໍ້ມູນ ແລະ ໄຟລ໌ ຂອງເຂດປ່າໄມ້ທີ່ມີຄວາມສໍາຄັນທາງດ້ານ ນິເວດວິທະຍາ ໃນການຄຸ້ມຄອງເຄື່ອງປ່າຂອງດົງ; |
| | 6.3.3. ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ກ່ຽວກັບການປົກປ້ອງ ແລະ ອະນຸລັກປ່າສະຫງວນ ທີ່ມີຄວາມສໍາຄັນທາງດ້ານນິເວດວິທະຍາ ໃນເຂດຄຸ້ມຄອງເຄື່ອງປ່າຂອງດົງ ໃຫ້ຖືກຕ້ອງຕາມກົດໝາຍ. |
| 6.4. ເຈົ້າຂອງປ່າໄມ້ ຕ້ອງມີມາດຕະການປົກປັກຮັກສາ ແລະ ເສີມຂະຫຍາຍຄຸນຄ່ານິເວດ ແລະ ຊີວະນານາພັນປ່າໄມ້. | 6.4.3. ເຄື່ອງປ່າຂອງດົງ ຫ້າມນໍາໃຊ້ແນວພັນທີ່ດັດແປງພັນທຸກໍາ ເພື່ອນໍາໃຊ້ເຂົ້າໃນການປູກເຄື່ອງປ່າຂອງດົງ. ແຕ່ສາມາດ ນໍາໃຊ້ໄດ້ ໃນກໍລະນີທີ່ມີຂໍ້ມູນທາງວິທະຍາສາດພຽງພໍ ກ່ຽວກັບແນວພັນໄມ້ທີ່ດັດແປງພັນທຸກໍາ ທີ່ສະແດງໃຫ້ເຫັນວ່າມີຜົນກະທົບທາງບວກຕໍ່ສຸຂະພາບຂອງຄົນ, ສັດ ແລະ |

| | |
|---|---|
| | ສິ່ງແວດ ລ້ອມແມ່ນເທົ່າທຽມ ຫຼື ຫຼາຍກວ່າແນວພັນໄມ້ທີ່ຖືກສ້າງຂຶ້ນໂດຍວິທີ ການປັບປຸງພັນແບບດັ້ງເດີມ; |
| | 6.4.4. ເຄື່ອງປ່າຂອງດົງ: ຕ້ອງປະຕິບັດມາດຕະການສະເພາະ ແລະ ມີຂໍ້ຕົກລົງກັບຊຸມຊົນທ້ອງຖິ່ນ ເພື່ອຫຼຸດຜ່ອນຜົນກະທົບທາງ ລົບຂອງການລ້ຽງສັດ (ງົວ, ຄວາຍ) ຕໍ່ການຂະຫຍາຍຕົວ ແລະ ຄວາມຫຼາກຫຼາຍທາງຊີວະນາມພັນໃນເຂດຄຸ້ມຄອງເຄື່ອງປ່າຂອງດົງ. |
| **ຫຼັກການ 7: ການຕິດຕາມ ແລະ ກວດກາ ປ່າໄມ້ ຕາມແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ** | |
| 7.1. ເຈົ້າຂອງປ່າໄມ້ ຕ້ອງສ້າງແຜນການຕິດຕາມ ກວດກາ ແລະ ປະເມີນຜົນການເຄື່ອນໄຫວປ່າໄມ້. | 7.1.1. ເຄື່ອງປ່າຂອງດົງ ກຳນົດຕົວຊີ້ວັດການຕິດຕາມ ແລະ ປະເມີນຜົນ; ກຳນົດຄວາມຄືບໜ້າ ແລະ ແຫຼ່ງທຶນໃນການປະຕິບັດການຕິດຕາມ ແລະ ປະເມີນຜົນ ປະຈຳປີ ເພື່ອຄຸ້ມຄອງເຄື່ອງປ່າຂອງດົງ. |
| 7.2. ເຈົ້າຂອງປ່າໄມ້ ຕ້ອງປະຕິບັດແຜນການຕິດຕາມ ແລະ ປະເມີນຜົນສຳລັບກິດຈະກຳປ່າໄມ້. | 7.2.1. ເຄື່ອງປ່າຂອງດົງ ຕ້ອງມີຂໍ້ມູນປະຈຳປີ ລວມມີ: ບໍລິມາດການເກັບກູ້ປະຈຳປີ, ການປ່ຽນແປງຂອງພື້ນທີ່ປ່າໄມ້ ແລະ ການຂະຫຍາຍຕົວຂອງຊະນິດພັນເຄື່ອງປ່າຂອງດົງ; |
| | 7.2.3. ເຄື່ອງປ່າຂອງດົງ ຕ້ອງມີຂໍ້ມູນ ແລະ ບົດລາຍງານກ່ຽວກັບການປົກປັກຮັກສາ ຫຼື ອະນຸລັກ ປ່າໄມ້ທີ່ສຳຄັນທາງລະບົບນິເວດ ແລະ ຊະນິດທີ່ຖືກຂຸກຄາມໃນເຂດຄຸ້ມຄອງເຄື່ອງປ່າຂອງດົງ; |
| | 7.2.5. ເຄື່ອງປ່າຂອງດົງ ຕ້ອງຕິດຕາມຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ກ່ຽວກັບການປູກ ແລະ ການຈັດສັນໃນເຂດຄຸ້ມຄອງເຄື່ອງປ່າຂອງດົງ; |
| | 7.2.6. ເຄື່ອງປ່າຂອງດົງ ຕ້ອງມີຂໍ້ມູນຕົ້ນທຶນປະຈຳປີ ແລະ ຜົນປະໂຫຍດກ່ຽວກັບກ ິດຈະກຳການຄຸ້ມຄອງເຄື່ອງປ່າຂອງດົງ. |
| 7.3. ເຈົ້າຂອງປ່າໄມ້ ຕ້ອງມີລະບົບຄຸ້ມຄອງ ແລະ ເກັບຮັກສາເອກະສານ ແລະ ໄຟລ໌ ທີ່ກ່ຽວຂ້ອງກັບທຸລະກິດປ່າໄມ້. | 7.3.1. ເຄື່ອງປ່າຂອງດົງ ຕ້ອງມີລະບົບການຄຸ້ມຄອງເອກະສານ ແລະ ຂໍ້ມູນ ຊັບພະຍາກອນປ່າໄມ້ ລວມທັງເຄື່ອງປ່າຂອງດົງ ແລະ ແຜນທີ່ສະຖານະພາບປ່າໄມ້; |

| | |
|---|---|
| | 7.3.2. ເຄື່ອງປ່າຂອງດົງ ຕ້ອງມີລະບົບການຄຸ້ມຄອງເອກະສານ ແລະ ຂໍ້ມູນ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ການຂຸດຄົ້ນເຄື່ອງປ່າຂອງດົງ; |
| | 7.3.3. ເຄື່ອງປ່າຂອງດົງ ຕ້ອງມີ ລະບົບການຄຸ້ມຄອງເອກະສານ/ເອກະສານຂອງເຄື່ອງປ່າຂອງດົງ ລວມທັງທຸກຂັ້ນຕອນຈາກການ ຂຸດຄົ້ນ, ຂົນສົ່ງ, ປຸງແຕ່ງ (ຖ້າມີ) ແລະ ການຂາຍຜະລິດຕະພັນ ເພື່ອຮັບປະກັນການກວດກາຄືນຂອງຜະລິດຕະພັນປ່າໄມ້ຕາມຂໍ້ກຳນົດຂອງກົດໝາຍ ວ່າດ້ວຍປ່າໄມ້; ເອກະສານ ປະກອບມີ ຊື່ສາມັນ ແລະ ຊື່ວິທະຍາສາດຂອງຊະນິດພັນ, ຊື່ຜະລິດຕະພັນ, ບໍລິມາດຜະລິດຕະພັນ ແລະ ເວລາຂອງການ ຂຸດຄົ້ນ ແລະ ການປຸງແຕ່ງ, ຂໍ້ມູນ ກ່ຽວກັບການຕິດຕາມຂອງເຄື່ອງປ່າຂອງດົງ. |

## II. ຂໍ້ກຳນົດຂອງ LFCS ST 1003:2025 ບໍ່ໄດ້ຖືກນຳໃຊ້ກັບການຄຸ້ມຄອງເຄື່ອງປ່າຂອງດົງ.

| ເຄື່ອງປ່າຂອງດົງ ພາຍໃຕ້ ປະເພດປ່າໄມ້ | ບໍ່ສາມາດໃຊ້ໄດ້ກັບ | ເຫດຜົນ |
|---|---|---|
| ເຄື່ອງປ່າຂອງດົງ ທີ່ມີແຫຼ່ງທີ່ມາຈາກປ່າປູກ | ຕົວຊີ້ວັດ 1.4.1 | ເນື່ອງຈາກວ່າລະບົບການຮັບປະກັນທາງດ້ານ**ກົດໝາຍ ຂອງໄມ້ໄດ້**ກຳນົດສະເພາະສຳລັບຜະລິດຕະພັນໄມ້ |
| | ຕົວຊີ້ວັດ 7.2.2; 7.2.3 | ໃຊ້ໄດ້ກັບປ່າທຳມະຊາດເທົ່ານັ້ນ |

| | | |
|---|---|---|
| ເຄື່ອງປ່າຂອງດົງ ຈາກເຂດ ປ່າທຳມະຊາດ | ຕົວຊີ້ວັດ 1.4.1 | ເນື່ອງຈາກວ່າລະບົບການຮັບປະກັນທາງດ້ານກົດໝາຍ ຂອງໄມ້ໄດ້ກຳນົດສະເພາະສຳລັບຜະລິດຕະພັນໄມ້ |
| | ຕົວຊີ້ວັດ 7.2.1 | ໃຊ້ໄດ້ກັບປ່າທຳມະຊາດເທົ່ານັ້ນ |

## ເອກະສານຊ້ອນທ້າຍ 2: ຄຳສັບ-ນິຍາມ ແລະ ຂໍ້ແນະນຳ ແບບຄຳກິລິຍາ

### 2.1. ຄຳສັບ ແລະ ນິຍາມ

| ຄຳສັບ | ນິຍາມ | ແຫຼ່ງຂໍ້ມູນ |
|---|---|---|
| ປ່າໄມ້ | ປ່າໄມ້ ແມ່ນຊັບພະຍາກອນ ອັນລ້ຳຄ່າຂອງຊາດ ທີ່ມີລະບົບນິເວດສະເພາະ ຊຶ່ງປະກອບດ້ວຍຊີວະນາໆພັນ, ແຫຼ່ງນ້ຳ ແລະ ທີ່ດິນ ໂດຍມີຕົ້ນໄມ້ນາໆຊະນິດທີ່ເກີດຂຶ້ນ ຕາມທຳມະຊາດ ຫຼື ປູກຂຶ້ນ ໃນເນື້ອທີ່ແຕ່ສູນຈຸດຫ້າ (0.5 ເຮັກຕາ) ແລະ ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ແຕ່ຊາວສ່ວນຮ້ອຍ (20%) ຂຶ້ນໄປ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ປ່າສະຫງວນ | ແມ່ນປ່າໄມ້ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການອະນຸລັກທຳມະຊາດ, ປົກປັກຮັກສາ ແລະ ຂະຫຍາຍພັນພືດ, ພັນສັດນ້ຳ ແລະ ສັດປ່າ ນາໆຊະນິດ, ລະບົບນິເວດປ່າໄມ້ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າທາງດ້ານ ທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ.<br>ປ່າສະຫງວນທີ່ມີຄວາມອຸດົມສົມບູນທາງດ້ານລະບົບນິເວດ ແລະ ມີເອກະລັກສະເພາະທາງດ້ານທິວທັດທຳມະຊາດ ແລະ ຄວາມໂດດເດັ່ນໃນລະດັບຊາດ, ພາກພື້ນ ແລະ ລະດັບໂລກ ອາດຈະສະເໜີເປັນເຂດ ອະນຸລັກພັນສັດປ່າ, ເຂດອຸທິຍານແຫ່ງຊາດ, ມໍລະດົກພາກພື້ນ ຫຼື ມໍລະດົກໂລກ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ປ່າປ້ອງກັນ | ແມ່ນປ່າໄມ້ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການຮັກສາແຫຼ່ງນ້ຳ, ແຄມນ້ຳ, ແຄມທາງ, ປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບດິນ, ເຂດຍຸດທະສາດ ເພື່ອປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |

| | | |
|---|---|---|
| ປ່າຜະລິດ | ແມ່ນປ່າໄມ້ທຳມະຊາດ ແລະ ປ່າປູກ ທີ່ໄດ້ກຳນົດເປັນສະໜອງໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງການ ພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ປ່າປູກ/ການປູກໄມ້ | ໝາຍເຖິງປ່າທີ່ເກີດຈາກການນຳເອົາແກ່ນໄມ້ໄປຫວ່ານ, ເອົາເບ້ຍໄມ້ ທີ່ໄດ້ຈາກປ່າທຳມະຊາດ ແລະ ເຫງົ້າໄມ້ ຫຼື ເບ້ຍໄມ້ຈາກສວນກ້າໄປປູກໃສ່ທີ່ດິນຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ທີ່ດິນຂອງລັດທີ່ລັດໄດ້ຈັດສັນໃຫ້. | ດຳລັດ ວ່າດ້ວຍການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ລົງວັນທີ 20 ສິງຫາ 2019 |
| ໄມ້ປູກ | ໝາຍເຖິງຕົ້ນໄມ້ທຸກຊະນິດທີ່ໄດ້ປູກຂຶ້ນເປັນລະບົບ ຫຼື ປູກແບບກະແຈກກະຈາຍ. | ດຳລັດ ວ່າດ້ວຍການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ລົງວັນທີ 20 ສິງຫາ 2019 |
| ປ່າປູກປະສົມ | ການປູກຕົ້ນໄມ້ແບບປະສົມປະກອບດ້ວຍສອງຊະນິດ ຫຼື ຫຼາຍກວ່ານັ້ນຢູ່ໃນພື້ນທີ່ດຽວກັນ. | ດຳລັດ ວ່າດ້ວຍການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ລົງວັນທີ 20 ສິງຫາ 2019 |
| ປ່າ/ຕົ້ນໄມ້ ທຳມະຊາດ | ໝາຍເຖິງຕົ້ນໄມ້ທີ່ເກີດຂຶ້ນຕາມທຳມະຊາດໃນຕົວເມືອງ, ແຄມທາງ, ສວນສາທາລະນະ, ດິນນາ, ດິນສວນ, ດິນປຸກສ້າງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລັດ ໄດ້ມອບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ. | ຄຳແນະນຳ ກ່ຽວກັບການຍັ້ງຢືນ ແລະ ການຕັດຕົ້ນໄມ້ທຳມະຊາດ ແລະ ໄມ້ປູກໃຫ້ໝາກທີ່ມີໃນທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເລກທີ 3684/ກປ, ລົງວັນທີ 16 ສິງຫາ 2022 |
| ການດຳເນີນງານທາງດ້ານປ່າໄມ້/ ກິດຈະການປ່າໄມ້ | ໝາຍເຖິງການດຳເນີນກິດຈະກຳ ໃດໜຶ່ງ ຫຼື ຫຼາຍກິດຈະກຳ ກ່ຽວກັບການຄຸ້ມຄອງ ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ການປຸງແຕ່ງຜະລິດຕະພັນປ່າໄມ້ ແລະ ການຄ້າໄມ້. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ວຽກງານພັດທະນາປ່າໄມ້ | ແມ່ນເປັນໂຄງການພັດທະນາກະສິກຳ ແລະ ປ່າໄມ້, ປະກອບດ້ວຍການຈັດຕັ້ງປະຕິບັດບັນດາກິດຈະກຳການລົງທຶນທາງດ້ານການພັດທະນາປ່າໄມ້ ໂດຍອີງຕາມການອອກແບບ ແລະ ການຄາດຄະເນຕົ້ນທຶນ ເຊິ່ງລວມມີ: ການປູກ, ການ | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |

| | | |
|---|---|---|
| | ບົວລະບັດຮັກສາ ແລະ ການປົກປັກຮັກສາປ່າ; ການແບ່ງເຂດເພື່ອການຟື້ນຟູທໍາມະຊາດ, ແບ່ງເຂດເພື່ອການຟື້ນຟູດ້ວຍການປູກເສີມ; ການຟື້ນຟູແຫຼ່ງທີ່ຢູ່ອາໄສ ແລະ ກິດຈະກໍາອື່ນໆທີ່ກ່ຽວຂ້ອງ. | |
| ເຈົ້າຂອງປ່າໄມ້ | 1. ຂະແໜງການກະສິກໍາ ແລະ ປ່າໄມ້ທີ່ລັດໄດ້ມອບປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ປົກປັກຮັກສາ ແລະ ພັດທະນາ;<br>2. ທຸກພາກສ່ວນເສດຖະກິດ ທີ່ລັດໃຫ້ເຊົ່າ ຫຼື ສໍາປະທານ ທີ່ດິນປ່າໄມ້ ຫຼື ຮັບຮູ້ສິດນໍາໃຊ້, ກໍາ ມະສິດກ່ຽວກັບປ່າປູກ ລວມທັງການໂອນສິດ ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າປູກ;<br>3. ຄອບຄົວ ທີ່ລັດໃຫ້ເຊົ່າທີ່ດິນປ່າໄມ້ ຫຼື ຮັບຮູ້ສິດນໍາໃຊ້, ກໍາມະສິດ ກ່ຽວກັບປ່າປູກລວມທັງການໂອນສິດ ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າປູກ;<br>4. ກົມກອງກໍາລັງປະກອບອາວຸດ ທີ່ລັດໄດ້ມອບທີ່ດິນປ່າໄມ້ໃຫ້ປົກປັກຮັກສາ ແລະ ພັດທະນາ;<br>5. ສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດ, ສູນຝຶກອົບຮົມ ແລະ ພັດທະນາສີມືແຮງງານ ກ່ຽວກັບປ່າໄມ້ ທີ່ລັດໄດ້ມອບປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ປົກປັກຮັກສາ ແລະ ພັດທະນາ;<br>6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ລັດໄດ້ມອບໃຫ້ປົກປັກຮັກສາ ແລະ ພັດທະນາ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019; ມາດຕາ 117 |
| ການຄຸ້ມຄອງພື້ນທີ່ໃນປ່າປູກໄມ້ | ການຄຸ້ມຄອງພື້ນທີ່ໃນສວນປູກໄມ້ ແມ່ນກິດຈະກໍາດ້ານອານະວັດ ໃນການຄຸ້ມຄອງສວນປູກເພື່ອຮັກສາອົງປະກອບ ແລະ ຜົນຜະລິດໃຫ້ພຽງພໍ. ໃນດ້ານກິດຈະກໍາການຄຸ້ມຄອງສວນປູກ, ການຄຸ້ມຄອງສະຖານ/ພື້ນທີ່ໝາຍເຖິງການຄຸ້ມຄອງຄວາມອຸດົມສົມບູນຂອງດິນ, ລວມທັງມາດຕະການດ້ານວິຊາການກ່ຽວກັບພືດທີ່ຈະແຈ້ງກ່ອນການປູກ, ການຄຸ້ມຄອງອິນຊີວັດຖຸຫຼັງການເກັບກ່ຽວ, ດິນກະກຽມດິນ, ການດູແລ ແລະເຕັກນິກການຄຸ້ມຄອງທາດອາຫານເພື່ອຕອບສະໜອງ | Nambiar, S. E. K. & Brown, A. G. (eds) 1997. ການຄຸ້ມຄອງດິນ, ທາດອາຫານ ແລະ ນໍ້າໃນປ່າປູກເຂດຮ້ອນ. ACIAR (ສູນອົດສະຕຣາລີສໍາລັບການຄົ້ນຄວ້າກະສິກໍາສາກົນ ສະບັບເລກທີ 43. 571pp |

| | | |
|---|---|---|
| | ຄວາມຕ້ອງການຂອງຕົ້ນໄມ້. ກິດຈະກຳເຫຼົ່ານີ້ແມ່ນເພື່ອຮັກສາ ແລະ ປັບປຸງຄວາມອຸດົມສົມບູນຂອງດິນ ແລະ ຜົນຜະລິດປ່າໄມ້ໂດຍຜ່ານທຸລະກິດແບບໝູນວຽນ. | |
| ການຄຸ້ມຄອງປ່າໄມ້ແບບຍືນຍົງ | ເປັນວິທີການຄຸ້ມຄອງປ່າໄມ້ທີ່ຮັບປະກັນໃຫ້ບັນລຸເປົ້າໝາຍການປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ເສີມຂະຫຍາຍຄຸນຄ່າຂອງປ່າໄມ້, ປັບປຸງຊີວິດການເປັນຢູ່, ປົກປັກຮັກສາສິ່ງແວດລ້ອມ ແລະ ປະກອບສ່ວນຮັກສາຄວາມສະຫງົບແຫ່ງຊາດ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ວະນະວັດວິທະຍາ | ແມ່ນມາດຕະການທາງເຕັກນິກວິທະຍາການ ເພື່ອຄວບຄຸມການປູກໄມ້, ການຈະເລີນເຕີບໂຕ, ອົງປະກອບ, ສຸຂະນາໄມ ແລະ ຄຸນນະພາບຂອງປ່າໄມ້ ແລະ ດິນປ່າໄມ້ ເພື່ອຕອບສະໜອງຄວາມຕ້ອງການ ແລະ ຄຸນຄ່າອັນຫຼາກຫຼາຍຂອງເຈົ້າຂອງທີ່ດິນ ແລະ ສັງຄົມບົນພື້ນຖານຄວາມຍືນຍົງ,<br><br>ວະນະວັດວິທະຍາ ປະກອບດ້ວຍ:<br>ກ) ການຂະຫຍາຍພັນໄມ້;<br>ຂ) ການປູກໄມ້;<br>ຄ) ການບຳລຸງຮັກສາ, ເສີມຂະຫຍາຍປ່າໄມ້ ແລະ ຄຸ້ມຄອງປ່າໄມ້ ຮັບປະກັນທາງປະລິມານ ແລະ ຄຸນນະພາບໄມ້;<br>ງ) ຟື້ນຟູປ່າທຳມະຊາດ;<br>ຈ) ການຂຸດຄົ້ນໄມ້. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 (ມາດຕາ).<br><br>AGROVOC Multilingual Thesaurus: Silviculture (FAO, 2022) |
| ຜະລິດຕະພັນປ່າໄມ້ ແລະ ເຄື່ອງປ່າຂອງດົງ | ໝາຍເຖິງໄມ້ ແລະ ເຄື່ອງປ່າຂອງດົງ ທີ່ໄດ້ນຳເຂົ້າຜ່ານຂະບວນການປຸງແຕ່ງ ຊຶ່ງເຮັດໃຫ້ປ່ຽນຈາກສະພາບເດີມມາເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ດ້ວຍການນຳເຄື່ອງຈັກ ແລະ ແຮງງານຄົນ | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |

| | | |
|---|---|---|
| ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງ | ໝາຍເຖິງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຂຸດຄົ້ນ, ເຄື່ອນຍ້າຍ, ນຳເຂົ້າ, ປຸງແຕ່ງ, ຊື້-ຂາຍ ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ສິດຕາມປະເພນີ | ແມ່ນບັນດາສິດທິ ແລະ ພັນທະຂອງບຸກຄົນ, ກຸ່ມຄົນ ຫຼື ຄອບຄົວ ທີ່ເກີດຂຶ້ນຕາມຮີດຄອງປະເພນີທີ່ສືບທອດກັນຢ່າງຕໍ່ເນື່ອງຍາວນານ ແລະ ໄດ້ກາຍເປັນວິຖີຊີວິດ ແລະ ລະບຽບແບບແຜນຂອງສັງຄົມໃດໜຶ່ງ. | ດຳລັດ ວ່າດ້ວຍ ວຽກງານຊົນເຜົ່າ ເລກທີ 207/ລບ, ລົງວັນທີ 20 ມີນາ 2020;<br>ກົດໝາຍວ່າດ້ວຍທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 |
| ສິດນຳໃຊ້ທີ່ດິນຂອງບຸກຄົນ | ໝາຍເຖິງ ສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ ຊຶ່ງມີໃບຕາດິນຖືກຕ້ອງຕາມກົດໝາຍ. | ກົດໝາຍວ່າດ້ວຍທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 |
| ໃບຢັ້ງຢືນການນຳໃຊ້ທີ່ດິນ | ໝາຍເຖິງ ເອກະສານທີ່ຢັ້ງຢືນສິດນຳໃຊ້ທີ່ດິນ ຊຶ່ງອົງການທີ່ກ່ຽວຂ້ອງຂອງລັດ ອອກໃຫ້ພົນລະເມືອງລາວ ຕາມນະໂຍບາຍຈັດສັນ ເພື່ອເປັນບ່ອນຢູ່ອາໃສ ແລະ ທຳການຜະລິດ. | ກົດໝາຍວ່າດ້ວຍທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 |
| ຂໍ້ຂັດແຍ່ງກ່ຽວກັບທີ່ດິນ | ແມ່ນບັນຫາກ່ຽວກັບການນຳໃຊ້ທີ່ດິນໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງຕາມເປົ້າໝາຍ, ບໍ່ນຳໃຊ້ທີ່ດິນຕາມກຳນົດເວລາພາຍຫຼັງທີ່ໄດ້ຮັບມອບ, ບໍ່ເສຍອາກອນ, ຄ່າທຳນຽມການນຳໃຊ້ທີ່ດິນ, ເຂດແດນ ແລະ ບັນຫາທີ່ດິນອື່ນໆ ທີ່ມີລັກສະນະບໍລິຫານຕາມກົດໝາຍ. | ກົດໝາຍວ່າດ້ວຍທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 |
| ກຳມະສິດກ່ຽວກັບປ່າໄມ້ ແລະ ທີ່ດິນປ່າ | – ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍໃຫ້ອົງການຈັດຕັ້ງ ແລະ ປະຊາຊົນທຸກຄົນມີສ່ວນຮ່ວມໃນການບູລະນະ, ປົກປັກຮັກສາ ແລະ ນຳໃຊ້ຕາມກົດໝາຍ; | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019; ມາດຕາ 4 |

| | | |
|---|---|---|
| | – ປ່າໄມ້ ແລະ ໄມ້ປູກ ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງລວມທັງຜູ້ລົງທຶນປູກຕາມເຂດທີ່ໄດ້ຈັດສັນໃຫ້ດ້ວຍເຫື່ອແຮງ ຫຼື ທຶນຮອນຂອງຕົນ ໂດຍການຮັບຮູ້ຈາກອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນກໍາມະສິດຜູ້ປູກ ຫຼື ຜູ້ລົງທຶນ;<br>– ຕົ້ນໄມ້ທໍາມະຊາດ ທີ່ມີໃນດິນກະສິກໍາ, ດິນປູກສ້າງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນໍາໃຊ້ທີ່ດິນຕາມກົດໝາຍ ເປັນກໍາມະສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ. ສໍາລັບຕົ້ນໄມ້ທີ່ເກີດຂຶ້ນຕາມທໍາມະຊາດ ຫຼື ປູກໃນດິນສາທາລະນະເປັນກໍາມະສິດຂອງລັດ. | |
| ສິດຂອງນໍາໃຊ້ປ່າປູກ ແລະ ທີ່ດິນປ່າປູກ | ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນໍາໃຊ້ປ່າປູກ ແລະ ທີ່ດິນປ່າປູກ ມີສິດຄຸ້ມຄອງ ແລະ ປົກປັກຮັກສາ, ນໍາໃຊ້, ໄດ້ຮັບໝາກຜົນ, ໂອນສິດນໍາໃຊ້ ແລະ ສືບທອດສິດນໍາໃຊ້. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ສິດໃນການນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ | ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດນໍາໃຊ້ປ່າໄມ້, ທີ່ດິນປ່າໄມ້, ຄ່າບໍລິການດ້ານລະບົບນິເວດປ່າໄມ້ ແລະ ຄຸນຄ່າອື່ນໆຂອງປ່າໄມ້ໃນເຂດທີ່ລັດຈັດສັນໃຫ້ ເພື່ອດໍາເນີນກິດຈະການຕາມກົດໝາຍ | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ການຫັນປ່ຽນທີ່ດິນປ່າໄມ້ | ໝາຍເຖິງ ການຫັນປ່ຽນຈາກປະເພດທີ່ດິນປ່າໄມ້ໄປເປັນທີ່ດິນປະເພດອື່ນ ແລະ ຈຸດປະສົງອື່ນ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ການຫັນປ່ຽນປ່າໄມ້ | ແມ່ນການປ່ຽນແປງພື້ນທີ່ປ່າທີ່ເກີດຈາກມະນຸດໂດຍກົງໄປສູ່ພື້ນທີ່ທີ່ບໍ່ແມ່ນປ່າ ຫຼື ການປູກປ່າ. | PEFC ST 1003:2018 |
| ໃບຢັ້ງຢືນການຄຸ້ມຄອງປ່າໄມ້ແບບຍືນຍົງ | ແມ່ນເອກະສານທີ່ຮັບຮູ້ເຖິງເງື່ອນໄຂທີ່ເໝາະສົມກັບພື້ນທີ່ປ່າໄມ້ໃນການຄຸ້ມຄອງປ່າໄມ້ແບບຍືນຍົງ. | ຍັງບໍ່ທັນລະບຸໃນກົດໝາຍປ່າໄມ້ |
| ຂໍ້ຫ້າມຕໍ່ກິດຈະກໍາປ່າໄມ້ | ປະກອບດ້ວຍ:<br>– ດໍາເນີນການ ຫຼື ເຂົ້າຮ່ວມການດໍາເນີນທຸລະກິດກ່ຽວກັບການຂຸດຄົ້ນ, ຊື້ຂາຍໄມ້ ແລະ ຜະລິດຕະພັນໄມ້; | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |

| | | |
|---|---|---|
| | – ອະນຸຍາດໃຫ້ຫັນປ່ຽນປະເພດປ່າໄມ້ ຫຼື ທີ່ດິນປ່າໄມ້, ໃຫ້ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ລວມທັງ ການເອົາໄມ້ແລກປ່ຽນກັບໂຄງການ;<br>– ສະເໜີ ຫຼື ອະນຸຍາດເກັບກູ້, ທ້ອນໂຮມໄມ້ກິ່ງງ່າ, ໄມ້ທ່ອນ ຫຼື ອະນຸຍາດໃຫ້ເອົາໄມ້ແກ້ໄຂນະໂຍບາຍແກ່ບຸກຄົນໃດໜຶ່ງ;<br>– ອອກອະນຸຍາດໃຫ້ຕັດໄມ້ ຫຼື ເກັບກູ້ເຄື່ອງປ່າຂອງດົງ (ສຳລັບອົງການຈັດຕັ້ງອື່ນ)<br>– ອະນຸຍາດ ຫຼື ອຳນວຍຄວາມສະດວກໃຫ້ການສົ່ງອອກໄມ້ ຫຼື ເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;<br>– ຍ້າຍ, ປ່ຽນແປງ ຫຼື ທຳລາຍເຄື່ອງໝາຍເຂດແດນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;<br>– ດຳເນີນການສຳຫລວດປ່າໄມ້ ແລະ ຊັບພະ ຍາກອນປ່າໄມ້, ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ;<br>– ສ້າງຕັ້ງໂຮງສອຍ, ໂຮງເລື່ອຍ, ໂຮງເຟີນີເຈີ ແລະ ໂຮງງານອຸດສະຫະກຳປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ;<br>– ເຂົ້າໄປປຸກສ້າງ ຫຼື ຕັ້ງຖິ່ນຖານດຳລົງຊີວິດ ແລະ ທຳການຜະລິດ ໃນໄລຍະເວລາຊົ່ວຄາວ ຫຼື ຖາວອນຢູ່ໃນເຂດປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ;<br>– ທຳລາຍປ່າໄມ້ ດ້ວຍການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ ການບຸກເບີກ, ຖາກຖາງ-ຕັດປ່າໄມ້, ຈູດປ່າ, ມີໄມ້ໄວ້ໃນຄອບຄອງ, ການເຮັດໃຫ້ໄມ້ ຫຼື ນຳໃຊ້ສານເຄມີ ໃຫ້ຕົ້ນໄມ້ຕາຍ ຫຼື ດ້ວຍການກະທຳອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ;<br>– ຈັບຈອງຕົ້ນໄມ້, ປ່າໄມ້ ຫຼື ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້, ຕັດໄມ້ທົດແທນແຜນການ | |

| | | |
|---|---|---|
| | ຂຸດຄົ້ນໄມ້ຂອງສົກປີຜ່ານມາ ແລະ ຕັດໄມ້ກ່ອນໄດ້ຮັບອະນຸຍາດ;<br>– ຂຸດຄົ້ນ, ເຄື່ອນຍ້າຍເບ້ຍໄມ້ ຫຼື ຕົ້ນໄມ້ທຸກຊະນິດ ຈາກປ່າທຳມະຊາດ ລວມທັງໄມ້ຄ້ຳແບບ ຫຼື ໄມ້ທີ່ເປັນພະລັງງານ ໃນເຂດທີ່ບໍ່ໄດ້ຮັບອະນຸຍາດ;<br>– ບຸກເບີກປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດທີ່ບໍ່ອະນຸຍາດ;<br>– ຕັດ, ຊື້-ຂາຍ ແລະ ເຄື່ອນຍ້າຍ ຫຼື ເກັບກູ້ໄມ້ທຳມະຊາດ ປະເພດຫວງຫ້າມ ແລະ ໄມ້ທີ່ໃກ້ສູນພັນ ຕາມທີ່ໄດ້ກຳນົດໄວ້ໃນບັນຊີໄມ້ ທີ່ໄດ້ປັບປຸງແຕ່ລະໄລຍະ ໂດຍບໍ່ໄດ້ຮັບອະນຸຍາດຈາດລັດຖະບານ ເຊັ່ນ ໄມ້ດູ່ລາຍ, ໄມ້ຂະຍຸງ, ໄມ້ໝູນ, ໄມ້ປະດົງ, ໄມ້ຄຳພີ້, ໄມ້ໂລ່ງເລ່ງ, ໄມ້ຈຳປາປ່າ;<br>– ຕັດ, ຊື້-ຂາຍ ແລະ ເຄື່ອນຍ້າຍ ຫຼື ເກັບກູ້ໄມ້ ຫຼື ເຄື່ອງປ່າຂອງດົງ ທີ່ເປັນຢາ ຕາມບັນຊີ ທີ່ກະຊວງສາທາລະນະສຸກ ກຳນົດ;<br>– ຂຸດຄົ້ນ, ເກັບກູ້, ຊື້-ຂາຍເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;<br>– ຊື້-ຂາຍ ໄມ້ທີ່ລັດອະນຸຍາດໃຫ້ນຳໃຊ້ ເພື່ອສາທາລະນະປະໂຫຍດຂອງບ້ານ ແລະ ຄອບຄົວ;<br>– ເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ເກີນນ້ຳໜັກ, ເກີນຈຳນວນ, ເກີນຂະໜາດອະນຸຍາດ ແລະ ໃນໄລຍະເວລາທີ່ເກືອດຫ້າມ ຫຼື ບໍ່ຖືກກັບເອກະສານ;<br>– ນຳໄມ້ ຫຼື ເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມກົດໝາຍຈາກຕ່າງປະເທດຜ່ານມາ ເພື່ອສົ່ງອອກໄປປະເທດທີສາມ;<br>– ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຕາມທີ່ໄດ້ກຳນົດໄວ້ໃນບັນຊີຫ້າມສົ່ງອອກ ທີ່ລັດຖະບານໄດ້ກຳນົດໃນແຕ່ລະໄລຍະ ລວມ | |

| | | |
|---|---|---|
| | ທັງຖ່ານດຳທຸກປະເພດ ທີ່ປຸງແຕ່ງຈາກໄມ້ທຳມະຊາດ;<br>ສິ່ງອອກ ໄມ້ທ່ອນ, ໄມ້ຕິຕັບ, ໄມ້ແປຮູບ, ໄມ້ຊອຍ, ຮາກໄມ້ ຫຼື ເຫງົ້າໄມ້, ຕໍໄມ້, ປູດໄມ້, ງ່າໄມ້ ຫຼື ໄມ້ຢືນຕົ້ນ ຫຼື ໄມ້ປະດັບ ທີ່ຂຸດຄົ້ນຈາກປ່າທຳມະຊາດ. | |
| ເອະສານກ່ຽວກັບຜະລິດຕະພັນປ່າໄມ້ ແລະ ເຄື່ອງປ່າຂອງດົງ | ໝາຍເຖິງ ຂໍ້ມູນ ຂ່າວສານ ທີ່ບັນທຶກໃສ່ວັດຖຸທີ່ແຕກຕ່າງກັນດ້ວຍຫຼາຍຮູບແບບ ເຊັ່ນ ເປັນລັກອັກສອນ, ພາບ, ສຽງ ທີ່ກ່ຽວຂ້ອງກັບຜະລິດຕະພັນປ່າໄມ້ທີ່ເກັບຮັກສາໄວ້ໃນໂຮງງານ ແລະ ນຳໃຊ້ເພື່ອແນະນຳກ່ຽວກັບ ການຂາຍ, ສົ່ງອອກ, ນຳເຂົ້າ ການຂົນສົ່ງ, ການປຸງແຕ່ງ ຫຼື ການເກັບຮັກສາ ຫຼື ຜະລິດຕະພັນປ່າໄມ້. | ກົດໝາຍວ່າດ້ວຍເອກະສານ ເລກທີ 69/ສພຊ, ລົງວັນທີ 20 ມິຖຸນາ 2019<br>ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ການອະນຸລັກຊີວະນານາພັນ | ໝາຍເຖິງ ການອະນຸລັກ ແລະ ປົກປັກຮັກສາ ດ້ວຍການວາງນະໂຍບາຍ, ລະບຽບການ, ວິທີການ ແລະ ມາດຕະການ ເພື່ອສະກັດກັ້ນການບຸກລຸກ ແລະ ທຳລາຍຂອງມະນຸດ ຫຼື ຈາກໄພທຳມະຊາດ ແນໃສ່ຮັກສາຄວາມສົມດູນຂອງຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີຢູ່ໃນຂອງເຂດທຳມະຊາດໃດໜຶ່ງ ແບບຍືນຍົງ. | ກົດໝາຍ ວ່າດ້ວຍການປົກປັກສາສິ່ງແວດລ້ອມ (ສະບັບປັບປຸງ)ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012;<br>ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 (ມາດຕາ 3) |
| ຊະນິດພັນທ້ອງຖິ່ນ | ແມ່ນຊະນິດພັນ, ຊະນິດພັນຍ່ອຍ, ຫຼື ສິ່ງທີ່ມີຊີວິດໃນໝວດທີ່ຕໍ່າກວ່າ, ເກີດຂຶ້ນພາຍໃນຂອບເຂດທຳມະຊາດຂອງມັນ (ອະດີດ ຫຼື ປະຈຸບັນ) ແລະ ທ່າແຮງການກະຈາຍ (ເຊັ່ນ: ພາຍໃນຂອບເຂດທີ່ມັນຄອບຄອງຕາມທຳມະຊາດ ຫຼື ສາມາດຄອບຄອງໂດຍບໍ່ມີການແນະນຳ ຫຼື ການເບິ່ງແຍງໂດຍກົງ ຫຼື ທາງອ້ອມໂດຍມະນຸດ. | ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (CBD, 1992) |
| ຊະນິດພັນສະເພາະຖິ່ນ | ໝາຍເຖິງຊະນິດພັນທີ່ມີຢູ່ ແລະ ເຕີບໃຫຍ່ພຽງແຕ່ຢູ່ໃນຂອບເຂດວົງແຄບຂອງການແຜ່ກະຈາຍທີ່ຈຳກັດຢູ່ໃນເຂດແດນສະເພາະຂອງສປປ ລາວ ແລະ ການມີຢູ່ຂອງມັນບໍ່ໄດ້ຖືກລະບຸຢູ່ບ່ອນອື່ນໃນໂລກ. | ອົງການອາຫານ ແລະ ການກະເສດ, 2010 (http://www.fao.org/3/a-i1687e.pdf) |

| | | |
|---|---|---|
| ຊະນິດພັນທຳມະຊາດ | ຫມາຍເຖິງຊະນິດຂອງສັດ, ພືດ, ຈຸລິນຊີ ແລະເຊື້ອເຫັດທີ່ມີຊີວິດຢູ່ ແລະ ເຕີບໃຫຍ່ຕາມກົດເກນທຳມະຊາດ. | ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (CBD) https://www.cbd.int/invasive/terms |
| ຊະນິດພັນຕ່າງຖິ່ນ | ຫມາຍເຖິງຊະນິດພັນທີ່ປະກົດ ແລະ ເຕີບໃຫຍ່ຢູ່ໃນພື້ນທີ່ທີ່ບໍ່ແມ່ນທີ່ຢູ່ອາໄສທຳມະຊາດຂອງມັນ. | ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (CBD) https://www.cbd.int/invasive/terms |
| ຊະນິດພັນຕ່າງຖິ່ນຮຸກຮານ | ໝາຍເຖິງຊະນິດພັນຕ່າງຖິ່ນທີ່ເຂົ້າມາຮຸກຮານທີ່ຢູ່ອາໄສ ຫຼື ສ້າງຄວາມເສຍຫາຍຕໍ່ຊະນິດພັນພື້ນເມືອງ, ເຮັດໃຫ້ເກີດຄວາມບໍ່ສົມດຸນທາງລະບົບນິເວດໃນບໍລິເວນທີ່ມັນປະກົດ ແລະ ເຕີບໃຫຍ່. | ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (CBD) https://www.cbd.int/invasive/terms |
| ສັດປ່າທີ່ມີຄ່າ ແລະ ຫາຍາກໃກ້ຈະສູນພັນ ໄດ້ເປັນບູລິມະສິດໃນການປົກປັກຮັກສາ | ໝາຍເຖິງຊະນິດພັນທຳມະຊາດ, ພືດ ຫຼື ສັດ, ຈຸລິນຊີ ຫຼື ເຊື້ອເຫັດທີ່ເປັນຊະນິດພັນສະເພາະຖິ່ນ ແລະ ມີຄຸນຄ່າທາງວິທະຍາສາດ, ການແພດ, ເສດຖະກິດ, ນິເວດວິທະຍາ, ທັດສະນີຍະພາບ, ສິ່ງແວດລ້ອມ ຫຼື ວັດທະນະທຳ, ມີຈຳນວນໜ້ອຍ ຫຼື ມີຄວາມສ່ຽງຕໍ່ການສູນພັນ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;<br><br>ກົດໝາຍວ່າດ້ວຍ ສັດນໍ້າ ແລະ ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007 |
| ຊັບພະຍາກອນທາງພັນທຸກຳ | ໝາຍເຖິງຊັບພະນຍາກອນຕ່າງໆຂອງຊີວະນາໆພັນສາມາດຖ່າຍທອດລະຫັດດ້ານ ພັນທຸກຳ ທີ່ເປັນຄຸນລັກສະນະພື້ນຖານ ຂອງສິ່ງທີ່ມີຊີວິດ ຢູ່ໃນຂອບເຂດລະບົບ ນິເວດໃດໜຶ່ງ. | ກົດໝາຍວ່າດ້ວຍ ຄວາມປອດໄພດ້ານເຕັກໂນໂລຊີ ຊີວະພາບ ເລກທີ 39/ສພຊ, ລົງວັນທີ 18 ທັນວາ 2013 |
| ການດັດແປງ/ປຸງແຕ່ງພັນທຸກຳຂອງສິ່ງທີ່ມີຊີວິດ | ໝາຍເຖິງ ສິ່ງມີຊີວິດທີ່ເກີດຈາກການຕັດຕໍ່, ສ້າງຄຸນລັກສະນະດ້ານພັນທຸກຳອັນໃໝ່ ດ້ວຍການນຳໃຊ້ເຕັກນິກ ແລະ ການເຊື່ອມຕໍຂອງຈຸລັງໃນສາຍພັນດຽວກັນ. | ກົດໝາຍ ວ່າດ້ວຍ ຄວາມປອດໄພດ້ານເຕັກໂນໂລຊີ ຊີວະພາບ, ເລກທີ 39/ສພຊ ວັນທີ 18 ທັນວາ 2013 |
| ສະພາບພື້ນທີ່ | ແມ່ນທີ່ຢູ່ອາໄສຂອງຊະນິດພັນ ຫຼື ເຂດລວມພັນພືດ ທີ່ໄດ້ຮັບອິດທິພົນຂອງປັດໃຈພາຍນອກ, ລວມມີສະພາບອາກາດ, ພູມສັນຖານ, ດິນ, ພືດ ແລະ ສັດ. | ຄູ່ມືການວິເຄາະເຂດນິເວດກະສິກຳ ຂອງສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ປີ 2005 |
| ແຫຼ່ງທີ່ຢູ່ອາໄສ | ໝາຍເຖິງສະຖານທີ່ ຫຼື ປະເພດຂອງສະຖານທີ່ ທີ່ສິ່ງມີຊີວິດ ຫຼື ປະຊາກອນເກີດຂຶ້ນຕາມທຳມະຊາດ. | IUCN |

| | | |
|---|---|---|
| ເຂດອະນຸລັກທຳມະຊາດ | ໝາຍເຖິງພື້ນທີ່ທາງພູມສາດທີ່ກຳນົດຂອບເຂດ ແລະ ພາກສ່ວນທີ່ມີປະໂຫຍດຕໍ່ການອະນຸລັກຊີວະນາໆພັນ. | ກົດໝາຍວ່າດ້ວຍການປົກປັກຮັກສາປ້ອງສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012 |
| ລະບົບນິເວດ | ຫມາຍເຖິງສາຍພົວພັນຊຶ່ງກັນ ແລະ ກັນ ທັງທາງບອກ ແລະ ທາງລົບ ລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງທີ່ບໍ່ມີຊີວິດທີ່ຄົງຕົວຢູ່ຕາມທຳມະຊາດ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019<br>ກົດໝາຍວ່າດ້ວຍການປົກປັກຮັກສາປ້ອງສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012 |
| ພື້ນທີ່ປ່າໄມ້ທີ່ສຳຄັນທາງດ້ານນິເວດວິທະຍາ | ປະກອບດ້ວຍ:<br>- ລະບົບນິເວດປ່າສະຫງວນ, ຫາຍາກ, ມີຄວາມສ່ຽງ/ອ່ອນໄຫວ;<br>- ຊະນິດພັນທ້ອງຖິ່ນ ແລະ ທີ່ຢູ່ອາໄສຂອງຊະນິດພັນທີ່ຖືກຄຸກຄາມ, ຕາມທີ່ກຳນົດໄວ້ໃນບັນຊີສັດປ່າ ແລະ ພັນພືດ;<br>- ພັນທຸກຳທີ່ໃກ້ຈະສູນພັນ ຫຼື ຫວງຫ້າມຢູ່ໃນແຫຼ່ງຊັບພະຍາກອນ;<br>- ບັນດາພູມສັນຖານຂະໜາດໃຫຍ່ຂອງທົ່ວໂລກ, ໃນພາກພື້ນ ແລະ ລະດັບຊາດ;<br><br>- ການແຜ່ກະຈາຍ ແລະ ຄວາມອຸດົມສົມບູນຂອງຊະນິດທີ່ເກີດຂຶ້ນຕາມທຳມະຊາດ. | PEFC ST 1003:2018 |
| ສິ່ງແວດລ້ອມທຳມະຊາດ | ໝາຍເຖິງ ທຸກສິ່ງທຸກຢ່າງ ຫຼື ອົງປະກອບສິ່ງແວດລ້ອມ ທີ່ເກີດຕາມທຳມະຊາດ ຊຶ່ງມີສາຍກ່ຽວພັນ ແລະ ສົ່ງຜົນສະທ້ອນຊຶ່ງກັນ ແລະ ກັນທັງທາງບອກ ແລະ ທາງລົບ ຕໍ່ການດຳລົງຊີວິດ, ການຜະລິດ, ການຄົງຕົວ ແລະ ການຂະຫຍາຍຕົວຂອງມະນຸດ ແລະ ທຳມະຊາດ. | ກົດໝາຍວ່າດ້ວຍການປົກປັກຮັກສາປ້ອງສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012 |
| ການບໍລິການດ້ານລະບົບນິເວດປ່າໄມ້ | ໝາຍເຖິງ ຂະບວນການໃຫ້ບໍລິການຂອງປ່າໄມ້ ໂດຍທາງກົງດ້ວຍການຕອບສະໜອງໄມ້, ເຄື່ອງປ່າຂອງດົງ, ອາຫານ ແລະ ທີ່ຢູ່ອາໄສຂອງສັດ ແລະ ທາງອ້ອມດ້ວຍການປົກປັກຮັກສາແຫຼ່ງນໍ້າ, ສິ່ງແວດລ້ອມປ່າໄມ້, ສັດນໍ້າ, ສັດປ່າ, ການດູດຊັບ | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |

| | | |
|---|---|---|
| | ແລະ ການເກັບກັກມອນທາດກາກບອນປ່າ ໄມ້, ການທ່ອງທ່ຽວແບບອະນຸລັກ, ການສຶກສາຄົ້ນຄວ້າ ແລະ ອື່ນໆ. | |
| ການຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້ | ໝາຍເຖິງການປະຕິບັດພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮັບການບໍລິການດ້ານລະບົບນິເວດປ່າໄມ້ ຊຶ່ງອາດເປັນວັດຖຸ, ເງິນ ຫຼື ອື່ນໆ ເພື່ອນໍາໃຊ້ເຂົ້າໃນການຄຸ້ມຄອງ ປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ. | ກົດໝາຍວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 |
| ທີ່ດິນບໍລິເວນນໍ້າ | ແມ່ນທີ່ດິນທີ່ຢູ່ພື້ນນໍ້າ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນໍ້າ ຊຶ່ງນອນຢູ່ໃນແຄມນໍ້າ, ທີ່ດິນກາງນໍ້າ, ທີ່ດິນປົ່ງໃໝ່, ທີ່ດິນນໍ້າບົກປະ ຫຼື ກຸດ, ທີ່ດິນທີ່ເກີດຈາກການດັດແປງ ຫຼື ອວ່າຍແລວນໍ້າ, ນໍ້າຊັງ ຫຼື ໄຫຼຜ່ານ ທີ່ເກີດຂຶ້ນໂດຍທໍາມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີລັກສະນະຖາວອນ ຫຼື ຊົ່ວຄາວ. | ກົດໝາຍວ່າດ້ວຍທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 |
| ຄວາມປອດໄພ ແລະ ສຸຂະພາບແຮງງານ | ໝາຍເຖິງກິດຈະກໍາຮ່ວມລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ທີ່ມີມາດຕະການທີ່ເໝາະສົມເພື່ອຫຼຸດຜ່ອນໄພອັນຕະລາຍ ແລະ ຄວາມສ່ຽງ , ວິທີປ້ອງກັນອຸປະຕິເຫດແຮງງານ, ປ້ອງກັນການບາດເຈັບ ແລະ ປ້ອງກັນບໍ່ໃຫ້ເກີດພະຍາດອາຊີບ ແລະ ການສ້າງໃຫ້ເປັນວັດທະນະທໍາຄວາມປອດໄພໃນສະຖານທີ່ເຮັດວຽກເທື່ອລະກ້າວ. | ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013; ມາດຕາ 117 |
| ສັນຍາແຮງງານ | ແມ່ນການຕົກລົງ ລະຫວ່າງຜູ້ອອກແຮງງານ ກັບ ຜູ້ໃຊ້ແຮງງານ ຫຼື ຜູ້ຕາງໜ້າຜູ້ອອກແຮງງານ ກັບ ຜູ້ຕາງໜ້າຜູ້ໃຊ້ແຮງງານ ກ່ຽວກັບເງື່ອນໄຂການເຮັດວຽກ, ເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ ແລະ ນະໂຍບາຍອື່ນ. | ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 |
| ການບັງຄັບໃຊ້ແຮງງານ | ໝາຍເຖິງການໃຊ້ກໍາລັງ ຫຼື ການຂົ່ມຂູ່ທີ່ຈະໃຊ້ກໍາລັງ ຫຼື ການກະທໍາທີ່ມີລັກສະນະຄ້າຍຄືກັນເພື່ອບັງຄັບໃຫ້ບຸກຄົນເຮັດວຽກຕາມຄວາມປະສົງຂອງຕົນ. | ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013; ມາດຕາ 117 |

| | | |
|---|---|---|
| ຜູ້ອອກແຮງງານ | ໝາຍເຖິງ ບຸກຄົນ ທີ່ມີອາຍຸ ແຕ່ 14 ປີ ຫາ 60 ປີ ສາມາດເຮັດວຽກໄດ້, ເຮັດວຽກຕາມສັນຍາແຮງງານ, ຮັບເງິນເດືອນ ລວມທັງຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສັນຍາແຮງງານ. | ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 |
| ຜູ້ໃຊ້ແຮງງານ/ຜູ້ຈ້າງງານ | ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ນຳໃຊ້ຜູ້ອອກແຮງງານເຮັດວຽກໃຫ້ຕົນ ໂດຍຕ້ອງຈ່າຍຄ່າແຮງງານ ຫຼື ເງິນເດືອນ ລວມທັງຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສັນຍາແຮງງານ. | ກົດໝາຍ ວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 |
| ຜູ້ຮັບເໝົາ | ຜູ້ຮັບເໝົາແມ່ນອົງການ, ນິຕິບຸກຄົນ ແລະ ບຸກຄົນ ທີ່ມີຄວາມສາມາດໃນການປະຕິບັດວຽກງານກໍ່ສ້າງ ໃຫ້ແກ່ນັກລົງທຶນ ຫຼື ເຈົ້າຂອງໂຄງການ. | ກົດໝາຍ ວ່າດ້ວຍການກໍ່ສ້າງ ເລກທີ 05/ສພຊ, ລົງວັນທີ 26 ພະຈິກ 2009 |
| ຜູ້ມີສ່ວນກ່ຽວຂ້ອງ | ໝາຍເຖິງ ບຸກຄົນ, ກຸ່ມຄົນ, ຊຸມຊົນ ຫຼື ອົງການຈັດຕັ້ງ ທີ່ມີສ່ວນໄດ້ສ່ວນເສຍກັບກ່ຽວກັບມາດຕະຖານ. | ມາດຕະຖານ PEFC ST 1003: 2018 |
| ສົນທິສັນຍາ | ແມ່ນການຕົກລົງເປັນລາຍລັກອັກສອນ ທີ່ສ້າງຂຶ້ນໃນນາມ ສປປ ລາວ ຫຼື ໃນນາມລັດຖະບານ ແຫ່ງ ສປປ ລາວ ທີ່ພາຄີຕ່າງປະເທດ ຊຶ່ງພາໃຫ້ເກີດສິດ ແລະ ພັນທະຂອງ ສປປ ລາວ ຕາມກົດໝາຍສາກົນ ໂດຍໃສ່ຊື່ສະເພາະ ຕາມການເຫັນດີລະຫວ່າງຝ່າຍລາວ ແລະ ພາຄີຕ່າງປະເທດ ເປັນຕົ້ນ ສົນທິສັນຍາ, ສັນຍາ, ກົດບັດ, ຂໍ້ຕົກລົງ, ອະນຸສັນຍາ, ບົດບັນທຶກຄວາມເຂົ້າໃຈ, ບົດບັນທຶກການຮ່ວມມື, ຈົດໝາຍແລກປ່ຽນ ຫຼື ຊື່ອື່ນໆ. | ກົດໝາຍວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ ເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017 |
| ແນວທາງການປະຕິບັດ | ແນວທາງການປະຕິບັດ ໝາຍເຖິງກົດລະບຽບການຈັດຕັ້ງປະຕິບັດເພື່ອກຳນົດສິດ ແລະ ພັນທະຂອງບຸກຄົນໃນການພົວພັນພົນລະເຮືອນ, ສ້າງຂຶ້ນ ແລະ ເຮັດຊ້ຳກັນເປັນເວລາດົນນານ, ຖືກຮັບຮູ້ | ປະມວນກົດໝາຍແພ່ງ |

| | | |
|---|---|---|
| | ແລະ ນຳໃຊ້ໂດຍທົ່ວໄປໃນພາກພື້ນ, ເຊື້ອຊາດ, ຫຼື ຊຸມຊົນ ຫຼື ຂົງເຂດພົນລະເຮືອນ;<br>ໃນກໍລະນີທີ່ກົດໝາຍບໍ່ໄດ້ກຳນົດໄວ້ ຫຼື ຕົກລົງກັນໂດຍຝ່າຍຕ່າງໆ, ອາດຈະມີການປະຕິບັດແຕ່ບໍ່ຕ້ອງຂັດຫຼັກການທີ່ໄດ້ລະບຸໄວ້ໃນມາດຕາ 3 ຂອງກົດໝາຍສະບັບນີ້. | |
| ມາດຕະການແກ້ໄຂ | ການກະທຳຂອງການກຳຈັດສາເຫດຂອງຄວາມບໍ່ສອດຄ່ອງ ແລະ ປ້ອງກັນການເກີດຄືນໃຫມ່ຊ້ຳອີກ. | ISO 9001:2015 |
| ຄວາມບໍ່ສອດຄ່ອງ | ແມ່ນການບໍ່ປະຕິບັດຕາມບັນດາຂໍ້ກຳນົດຕ່າງໆ. | ISO 9001:2015 |
| ການກໍ່ສ້າງໂຄ່ງລ່າງພື້ນຖານທາງດ້ານວິຊາການ | ປະກອບມີການຂົນສົ່ງ, ການສະໜອງນ້ຳ, ການລະບາຍນ້ຳ, ໄຟຟ້າ, ແສງສະຫວ່າງ, ໂທລະຄົມ, ການຄຸ້ມຄອງຂີ້ເຫຍື້ອ. | ກົດໝາຍວ່າດ້ວຍຊົນລະປະທານ ເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012.<br>ກົດໝາຍວ່າດ້ວຍການຂົນສົ່ງຫຼາຍຮູບແບບ ເລກທີ 28/ສພຊ, ລົງວັນທີ 18 ທັນວາ 2012 |
| ສານເຄມີ | ໝາຍເຖິງທາດດ່ຽວ, ທາດປະສົມ ແລະ ທາດສົມປົນ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງຄົງຕົວຢູ່ໃນພາວະແຂງ, ແຫຼວ ຫຼື ເປັນອາຍ. | ກົດໝາຍ ວ່າດ້ວຍ ການຄຸ້ມຄອງເຄມີເລກທີ 07/ສພຊ ລົງວັນທີ 10 ພະຈິກ 2016 |
| ສິ່ງເສດເຫຼືອ | ໝາຍເຖິງວັດຖຸ, ສານເຄມີ ຫຼື ສິ່ງໃດໜຶ່ງທີ່ບຸກຄົນ ຫຼື ນິຕິບຸກຄົນ ບໍ່ຕ້ອງການ ຫຼື ບໍ່ສາມາດນຳໃຊ້ໄດ້ອີກ ເຊັ່ນ ນ້ຳມັນປ່ຽນຖ່າຍ, ຂີ້ເຫຍື່ອ, ນ້ຳເປື້ອນ ແລະ ສິ່ງອື່ນໆ ທີ່ເປັນພິດ ຫຼື ບໍ່ເປັນພິດ. | ກົດໝາຍວ່າດ້ວຍການປົກປັກຮັກສາປ້ອງສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012 |
| ສິ່ງເສດເຫຼືອທີ່ເປັນອັນຕະລາຍ | ໝາຍເຖິງສິ່ງເສດເຫຼືອທີ່ສະແດງໃຫ້ເຫັນລັກສະນະອັນຕະລາຍອັນໜຶ່ງ ຫຼື ຫຼາຍກວ່ານັ້ນ ເຊັ່ນ ຄວາມເປັນພິດ, ປະຕິກິລິຍາ, ການຕິດເຊື້ອ, ການຕິດໄຟ, ການກັດກ່ອນ ຫຼື ລັກສະນະທີ່ເປັນພິດອື່ນໆ. | ກົດໝາຍວ່າດ້ວຍການປົກປັກຮັກສາປ້ອງສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012 |
| ສິ່ງເສດເຫຼືອທົ່ວໄປ | ໝາຍເຖິງສິ່ງເສດເຫຼືອໃນຮູບແບບຂອງແຂງ ຫຼື ເປັນທາດແຫຼວ. | ກົດໝາຍວ່າດ້ວຍການປົກປັກຮັກສາປ້ອງສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012 |

| | | |
|---|---|---|
| ການຄຸ້ມຄອງສິ່ງເສດເຫຼືອ | ໝາຍເຖິງ ການບໍລິຫານຈັດການສິ່ງເສດເຫຼືອໃຫ້ຖືກຕ້ອງຕາມຫຼັກວິທີການ ເຊັ່ນ ການເກັບຮັກສາ, ການບຳບັດ, ຈູດເຜົາ, ຝັງ ແລະ ການໝູນໃຊ້ຄືນໃໝ່ (ຜ່ານການຄັດແຍກ), ການໃຊ້ຊ້ຳ ແລະ ການນຳໃຊ້ມາແປຮູບຄືນໃໝ່ ລວມທັງຮັບປະກັນບໍ່ໃຫ້ຖິ້ມຊະຊາຍຕາມແຄມທາງ, ແຄມນ້ຳ ແລະ ສະຖານທີ່ຫວງຫ້າມອື່ນໆ. | ກົດໝາຍວ່າດ້ວຍການປົກປັກຮັກສາປ້ອງສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012 |
| ຝຸ່ນເຄມີ (Chemical fertilizer) | ໝາຍເຖິງຝຸ່ນທີ່ມີທາດອະນົງຄະທາດ (inorganic) ເປັນຕົ້ນແມ່ນ ໄນໂຕຼເຈນ (N), ຟອສເຟດ (P) ແລະ ໂຊຕັສຊຽມ (K) ເປັນຫຼັກ . | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ, ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 |
| ຝຸ່ນອົງຄະທາດ (Organic fertilizer) | ໝາຍເຖິງ ຝຸ່ນທີ່ປະກອບດ້ວຍການປະສົມ ວັດຖຸຕ່າງໆ ທີ່ໄດ້ຈາກເສດເຫຼືອຊາກພືດ, ຊາກສັດທີ່ຜ່ານຂະບວນການແປຮູບໃດໜຶ່ງ ແລະ ໂລຫະທາດຫຼາຍຊະນິດ. | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ, ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 |
| ຝຸ່ນຊີວະພາບ (Bio-fertilizer) | ໝາຍເຖິງ ຝຸ່ນທີ່ປູກລ້ຽງເຊື້ອຈຸລິນຊີບໍລິສຸດສະເພາະໃດໜຶ່ງ ປະສົມກັບອາຫານລ້ຽງເຊື້ອຊົ່ວຄາວທີ່ເໝາະສົມ (Carrier). | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ, ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 |
| ຝຸ່ນຊີວະອົງຄະທາດ (Bio-organic fertilizer) | ໝາຍເຖິງ ຝຸ່ນອົງຄະທາດ (ຝຸ່ນຄອກ/ຝຸ່ນບົ່ມ) ຊຶ່ງນອກຈາກຈະມີທາດອາຫານສຳ ລັບພືດເໝືອນກັບຝຸ່ນຄອກ, ຝຸ່ນບົ່ມແລ້ວ ຍັງມີຈຸລິນຊີທີ່ເປັນປະໂຫຍດ ທີ່ປູກລ້ຽງໃນປະລິມານກຳນົດທີ່ຮັບຮອງແນ່ນອນ. | ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຝຸ່ນໃນ ສປປ ລາວ, ເລກທີ 2169/ກປ, ລົງວັນທີ 24 ຕຸລາ 2013 |
| ຄອບຄົວ | ໝາຍເຖິງຈຸລັງໜຶ່ງຂອງສັງຄົມ ຊຶ່ງມີຜົວ, ເມຍ, ລູກ ຫຼື ສະມາຊິກອື່ນໃນຄອບຄົວທີ່ມີສາຍພົວພັນ ເຊິ່ງກັນ ແລະ ກັນ ແລະ ດຳລົງຊີວິດຮ່ວມກັນ ໂດຍມີສະມາໂນຄົວຢັ້ງຢືນຢ່າງຖືກຕ້ອງ. | ດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ເລກທີ 348/ລບ, ລົງວັນທີ 16 ພະຈິກ 2017 |
| ບ້ານ | ໝາຍເຖິງເຂດປົກຄອງທ້ອງຖິ່ນຂັ້ນຮາກຖານທີ່ຂຶ້ນກັບເມືອງ, ເທດສະບານ, ນະຄອນ. ບ້ານໜຶ່ງປະກອບດ້ວຍຫຼາຍຄອບຄົວ ມີເຂດນ້ຳແດນດິນທີ່ | ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 |

| | | |
|---|---|---|
| | ລັດໄດ້ມອບສິດໃຫ້ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາ. | |
| ກຸ່ມ | ໝາຍເຖິງການຈັດຕັ້ງລວມໝູ່ຂອງປະຊາຊົນລາວ ທີ່ມີອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານການຜະລິດ ແລະ ບໍລິການ. | ດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ເລກທີ 606/ລບ, ລົງວັນທີ 26 ພະຈິກ 2020 |
| ສະຫະກອນ | ໝາຍເຖິງ ການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ປະກອບອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ຫຼື ອາຊີບອື່ນ ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງທຶນຮອນ, ປະສົບການ ແລະ ເຕັກນິກໃນການດຳເນີນທຸລະກິດການຜະລິດ, ການຄ້າ ຫຼື ການບໍລິການ. | ດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ເລກທີ 606/ລບ, ລົງວັນທີ 26 ພະຈິກ 2020 |
| ຮີດຄອງປະເພນີ | - ຮີດ ໝາຍເຖິງ ງານບຸນ ຫຼື ພິທີກຳ ທີ່ໄດ້ຈັດຂຶ້ນໃນແຕ່ລະເດືອນ ໃນຮອບວຽນໜຶ່ງປີ;<br>- ຄອງ ໝາຍເຖິງ ໜ້າທີ່ແຕ່ລະຄົນໃນຄອບຄົວ ແລະ ບ້ານ ທີ່ໄດ້ປະຕິບັດສືບຕໍ່ກັນມາ;<br>- ປະເພນີ ໝາຍເຖິງ ລະບຽບແຜນ ການປະພຶດຂອງຄົນເຮົາ ທີ່ສືບສານກັນມາແຕ່ດຶກດຳບັນຈົນເຖິງປັດຈຸບັນ. | ດຳລັດ ວ່າດ້ວຍ ວຽກງານຊົນເຜົ່າ ເລກທີ 207/ລບ, ລົງວັນທີ 20 ມີນາ 2020 |
| ຊີວິດການເປັນຢູ່ | ຊີວິດການເປັນຢູ່ ປະກອບດ້ວຍຄວາມສາມາດ, ຊັບສິນ (ລວມທັງຊັບພະຍາກອນທາງດ້ານວັດຖຸ ແລະ ສັງຄົມ) ແລະ ສິ່ງທີ່ຈຳເປັນສຳລັບຊີວິດການເປັນຢູ່. ຊີວິດການເປັນຢູ່ ໝາຍເຖິງຄວາມຍືນຍົງ ເມື່ອສາມາດຮັບມືກັບ ແລະ ຟື້ນຕົວ ຈາກຄວາມເຄັ່ງຕຶງ ແລະ ຕົກໃຈ ແລະ ຮັກສາ ຫຼື ເສີມຂະຫຍາຍຄວາມສາມາດ ແລະ ຊັບສິນຂອງຕົນ ທັງໃນປັດຈຸບັນ ແລະ ອະນາຄົດ, ໃນຂະນະທີ່ບໍ່ສ້າງຄວາມເສຍຫາຍຕໍ່ແຫຼ່ງຊັບພະຍາກອນທຳມະຊາດ. | ແຜນງານສິ່ງແວດລ້ອມແຫ່ງສະຫະປະຊາຊາດ (UN Environment Program “UNEP”) |

| | | |
|---|---|---|
| ສາດສະໜາ | ສາດສະໜາແມ່ນ ແມ່ນຮູບຖານຈິດສຳນຶກສັງຄົມ ຫຼື ຫຼັກທຳ ຄຳສັ່ງສອນທີ່ສາສະດາຂອງແຕ່ລະສາສະໜາຄົ້ນຄວ້າ ແລະ ນຳມາສັ່ງສອນມະນຸດໃຫ້ເປັນຄົນດີ, ມີທີ່ຍຶດໝັ້ນທາງຈິດໃຈ, ມີຄວາມສາມັກຄີ, ມີບັນທັດຖານໃນການປະພຶດ, ປະຕິບັດ ແລະ ຢູ່ຮ່ວມກັນໂດຍສັນຕິ. | ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ, ເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 |
| ພູມປັນຍາຊາວບ້ານ | "ພູມປັນຍາຊາວບ້ານ ແມ່ນເປັນເອກະລັກສະເພາະຂອງວັດທະນະທຳ ແລະ ສັງຄົມໂດຍ. ເປັນພື້ນຖານການຕັດສິນໃຈຂອງທ້ອງຖິ່ນໃນຂົງເຂດກະສິກຳ, ສາທາລະນະສຸກ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການເຄື່ອນໄຫວອື່ນໆ. ພູມປັນຍາຊາວບ້ານ ຖືກຝັງຢູ່ໃນການປະຕິບັດຂອງຊຸມຊົນ, ສະຖາບັນ, ຄວາມສຳພັນ ແລະ ພິທີກຳ. ມັນເປັນຄວາມຮູ້ທີ່ຈຳເປັນທີ່ແລະ ບໍ່ແມ່ນເລື່ອງງ່າຍທີ່ຈະສາມາດເຂົ້າໃຈໄດ້". | ທະນາຄານໂລກ, 1998. ພູມປັນຍາຊາວບ້ານ ສຳລັບການພັດທະນາ: ກອບການດຳເນີນງານ |
| ການທ້ອນໂຮມເອກະສານປະຫວັດສາດ | ເອກະສານປະຫວັດສາດ ຫມາຍເຖິງ ເອກະສານທີ່ໄດ້ຜ່ານການເລືອກເຟັ້ນ ແລະ ກຳນົດຄຸນຄ່າ ຊຶ່ງມີຄຸນຄ່າທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ໄດ້ກຳເນີດເກີດຂຶ້ນ ໃນແຕ່ລະຍຸກ, ແຕ່ລະສະໄໝປະຫວັດສາດ ຂອງຊາດລາວ. ການທ້ອນໂຮມເອກະສານປະຫວັດສາດແມ່ນຂະບວນການເກັບກຳ, ລວບລວມ, ເກັບຮັກສາ ແລະ ປົກປັກຮັກສາເອກະສານປະຫວັດສາດ ແລະ ມີຄວາມໝາຍສຳຄັນລະດັບຊາດຂອງການຈັດຕັ້ງ, ນິຕິບຸກຄົນ, ວິລະບູລຸດ, ວິລະຊົນ, ນັກຮົບແຂ່ງຂັນຄອບຄົວ ແລະ ບຸກຄົນທີ່ມີຜົນງານດີເດັ່ນ ແລະ ມີຊື່ສຽງໃນແຕ່ລະຍຸກຂອງປະຫວັດສາດເຂົ້າມາປົກປັກຮັກສາໄວ້. | ກົດໝາຍ ວ່າດ້ວຍ ເອກະສານ ເລກທີ 69/ສພຊ, ລົງວັນທີ 20 ມິຖຸນາ 2019 |

2.2. ຂໍ້ແນະນຳແບບຄຳກິລິຍາທີ່ສະແດງອອກໃນການບັນຍັດມາດຕະຖານ

ຂໍ້ກຳນົດ ຂອງມາດຕະຖານການຄຸ້ມຄອງປ່າໄມ້ ແບບຍືນຍົງ ແມ່ນອີງໃສ່ ຂໍ້ກຳນົດ ຂອງຄຳສັ່ງ ISO/IEC, ພາກທີ 2, ຫຼັກການ ແລະ ກົດລະບຽບ ສຳລັບໂຄງສ້າງ ແລະ ການຮ່າງເອກະສານ ISO ແລະ IEC.

| **ການສະແດງອອກ** | **ແບບຄຳກິລິຍາທີ່ນິຍົມໃຊ້** | **ການຕີຄວາມໝາຍ** |
|---|---|---|
| ຂໍ້ກຳນົດ | "ຕ້ອງ", "ບໍ່ຕ້ອງ" | ທີ່ບົ່ງບອກເຖິງເກນການກວດສອບໄດ້ຢ່າງເປັນກາງທີ່ຈະຕ້ອງໄດ້ປະຕິບັດຕາມ ແລະ ບໍ່ອະນຸຍາດໃຫ້ມີການບ່ຽງເບນ ຫຼື ຫັນທິດ ຖ້າຈະອ້າງວ່າເປັນໄປຕາມເອກະສານ |
| ຄຳແນະນຳ | "ຄວນ", "ບໍ່ຄວນ" | ທີ່ບົ່ງບອກທາງເລືອກ ຫຼື ແນວທາງທີ່ເປັນໄປໄດ້ ທີ່ແນະນຳຊຶ່ງຖືວ່າມີຄວາມເໝາະສົມໂດຍບໍ່ຕ້ອງກ່າວເຖິງ ຫຼື ຍົກເວັ້ນສິ່ງອື່ນໃດຢ່າງແນ່ນອນ |
| ການອະນຸຍາດ | "ອາດຈະ", "ບໍ່ອາດຈະ" | ທີ່ບົ່ງບອກເຖິງຄວາມຍິນຍອມ ຫຼື ເສລີພາບ ຫຼື ໂອກາດ ທີ່ຈະເຮັດບາງສິ່ງບາງຢ່າງ |
| ຄວາມເປັນໄປໄດ້ | "ສາມາດ", "ບໍ່ສາມາດ" | ທີ່ບົ່ງບອກເຖິງສິ່ງທີ່ຄາດຫວັງ ຫຼື ເປັນໄປໄດ້, ຜົນໄດ້ຮັບທາງກາຍະພາບ ຫຼື ໃນເຊີງສາເຫດ |